ກອງປະຊຸມສະຫະປະຊາຊາດ ວ່າດ້ວຍການຄ້າ ແລະ ການພັດທະນາ

UNCTAD

# ການຈັດປະເພດຂອງມາດຕະການ ທາງດ້ານການຄ້າທີ່ບໍ່ແມ່ນພາສີສາກົນ

ສະບັບປີ 2012



UNITED NATIONS

ນິວຢອກ ແລະ ເຈນີວາ, 2015

# ສິ່ງທີ່ຄວນເອົາໃຈໃສ່

ການອອກແບບ ແລະ ການນຳສະເໜີ ຂອງເອກະສານສະບັບນີ້ ບໍ່ໄດ້ໝາຍເຖິງຂໍ້ຄິດເຫັນໃດໆ ໃນສ່ວນຂອງອົງການສະຫະປະຊາຊາດ ທີ່ພົວພັນເຖິງສະຖານະພາບທາງດ້ານກົດໝາຍຂອງ ປະເທດ, ອານາເຂດ, ເມືອງ ຫຼື ຂົງເຂດ ໃດໜຶ່ງ, ຫຼື ສະຖານະພາບທາງດ້ານກົດໝາຍຂອງ ອົງການຈັດຕັ້ງທີ່ມີສິດອຳນາດໃດໜຶ່ງ ຫຼື ພົວພັນເຖິງການກຳນົດເຂດແດນ ຫຼື ພົມແດນ.

ເອກະສານໃນສິ່ງພິມນີ້ ອາດຖືກອ້າງອີງ ຫຼື ຈັດພິມຄືນໃໝ່ ຢ່າງເສລີ, ແຕ່ຮຽກຮ້ອງໃຫ້ມີການຮັບຮູ້, ພ້ອມກັບສັດຕິດສຳເນົາຂອງສິ່ງພິມນີ້ ທີ່ລວມມີການອ້າງອີງ ຫຼື ການຈັດພິມຄືນໃໝ່ ໃຫ້ກອງເລຂາ UNCTAD ຕາມທີ່ຢູ່ລຸ່ມນີ້:

ຫົວໜ້າຂະແໜງການວິເຄາະດ້ານການຄ້າ
ພະແນກການຄ້າດ້ານສິນຄ້າ ແລະ ບໍລິການສາກົນ ແລະ ຜະລິດຕະພັນ
ກອງປະຊຸມສະຫະປະຊາຊາດ ວ່າດ້ວຍການຄ້າ ແລະ ການພັດທະນາ
Palais des Nations
CH-1211 ທີ່ ເຈນີວາ, ປະເທດສະວິດສະແລນ

This is a non-official translation from English.

UNCTAD/DITC/TAB/2012/2/Rev.1

ສິ່ງພິມຂອງອົງການສະຫະປະຊາຊາດ

© ສະຫງວນລິຂະສິດໂດຍ
ອົງການສະຫະປະຊາຊາດ 2015

## ຄຳເຫັນຂອງກົມການນຳເຂົ້າ ແລະ ສົ່ງອອກ

ການຈັດປະເພດມາດຕະການທາງດ້ານການຄ້າທີ່ບໍ່ແມ່ນພາສີ (NTMs) ແມ່ນເລື່ອງທີ່ຫຍຸ້ງຍາກຫຼາຍສົມຄວນ ເຊິ່ງຮຽກຮ້ອງໃຫ້ມີຄວາມເຂົ້າໃຈ ກ່ຽວກັບມາດຕະການຕ່າງໆ ທີ່ອົງການຂອງລັດຖະບານໄດ້ກຳນົດຂຶ້ນມາ ເພື່ອຕອບສະໜອງນະໂຍບາຍຂອງຕົນ ທີ່ສ່ວນຫຼາຍຈະປິ່ນອ້ອມນະໂຍບາຍສົ່ງເສີມການສົ່ງອອກ ແລະ ປົກປ້ອງການຜະລິດສິນຄ້າພາຍໃນຂອງຕົນ. ເຖິງຢ່າງໃດກໍ່ຕາມ, ສິ່ງສຳຄັນໃນການນຳໃຊ້ NTMs ທີ່ຫຼາຍປະເທດຍອມຮັບ ກໍ່ແມ່ນວ່າມາດຕະການທີ່ຖືກນຳໃຊ້ ຕ້ອງໃຫ້ມີຄວາມໂປ່ງໃສ ແລະ ມີເຫດຜົນພຽງພໍ. ເພື່ອໃຫ້ສາມາດເຂົ້າໃຈໄດ້ເຖິງມາດຕະການຕ່າງໆທີ່ບັນດາປະເທດນຳໃຊ້, ມັນຈຶ່ງມີຄວາມຈຳເປັນຕ້ອງໄດ້ຈັດປະເພດ NTMs ຢ່າງມີເຕັກນິກ ທີ່ເຕັມໄປດ້ວຍເຫດຜົນ ແລະ ເປັນທີ່ຍອມຮັບຂອງບັນດາປະເທດຄູ່ຄ້າ ຫຼື ເວົ້າອີກຢ່າງໜຶ່ງວ່າ ມາດຕະການທີ່ນຳໃຊ້ນັ້ນ ບໍ່ຄວນໃຫ້ກາຍເປັນອຸປະສັກຕໍ່ການຄ້າລະຫວ່າງປະເທດ.

ດັ່ງນັ້ນ, ອົງການ UNCTAD ແລະ ທີມງານຊ່ຽວຊານດ້ານການຄ້າສາກົນ ໄດ້ພະຍາຍາມອອກແບບວິທີຈັດປະເພດ NTMs ຈົນສຳເລັດໃນປີ 2012 ແລະ ການຈັດປະເພດ NTMs ດັ່ງກ່າວໄດ້ຖືກນຳໃຊ້ຢ່າງແຜ່ຫຼາຍ. ກົມການນຳເຂົ້າ ແລະ ສົ່ງອອກ ເຊິ່ງເປັນຈຸດປະສານງານວຽກງານ NTMs ໃນກອບຂອງການເຊື່ອມໂຍງເຂົ້າເປັນປະຊາຄົມເສດຖະກິດອາຊຽນ (AEC) ແລະ ອົງການການຄ້າໂລກ (WTO) ເຫັນໄດ້ເຖິງຄຸນປະໂຫຍດຂອງການຈັດປະເພດ NTMs ຂອງສາກົນ, ສະບັບປີ 2012 ຈຶ່ງໄດ້ຈັດຕັ້ງທີມງານໜຶ່ງຂຶ້ນ ເພື່ອຄົ້ນຄວ້າ ແລະ ແປປຶ້ມຈັດປະເພດ NTMs ຂອງອົງການ UNCTAD ໂດຍມີຈຸດປະສົງວ່າ ການແປເປັນພາສາລາວ ຈະຊ່ວຍໃຫ້ພະນັກງານວິຊາການຂອງລາວ ທີ່ສັງກັດຢູ່ກະຊວງອຸດສາຫະກຳ ແລະ ການຄ້າ ແລະ ກະຊວງຂະແໜງການອື່ນ, ຄູ-ອາຈານ ຕະຫຼອດເຖິງນັກຮຽນ-ນັກສຶກສາທີ່ສົນໃຈ ສາມາດເຂົ້າໃຈຢ່າງເລິກເຊິ່ງ ເພື່ອນຳໄປສູ່ການປະຕິບັດວຽກງານ NTMs ທີ່ເປັນໜຶ່ງໃນພັນທະຂອງ ສປປ ລາວ ໃຫ້ໄດ້ຮັບຜົນດີ.

ຫວັງຢ່າງຍິ່ງວ່າ ບັນດາທ່ານຜູ້ອ່ານ ຈະໄດ້ປະໂຫຍດຈາກບົດແປສະບັບນີ້ ແລະ ທີມງານຂອງພວກເຮົາ ຍິນດີຮັບຄຳຕຳນິຕິຊົມຈາກ ທ່ານ ເພື່ອປັບປຸງໃຫ້ດີຂຶ້ນ.

ນະຄອນຫຼວງວຽງຈັນ, ວັນທີ........................

**ຫົວໜ້າກົມ,**

## ຄະນະຮັບຜິດຊອບການຈັດພິມເອກະສານ

**ຊີ້ນໍາລວມ:**

ທ່ານ ນາງ ບານສະຕິ ເທບພະວົງ ຫົວໜ້າກົມການນໍາເຂົ້າ ແລະ ສົ່ງອອກ

**ກວດແກ້ເນື້ອໃນ ແລະ ຮຽບຮຽງ:**

ທ່ານ ນາງ ບານສະຕິ ເທບພະວົງ ຫົວໜ້າກົມການນໍາເຂົ້າ ແລະ ສົ່ງອອກ
ທ່ານ ນາງ ລັດທະນາ ດວງບຸບຜາ ຫົວໜ້າພະແນກອໍານວຍຄວາມສະດວກທາງດ້ານການຄ້າ
ທ່ານ ວ່າງໃຈ ວ່າງ ຫົວໜ້າພະແນກບໍລິຫານການນໍາເຂົ້າ ແລະ ສົ່ງອອກ
ທ່ານ ໄພໄຊ ອິນທະບົວລີ ຮອງຫົວໜ້າພະແນກຄຸ້ມຄອງແຫຼ່ງກໍາເນີດສິນຄ້າ
ທ່ານ ວິລະວົງ ສຸດທານິລະໄຊ ວິຊາການພະແນກອໍານວຍຄວາມສະດວກທາງດ້ານການຄ້າ

**ແປພາສາ:**

ທ່ານ ໄພໄຊ ອິນທະບົວລີ ຮອງຫົວໜ້າພະແນກຄຸ້ມຄອງແຫຼ່ງກໍາເນີດສິນຄ້າ
ທ່ານ ວິລະວົງ ສຸດທານິລະໄຊ ວິຊາການພະແນກອໍານວຍຄວາມສະດວກທາງດ້ານການຄ້າ
ທ່ານ ມົວເຊັ່ງ ມົວເຍ່ຍບີ ຜູ້ປະສານງານໂຄງການ

**ອອກແບບ ແລະ ຈັດລຽງ:**

ທ່ານ ນາງ ປາລິມາ ສີໃສແກ້ວ ຮອງຫົວໜ້າພະແນກບໍລິຫານການນໍາເຂົ້າ ແລະ ສົ່ງອອກ
ທ່ານ ມົວເຊັ່ງ ມົວເຍ່ຍບີ ຜູ້ປະສານງານໂຄງການ

# ສາລະບານ


ພາກສະເໜີ ........ 1

ພາກ A: ມາດຕະການທາງດ້ານສຸຂານາໄມພືດ ........ 7
ພາກ B: ສິ່ງກີດຂວາງທາງດ້ານເຕັກນິກຕໍ່ການຄ້າ ........ 16
ພາກ C: ການກວດກາສິນຄ້າກ່ອນການຂົນສົ່ງ ແລະ ລະບຽບການອື່ນ ........ 21
ພາກ D: ມາດຕະການສຸກເສີນເພື່ອປົກປ້ອງການຄ້າ ........ 22
ພາກ E: ການອອກໃບອະນຸຍາດແບບບໍ່ອັດຕະໂນມັດ, ໂກຕ້າ, ການເກືອດຫ້າມ ແລະ ມາດຕະການຄວບຄຸມປະລິມານ ນອກເໜືອຈາກເຫດຜົນທາງດ້ານ SPS ແລະ TBT ........ 28
ພາກ F: ມາດຕະການຄວບຄຸມລາຄາ ລວມມີບັນດາອາກອນເພີ່ມເຕີມ ແລະ ຄ່າທໍານຽມຕ່າງໆ ........ 36
ພາກ G: ມາດຕະການທາງດ້ານການເງິນ ........ 40
ພາກ H: ມາດຕະການທີ່ສົ່ງຜົນກະທົບຕໍ່ການແຂ່ງຂັນ ........ 43
ພາກ I: ມາດຕະການທາງດ້ານການລົງທຶນ ທີ່ຕິດພັນກັບການຄ້າ ........ 44
ພາກ J: ການຈໍາກັດການຈໍາໜ່າຍ ........ 45
ພາກ K: ການຈໍາກັດທາງດ້ານການບໍລິການຫຼັງການຂາຍ ........ 45
ພາກ L: ການອຸດໜູນ (ບໍ່ລວມເອົາການອຸດໜູນການສົ່ງອອກພາຍໃຕ້ຂໍ້ P7) ........ 45
ພາກ M: ການຈໍາກັດການຈັດຊື້ຈັດຈ້າງຂອງລັດຖະບານ ........ 46
ພາກ N: ຊັບສິນທາງປັນຍາ ........ 46
ພາກ O: ລະບຽບແຫຼ່ງກໍາເນີດສິນຄ້າ ........ 46
ພາກ P: ມາດຕະການທີ່ຕິດພັນກັບການສົ່ງອອກ ........ 47

## ພາກນຳສະເໜີ

ມາດຕະການທາງດ້ານການຄ້າທີ່ບໍ່ແມ່ນພາສີ ຖືກນິຍາມໂດຍທົ່ວໄປວ່າ ແມ່ນບັນດາມາດຕະການດ້ານນະໂຍບາຍ ນອກຈາກອັດຕາພາສີທຳມະດາ ທີ່ສາມາດສົ່ງຜົນກະທົບທາງດ້ານເສດຖະກິດອັນສຳຄັນ ຕໍ່ການຄ້າດ້ານສິນຄ້າສາກົນ, ການປ່ຽນແປງປະລິມານການຄ້າ, ຫຼື ລາຄາ ຫຼື ທັງສອງຢ່າງ (UNCTAD/DITC/TAB/2009/3). ເນື່ອງຈາກນິຍາມນີ້ແມ່ນກວ້າງ, ການຈັດປະເພດຢ່າງລະອຽດຈຶ່ງມີຄວາມສຳຄັນ ເພື່ອການລະບຸ ແລະ ຈຳແນກທີ່ດີຂຶ້ນ ລະຫວ່າງຮູບແບບຕ່າງໆຂອງມາດຕະການທາງດ້ານການຄ້າທີ່ບໍ່ແມ່ນພາສີ.

ການຈັດປະເພດຂອງມາດຕະການທາງດ້ານການຄ້າທີ່ບໍ່ແມ່ນພາສີທີ່ນຳສະເໜີໃນທີ່ນີ້ ແມ່ນການຈັດປະເພດຂອງອົງປະກອບ ຂອງບັນດາມາດຕະການທັງໝົດເຫຼົ່ານັ້ນ ທີ່ຖືວ່າກ່ຽວຂ້ອງກັບສະຖານະການປະຈຸບັນໃນການຄ້າສາກົນ. ການຈັດປະເພດດັ່ງກ່າວແມ່ນອີງຕາມລະບົບການໃສ່ລະຫັດຂອງອົງການ UNCTAD ແລະ ໄດ້ຖືກພັດທະນາໂດຍຫຼາຍອົງການຈັດຕັ້ງສາກົນ ທີ່ກໍ່ຕັ້ງເປັນກຸ່ມທີ່ເອີ້ນວ່າ ກຸ່ມ MAST (ທີມງານສະໜັບສະໜູນທີ່ມາຈາກຫຼາຍອົງການ) ເພື່ອສະໜັບສະໜູນກຸ່ມບຸກຄົນທີ່ມີຊື່ສຽງ ກ່ຽວກັບວຽກງານສິ່ງກີດຂວາງດ້ານການຄ້າທີ່ບໍ່ແມ່ນພາສີ ທີ່ສ້າງຕັ້ງຂຶ້ນໂດຍເລຂາທິການໃຫຍ່ຂອງອົງການ UNCTAD ໃນປີ 2006. ບົດສະເໜີສຸດທ້າຍໂດຍກຸ່ມ MAST ແມ່ນຖືກປັບປຸງໂດຍອົງການ UNCTAD ແລະ ພະແນກກ່ຽວຂ້ອງທັງໝົດຂອງກອງເລຂາ WTO. ການຈັດປະເພດໄດ້ຮັບການທົດສອບໃນພາກສະໜາມ ໂດຍອົງການ UNCTAD ແລະ ITC ສຳລັບການເກັບກຳຂໍ້ມູນ. ວຽກງານດັ່ງກ່າວແມ່ນດຳເນີນຢູ່ໃນລະຫວ່າງປີ 2007 ເຖິງ 2012. ເອກະສານສະບັບນີ້ ຖືກນຳສະເໜີເປັນສະບັບປີ 2012, ລວມເອົາໝາກຜົນຂອງການປຶກສາຫາລື ແລະ ການທົດສອບ. ການຈັດປະເພດດັ່ງກ່າວ ຖືເປັນການພັດທະນາ ແລະ ໄດ້ປັບໃຫ້ສອດຄ່ອງກັບສະພາບຄວາມເປັນຈິງຂອງການຄ້າສາກົນ ແລະ ຄວາມຕ້ອງການໃນການເກັບກຳຂໍ້ມູນ.

ທີມງານ MAST ທີ່ໄດ້ປຶກສາຫາລື ແລະ ສະເໜີການຈັດປະເພດນີ້ ເຊິ່ງປະກອບດ້ວຍ:

ອົງການອາຫານ ແລະ ກະສິກຳ ຂອງສະຫະປະຊາຊາດ,

ກອງທຶນການເງິນສາກົນ,

ສູນການຄ້າສາກົນ,

ອົງການຮ່ວມມືທາງດ້ານເສດຖະກິດ ແລະ ການພັດທະນາ,

ກອງປະຊຸມສະຫະປະຊາຊາດ ດ້ານການຄ້າ ແລະ ການພັດທະນາ,

ອົງການພັດທະນາອຸດສາຫະກຳຂອງສະຫະປະຊາຊາດ,

ທະນາຄານໂລກ,

ອົງການການຄ້າໂລກ (WTO)

ການຈັດປະເພດດັ່ງກ່າວນີ້ ປະກອບດ້ວຍ ບັນດາມາດຕະການທາງດ້ານເຕັກນິກເຊັ່ນ: ມາດຕະການສຸຂານາໄມ ຫຼື ມາດຕະການປົກປ້ອງສິ່ງແວດລ້ອມ, ເຊັ່ນດຽວກັບການນໍາໃຊ້ແບບປະເພນີອື່ນໆ ເພື່ອໃຫ້ກາຍເປັນເຄື່ອງມືຂອງນະໂຍບາຍການຄ້າ, ເຊັ່ນຕົວຢ່າງ: ໂກຕ້າ, ການຄວບຄຸມລາຄາ, ການຈໍາກັດການສົ່ງອອກ ຫຼື ມາດຕະການສຸກເສີນເພື່ອປົກປ້ອງການຄ້າ ແລະ ຍັງມີມາດຕະການຫຼັງຊາຍແດນອື່ນໆ ເຊັ່ນ: ການແຂ່ງຂັນ, ມາດຕະການດ້ານການລົງທຶນທີ່ຕິດພັນກັບການຄ້າ, ການຈັດຊື້ຈັດຈ້າງຂອງລັດຖະບານ ຫຼື ການຈໍາກັດການຈໍາໜ່າຍ.

ການຈັດປະເພດນີ້ ບໍ່ໄດ້ຕັດສິນກ່ຽວກັບຄວາມຊອບທໍາ, ຄວາມພຽງພໍ, ຄວາມຈໍາເປັນ ຫຼື ການເລືອກປະຕິບັດຂອງຮູບແບບຂອງການແຊກແຊງນະໂຍບາຍໃດກໍ່ຕາມ ທີ່ຖືກນໍາໃຊ້ໃນການຄ້າສາກົນ. ການຈັດປະເພດ ຮັບຮູ້ສິ່ງທີ່ມີຢູ່ແລ້ວ ແລະ ໄດ້ຖືກອອກແບບເພື່ອຈັດລຽງຂໍ້ມູນໃນຮູບແບບຂອງຖານຂໍ້ມູນ. ຄວາມໂປ່ງໃສ, ຄວາມໜ້າເຊື່ອຖື ແລະ ຄວາມສາມາດປຽບທຽບໄດ້ ຂອງຂໍ້ມູນຂ່າວສານ ສາມາດປະກອບສ່ວນເພື່ອໃຫ້ເຂົ້າໃຈປະກົດການ ແລະ ຊ່ວຍຜູ້ສົ່ງອອກໃນທົ່ວໂລກໃຫ້ເຂົ້າເຖິງຂໍ້ມູນ ຄືດັ່ງທີ່ໄດ້ເກີດຂຶ້ນກັບອັດຕາພາສີ. ພ້ອມນັ້ນ, ຄວາມໂປ່ງໃສຂອງຂໍ້ມູນຂ່າວສານ ກໍ່ມີຄວາມຈໍາເປັນເຊັ່ນກັນສໍາລັບການເຈລະຈາໃດໆ ທີ່ສາມາດນໍາໄປສູ່ຄວາມກົມກຽວ ແລະ ການຍອມຮັບເຊິ່ງກັນ ແລະ ກັນ ແລະ ທັງເສີມຂະຫຍາຍການຄ້າ.

ການຈັດປະເພດຂອງສາກົນ ໄດ້ພັດທະນາໂຄງສ້າງແບບກິ່ງໄມ້/ສາຂາ ເຊິ່ງເປັນບ່ອນທີ່ບັນດາມາດຕະການຖືກຈັດເຂົ້າເປັນຫຼາຍພາກ ຂຶ້ນກັບຂອບເຂດ ແລະ/ຫຼື ການອອກແບບຂອງບັນດາມາດຕະການເຫຼົ່ານັ້ນ. ຕໍ່ມາ, ແຕ່ລະພາກແມ່ນຖືກໃຈ້ແຍກຕໍ່ໄປອີກຕື່ມເປັນຫຼາຍໆກຸ່ມຍ່ອຍ ເພື່ອເຮັດໃຫ້ການຈັດປະເພດລະບຽບການຕ່າງໆທີ່ສົ່ງຜົນກະທົບຕໍ່ການຄ້າ ມີຄວາມຊັດເຈນຂຶ້ນ. ການຈັດປະເພດຂອງມາດຕະການທາງດ້ານການຄ້າທີ່ບໍ່ແມ່ນພາສີ ລວມມີ 16 ພາກ (A ເຖິງ P), ແຕ່ລະພາກຖືກແບ່ງອອກເປັນກຸ່ມທີ່ມີຄວາມເລິກເຖິງ 3 ລະດັບ (1, 2 ແລະ 3 ຕົວເລກ, ໂດຍອີງໃສ່ເຫດຜົນດຽວກັນກັບການຈັດປະເພດລະບົບເອກະພາບຂອງສິນຄ້າ).[1] ເຖິງແມ່ນວ່າ ບາງພາກມີຮອດ 3 ລະດັບຕົວເລກຂອງການແຍກປະເພດ, ແຕ່ສ່ວນຫຼາຍແມ່ນຢຸດຢູ່ທີ່ 2 ຕົວເລກ. ພາກຂອງການຈັດປະເພດຖືກສະແດງໃນຕາຕະລາງລຸ່ມນີ້. ທຸກພາກ ສະທ້ອນໃຫ້ເຫັນເຖິງຂໍ້ຮຽກຮ້ອງຕ່າງໆກ່ຽວກັບການນໍາເຂົ້າຂອງປະເທດຜູ້ນໍາເຂົ້າ, ຍົກເວັ້ນບັນດາມາດຕະການທີ່ວາງອອກຕໍ່ກັບການສົ່ງອອກໂດຍປະເທດຜູ້ສົ່ງອອກ (ພາກ P).

---

[1] ເຊັ່ນດຽວກັນ, ບັນດາມາດຕະການ ທີ່ຖືກລະບຸໄວ້ໃນແຕ່ລະກຸ່ມຍ່ອຍດ້ວຍຕົວເລກ, ໃນຂະນະທີ່ 9 ຕົວເລກ ແມ່ນຍາມໃດກໍຖືກຮັກສາໄວ້ສໍາລັບກໍລະນີອື່ນໆທັງໝົດ ທີ່ບໍ່ໄດ້ລະບຸໄວ້ໃນກຸ່ມຍ່ອຍນັ້ນ.

## ການຈັດປະເພດຂອງມາດຕະການທາງດ້ານການຄ້າທີ່ບໍ່ແມ່ນພາສີຕາມພາກ

| | | |
|---|---|---|
| ການນຳເຂົ້າ | ມາດຕະການດ້ານເຕັກນິກ | A ມາດຕະການທາງດ້ານສຸຂານາໄມ ແລະ ສຸຂານາໄມພືດ<br>B ສິ່ງກີດຂວາງທາງດ້ານເຕັກນິກຕໍ່ການຄ້າ<br>C ການກວດກາສິນຄ້າກ່ອນການຂົນສົ່ງ ແລະ ລະບຽບການອື່ນ |
| | ມາດຕະການທີ່ບໍ່ແມ່ນເຕັກນິກ | D ມາດຕະການສຸກເສີນເພື່ອປົກປ້ອງການຄ້າ<br>E ການອອກໃບອະນຸຍາດແບບບໍ່ອັດຕະໂນມັດ, ໂກຕ້າ, ການເກືອດຫ້າມ ແລະ ມາດຕະການຄວບຄຸມປະລິມານ ນອກເໜືອຈາກເຫດຜົນທາງດ້ານ SPS ຫຼື TBT<br>F ມາດຕະການຄວບຄຸມລາຄາ, ລວມມີ ບັນດາອາກອນເພີ່ມເຕີມ ແລະ ຄ່າທຳນຽມຕ່າງໆ<br>G ມາດຕະການທາງດ້ານການເງິນ<br>H ມາດຕະການສິ່ງຜົນກະທົບຕໍ່ການແຂ່ງຂັນ<br>I ມາດຕະການທາງດ້ານການລົງທຶນ ທີ່ຕິດພັນກັບການຄ້າ<br>J ການຈຳກັດການຈຳໜ່າຍ<br>K ການຈຳກັດດ້ານການບໍລິການຫຼັງການຂາຍ<br>L ການອຸດໜູນ (ບໍ່ລວມເອົາການອຸດໜູນການສົ່ງອອກ ພາຍໃຕ້ຂໍ້ P7)<br>M ການຈຳກັດການຈັດຊື້ຈັດຈ້າງຂອງລັດຖະບານ<br>N ຊັບສິນທາງປັນຍາ<br>O ລະບຽບແຫຼ່ງກຳເນີດສິນຄ້າ |
| | ການສົ່ງອອກ | P ມາດຕະການທີ່ຕິດພັນກັບການສົ່ງອອກ |

ພາກ A ແມ່ນກ່ຽວຂ້ອງກັບມາດຕະການດ້ານສຸຂານາໄມ ແລະ ສຸຂານາໄມພືດ, ໂດຍທົ່ວໄປຖືກເອີ້ນວ່າ SPS. ມັນລວມເອົາບັນດາມາດຕະການເຊັ່ນ: ການຈຳກັດສານຕ່າງໆ ແລະ ການຮັບປະກັນຄວາມປອດໄພຂອງອາຫານ ແລະ ມາດຕະການເຫຼົ່ານັ້ນ ແມ່ນເພື່ອປ້ອງກັນການແຜ່ລະບາດຂອງພະຍາດ ຫຼື ສັດຕູພືດ. ພາກ A ຍັງລວມເອົາບັນດາມາດຕະການປະເມີນຄວາມສອດຄ່ອງທັງໝົດ ທີ່ຕິດພັນກັບຄວາມປອດໄພຂອງອາຫານເຊັ່ນ: ການຢັ້ງຢືນ, ການທົດສອບ, ການກວດກາ ແລະ ການກັກກັນ.

ພາກ B ເກັບກຳບັນດາມາດຕະການດ້ານເຕັກນິກ ທີ່ເອີ້ນວ່າ TBT ເຊິ່ງໝາຍເຖິງບັນດາມາດຕະການເຊັ່ນ: ການຕິດສະຫຼາກ, ມາດຕະຖານດ້ານເຕັກນິກສະເພາະ ແລະ ຂໍ້ຮຽກຮ້ອງດ້ານຄຸນນະພາບ, ແລະ ມາດຕະການອື່ນທີ່ປົກປັກຮັກສາສິ່ງແວດລ້ອມ. ໃນກໍລະນີຄືກັບ SPS, ພາກ B ຍັງລວມເອົາບັນດາມາດຕະການດ້ານການປະເມີນຄວາມສອດຄ່ອງທັງໝົດ ທີ່ກ່ຽວຂ້ອງກັບຂໍ້ຮຽກຮ້ອງດ້ານເຕັກນິກເຊັ່ນ: ການຢັ້ງຢືນ, ການທົດສອບ ແລະ ການກວດກາ. ພາກສຸດທ້າຍໃນໝວດມາດຕະການດ້ານເຕັກນິກແມ່ນພາກ C ທີ່ຈັດປະເພດບັນດາມາດຕະການທີ່ຕິດພັນກັບການກວດກາສິນຄ້າກ່ອນການຂົນສົ່ງ ແລະ ລະບຽບການອື່ນຂອງພາສີ.

ພາກ D ຈັດກຸ່ມມາດຕະການສຸກເສີນຄື: ມາດຕະການທີ່ໄດ້ຈັດຕັ້ງປະຕິບັດເພື່ອຕອບໂຕ້ຜົນກະທົບທາງລົບຂອງການນຳເຂົ້າໃນຕະຫຼາດຂອງປະເທດຜູ້ນຳເຂົ້າ ລວມທັງມາດຕະການທີ່ແນໃສ່ການປະຕິບັດການຄ້າຕ່າງປະເທດທີ່ບໍ່ເປັນທຳ ເຊິ່ງລວມມີມາດຕະການຕ້ານການທຸ້ມຕະຫຼາດ, ມາດຕະການຕອບໂຕ້ການອຸດໜຸນ, ແລະ ມາດຕະການປົກປ້ອງ.

ພາກ E ແລະ F ແມ່ນກຸ່ມມາດຕະການທີ່ "ຍາກ", ຕາມປະເພນີແມ່ນຖືກນຳໃຊ້ໃນນະໂຍບາຍການຄ້າ. ພາກ E ລວມມີການອອກໃບອະນຸຍາດ, ໂກຕ້າ ແລະ ການຄວບຄຸມດ້ານປະລິມານອື່ນໆ ເຊິ່ງລວມເອົາໂກຕ້າອັດຕາພາສີ. ພາກ F ກຳນົດລາຍການມາດຕະການຄວບຄຸມລາຄາ ທີ່ຈັດຕັ້ງປະຕິບັດເພື່ອຄວບຄຸມ ຫຼື ສົ່ງຜົນກະທົບຕໍ່ລາຄາສິນຄ້ານຳເຂົ້າ. ໃນຫຼາຍໆຕົວຢ່າງ ແມ່ນກຸ່ມທີ່ສະໜັບສະໜູນລາຄາພາຍໃນຂອງຜະລິດຕະພັນສະເພາະໃດໜຶ່ງ ໃນເວລາທີ່ລາຄາຂອງສິນຄ້ານຳເຂົ້າເຫຼົ່ານັ້ນແມ່ນຕ່ຳກວ່າ; ເພື່ອກຳນົດລາຄາພາຍໃນຂອງຜະລິດຕະພັນສະເພາະໃດໜຶ່ງ ເນື່ອງຈາກການເໜັງຕີງຂອງລາຄາໃນຕະຫຼາດພາຍໃນ, ຫຼື ຄວາມບໍ່ແນ່ນອນຂອງລາຄາໃນຕະຫຼາດຕ່າງປະເທດ; ຫຼື ເພື່ອເພີ່ມ ຫຼື ຮັກສາ ລາຍຮັບຈາກການເກັບອາກອນ. ພາກນີ້, ຍັງລວມເອົາບັນດາມາດຕະການ ນອກເໜືອຈາກມາດຕະການດ້ານອັດຕາພາສີ ທີ່ເພີ່ມຄ່າໃຊ້ຈ່າຍຂອງການນຳເຂົ້າໃນລັກສະນະຄ້າຍຄືກັນ (ມາດຕະການແບບເຄິ່ງພາສີ).

ພາກ G ກຳນົດລາຍການມາດຕະການດ້ານການເງິນ ເຊິ່ງໝາຍເຖິງບັນດາມາດຕະການທີ່ຈຳກັດການຊຳລະເງິນຂອງການນຳເຂົ້າ, ຕົວຢ່າງ: ໃນເວລາທີ່ມີລະບຽບການຄຸ້ມຄອງການເຂົ້າເຖິງ ແລະ ມູນຄ່າຂອງເງິນຕາຕ່າງປະເທດ. ມັນຍັງລວມເອົາມາດຕະການທີ່ໃຊ້ຈຳກັດເງື່ອນໄຂການຊຳລະເງິນ.

ພາກ H ລວມມີມາດຕະການທີ່ສົ່ງຜົນກະທົບຕໍ່ການແຂ່ງຂັນ - ມາດຕະການທີ່ໃຫ້ສິດຜູກຂາດ ຫຼື ຄວາມພໍໃຈພິເສດ ຫຼື ບູລິມະສິດ ແກ່ໜຶ່ງ ຫຼື ຫຼາຍກຸ່ມຜູ້ປະກອບການດ້ານເສດຖະກິດທີ່ຈຳກັດໃດໜຶ່ງ. ມາດຕະການດັ່ງກ່າວ ຕົ້ນຕໍໝາຍເຖິງມາດຕະການຜູກຂາດ ເຊັ່ນ: ການຄ້າຂອງລັດ, ຕົວແທນນຳເຂົ້າພຽງຜູ້ດຽວ ຫຼື ການນຳໃຊ້ປະກັນໄພ ຫຼື ການຂົນສົ່ງພາຍໃນແບບບັງຄັບ.

ພາກ I ກ່ຽວຂ້ອງກັບບັນດາມາດຕະການດ້ານການລົງທຶນທີ່ຕິດພັນກັບການຄ້າ, ແລະ ຈັດກຸ່ມມາດຕະການທີ່ຈຳກັດການລົງທຶນ ໂດຍຮຽກຮ້ອງໃຫ້ມີສ່ວນປະກອບພາຍໃນ ຫຼື ຮ້ອງຂໍໃຫ້ມີການລົງທຶນທີ່ຕິດພັນກັບການສົ່ງອອກເພື່ອດຸ່ນດ່ຽງການນຳເຂົ້າ.

ພາກ J ແລະ K ກ່ຽວຂ້ອງກັບວິທີທີ່ ຜະລິດຕະພັນ ຫຼື ບໍລິການ ທີ່ຕິດພັນກັບຜະລິດຕະພັນ ທີ່ຖືກນຳອອກສູ່ຕະຫຼາດຫຼັງຈາກການນຳເຂົ້າ. ວິທີການດັ່ງກ່າວ ຖືວ່າເປັນມາດຕະການທາງດ້ານການຄ້າທີ່ບໍ່ແມ່ນພາສີຍ້ອນວ່າມັນສາມາດສົ່ງຜົນກະທົບຕໍ່ການຕັດສິນໃຈຕໍ່ກັບການນຳເຂົ້າ. ພາກ J, ກ່ຽວກັບການຈຳກັດການຈຳໜ່າຍສິນຄ້າ, ໝາຍເຖິງມາດຕະການຈຳກັດ ທີ່ຕິດພັນກັບການຈຳໜ່າຍຜະລິດຕະພັນນຳເຂົ້າພາຍໃນ. ພາກ K ກ່ຽວຂ້ອງກັບການຈຳກັດການບໍລິການຫຼັງການຂາຍ, ຕົວຢ່າງ, ການຈຳກັດການໃຫ້ບໍລິການສະໜອງເຄື່ອງອາໄຫຼ່.

ພາກ L, M, N ແລະ O ແມ່ນຕິດພັນກັບບັນດານະໂຍບາຍຫຼັງຊາຍແດນ. ພາກ L ປະກອບດ້ວຍບັນດາມາດຕະການທີ່ຕິດພັນກັບການອຸດໜູນທີ່ສົ່ງຜົນກະທົບຕໍ່ການຄ້າ. ພາກ M, ກ່ຽວກັບມາດຕະການຈຳກັດການຈັດຊື້ຈັດຈ້າງຂອງລັດຖະບານ, ໝາຍເຖິງການຈຳກັດ ທີ່ຜູ້ປະມູນອາດພົບພໍ້ໃນເວລາທີ່ພະຍາຍາມຂາຍຜະລິດຕະພັນຂອງຕົນໃຫ້ແກ່ລັດຖະບານຂອງຕ່າງປະເທດ. ພາກ N ລວມເອົາການຈຳກັດ ທີ່ຕິດພັນກັບມາດຕະການດ້ານຊັບສິນທາງປັນຍາ ແລະ ສິດຕໍ່ຊັບສິນທາງປັນຍາ. ພາກ O, ກ່ຽວກັບລະບຽບການແຫຼ່ງກຳເນີດສິນຄ້າ, ຈັດກຸ່ມມາດຕະການທີ່ຈຳກັດແຫຼ່ງກຳເນີດ ຫຼື ປັດໃຈນຳເຂົ້າຂອງຜະລິດຕະພັນ.

ພາກສຸດທ້າຍ, ພາກ P ກ່ຽວກັບບັນດາມາດຕະການດ້ານການສົ່ງອອກ. ເຊິ່ງຈັດກຸ່ມມາດຕະການທີ່ປະເທດໜຶ່ງນຳໃຊ້ຕໍ່ການສົ່ງອອກ ທີ່ລວມເອົາບັນດາອາກອນສົ່ງອອກ, ໂກຕ້າສົ່ງອອກ ແລະ ການຫ້າມສົ່ງອອກ.

ການທົບທວນຂອງການຈັດປະເພດນີ້ໄດ້ໃຫ້ນິຍາມ ແຕ່ລະມາດຕະການທີ່ຈັດເຂົ້າໃນບັນຊີ ແລະ ໃຫ້ຕົວຢ່າງທີ່ເປັນປະໂຫຍດ ທີ່ເປັນກໍລະນີສ່ວນໃຫຍ່ ເພື່ອເຮັດໃຫ້ມີຄວາມຈະແຈ້ງຍິ່ງຂຶ້ນ.

## A ມາດຕະການທາງດ້ານສຸຂານາໄມ ແລະ ສຸຂານາໄມພືດ

ແມ່ນບັນດາມາດຕະການທີ່ຖືກນຳໃຊ້ເພື່ອປົກປ້ອງຊີວິດຂອງຄົນ ຫຼື ສັດ ຈາກຄວາມສ່ຽງທີ່ເກີດຈາກສານເຈືອປົນ, ສານປົນເປື້ອນ, ສານພິດ ຫຼື ພະຍາດທີ່ເກີດຂຶ້ນຈາກສິ່ງທີ່ມີຊີວິດໃນອາຫານ; ເພື່ອປົກປ້ອງຊີວິດຂອງຄົນຈາກພະຍາດຕິດແປດຈາກພືດ ຫຼື ສັດ; ເພື່ອປົກປ້ອງຊີວິດຂອງສັດ ຫຼື ພືດ ຈາກສັດຕູພືດ, ພະຍາດ ຫຼື ພະຍາດທີ່ເກີດຂຶ້ນຈາກສິ່ງທີ່ມີຊີວິດ; ເພື່ອປ້ອງກັນ ຫຼື ຈຳກັດຄວາມເສຍຫາຍອື່ນໆຕໍ່ປະເທດຈາກການເຂົ້າມາ, ການກໍ່ໂຕ ຫຼື ແຜ່ລາມຂອງສັດຕູພືດ; ແລະ ເພື່ອປົກປ້ອງຊີວະນາໆພັນ. ມາດຕະການເຫຼົ່ານີ້ ລວມເອົາມາດຕະການທີ່ຖືກນຳໃຊ້ເພື່ອປົກປ້ອງສຸຂະພາບຂອງປາ ແລະ ສັດປ່າ ເຊັ່ນດຽວກັບປ່າໄມ້ ແລະ ພືດພັນໃນປ່າ.

ເອົາໃຈໃສ່ວ່າ ບັນດາມາດຕະການ ສຳລັບການປົກປັກຮັກສາສິ່ງແວດລ້ອມ (ນອກເໜືອຈາກທີ່ໄດ້ນິຍາມໄວ້ຂ້າງເທິງ), ເພື່ອປົກປ້ອງຜົນປະໂຫຍດຂອງຜູ້ບໍລິໂພກ, ຫຼື ເພື່ອສະຫວັດດີການຂອງສັດ ແມ່ນບໍ່ໄດ້ນອນຢູ່ໃນມາດຕະການ SPS.

ບັນດາມາດຕະການທີ່ຖືກຈັດປະເພດພາຍໃຕ້ຂໍ້ A1 ເຖິງ A6 ແມ່ນລະບຽບການດ້ານເຕັກນິກ ໃນຂະນະທີ່ມາດຕະການໃນຂໍ້ A8 ແມ່ນບັນດາຂັ້ນຕອນປະເມີນຄວາມສອດຄ່ອງ.

### A1 ການເກືອດຫ້າມ / ການຈຳກັດການນຳເຂົ້າດ້ວຍເຫດຜົນດ້ານ SPS

ການເກືອດຫ້າມ ແລະ/ຫຼື ການຈຳກັດ ຜະລິດຕະພັນຂັ້ນສຸດທ້າຍທີ່ນຳເຂົ້າ ແມ່ນຖືກຈັດປະເພດໃນພາກນີ້. ການຈຳກັດປະລິມານສານຕົກຄ້າງທີ່ຍອມຮັບໄດ້ ຫຼື ການນຳໃຊ້ສານສະເພາະໃດໜຶ່ງ ບັນຈຸໃນຜະລິດຕະພັນຂັ້ນສຸດທ້າຍແມ່ນຖືກຈັດປະເພດພາຍໃຕ້ຂໍ້ A2 ລຸ່ມນີ້.

#### A11 ການເກືອດຫ້າມດ້ານພູມີສາດຊົ່ວຄາວດ້ວຍເຫດຜົນດ້ານ SPS

ການເກືອດຫ້າມການນຳເຂົ້າຜະລິດຕະພັນສະເພາະໃດໜຶ່ງຈາກບັນດາປະເທດ ຫຼື ພາກພື້ນ ຍ້ອນການຕິດເຊື້ອພະຍາດ/ພະຍາດຕິດຕໍ່: ມາດຕະການທີ່ລວມຢູ່ໃນໝວດນີ້ໂດຍທົ່ວໄປ ແມ່ນມີລັກສະນະສະເພາະກິດ ແລະ ມີໄລຍະເວລາຜູກມັດ.

***ຕົວຢ່າງ:*** *ການນຳເຂົ້າສັດປີກຈາກພື້ນທີ່ ທີ່ຖືກຜົນກະທົບຈາກໄຂ້ຫວັດສັດປີກ ຫຼື ງົວຄວາຍ ຈາກປະເທດທີ່ຕິດພະຍາດປາກເປື່ອຍລີບເລັບ ແມ່ນຖືກເກືອດຫ້າມ.*

#### A12 ການຈຳກັດດ້ານພູມີສາດຕາມເງື່ອນໄຂໄດ້ຮັບສິດ

ການເກືອດຫ້າມການນຳເຂົ້າຜະລິດຕະພັນສະເພາະໃດໜຶ່ງຈາກປະເທດ ຫຼື ພາກພື້ນສະເພາະໃດໜຶ່ງ ຍ້ອນຂາດຫຼັກຖານກ່ຽວກັບເງື່ອນໄຂຄວາມປອດໄພທີ່ພຽງພໍ ເພື່ອຫຼີກລ້ຽງໄພອັນຕະລາຍດ້ານສຸຂານາໄມ ແລະ ສຸຂານາໄມພືດ: ການຈຳກັດຖືກວາງໄວ້ແບບອັດຕະໂນມັດ ຈົນກວ່າປະເທດດັ່ງກ່າວຈະພິສູດການນຳໃຊ້ມາດຕະການ

ດ້ານສຸຂານາໄມ ແລະ ສຸຂານາໄມພືດທີ່ໜ້າພໍໃຈ ເພື່ອໃຫ້ການປົກປ້ອງໃນລະດັບທີ່ແນ່ນອນ ຕໍ່ກັບໄພອັນຕະລາຍ ທີ່ຖືວ່າສາມາດຍອມຮັບໄດ້. ປະເທດທີ່ມີເງື່ອນໄຂໄດ້ຮັບສິດ ຈະຖືກຈັດເຂົ້າໃນ “ປະເທດທີ່ບໍ່ມີຄວາມສ່ຽງ”. ການນຳເຂົ້າຈາກປະເທດອື່ນແມ່ນຖືກເກືອດຫ້າມ. ບັນຊີດັ່ງກ່າວ ອາດລວມເອົາການສ້າງຕັ້ງການຜະລິດ ທີ່ໄດ້ຮັບອະນຸຍາດພາຍໃນປະເທດທີ່ໄດ້ຮັບສິດ.

***ຕົວຢ່າງ:*** *ການນຳເຂົ້າຜະລິດຕະພັນນົມ ຈາກປະເທດທີ່ຍັງບໍ່ທັນໄດ້ພິສູດຄົບຕາມເງື່ອນໄຂດ້ານສຸຂານາໄມທີ່ໜ້າພໍໃຈ ແມ່ນຖືກເກືອດຫ້າມ.*

## A13 ວິທີການທີ່ເປັນລະບົບ

ວິທີການທີ່ລວມເອົາສອງ ຫຼື ຫຼາຍມາດຕະການ SPS ແບບອິດສະຫຼະຕໍ່ຜະລິດຕະພັນອັນດຽວກັນ: ມາດຕະການທີ່ປະສົມປະສານດັ່ງກ່າວ ສາມາດປະກອບດ້ວຍຈຳນວນເທົ່າໃດກໍຕາມຂອງບັນດາມາດຕະການທີ່ກ່ຽວຂ້ອງເຊິ່ງກັນ ແລະ ກັນ, ເຊັ່ນດຽວກັບ ຂໍ້ຮຽກຮ້ອງການປະເມີນຄວາມສອດຄ່ອງ ແລະ ຖືກນຳໃຊ້ໃນທຸກຂັ້ນຕອນຂອງການຜະລິດ.

***ຕົວຢ່າງ:*** *ໂຄງການນຳເຂົ້າໃດໜຶ່ງ ໄດ້ວາງຫຼາຍໆມາດຕະການ ທີ່ກຳນົດສະຖານທີ່ການຜະລິດທີ່ປອດສັດຕູພືດສະເພາະ, ການນຳໃຊ້ຢາປາບສັດຕູພືດ, ເຕັກນິກການເກັບກ່ຽວ ເຊັ່ນດຽວກັບ ການຮົມຄວັນຫຼັງການເກັບກ່ຽວ, ລວມກັບຂໍ້ຮຽກຮ້ອງໃຫ້ມີການກວດກາຢູ່ຈຸດນຳເຂົ້າ: ການວິເຄາະຄວາມອັນຕະລາຍ ແລະ ຂໍ້ຮຽກຮ້ອງໃຫ້ມີຈຸດຄວບຄຸມທີ່ສຳຄັນ (HACCP).*

## A14 ຂໍ້ຮຽກຮ້ອງໃຫ້ມີການອະນຸຍາດແບບພິເສດດ້ວຍເຫດຜົນດ້ານ SPS

ຂໍ້ຮຽກຮ້ອງທີ່ຜູ້ນຳເຂົ້າຄວນໄດ້ຮັບການອະນຸຍາດ, ໃບອະນຸຍາດ ຫຼື ການອະນຸມັດຈາກອົງການຈັດຕັ້ງຂອງລັດທີ່ກ່ຽວຂ້ອງຂອງປະເທດປາຍທາງ ດ້ວຍເຫດຜົນດ້ານ SPS: ເພື່ອໄດ້ຮັບການອະນຸຍາດ, ຜູ້ນຳເຂົ້າອາດຈຳເປັນຕ້ອງປະຕິບັດຕາມບັນດາລະບຽບການອື່ນທີ່ກ່ຽວຂ້ອງ ແລະ ການປະເມີນຄວາມສອດຄ່ອງຕ່າງໆ.

***ຕົວຢ່າງ:*** *ຕ້ອງໄດ້ຮັບການອະນຸຍາດນຳເຂົ້າ ຈາກກະຊວງສາທາລະນະສຸກ.*

## A15 ຂໍ້ຮຽກຮ້ອງໃຫ້ມີການຂຶ້ນທະບຽນສຳລັບຜູ້ນຳເຂົ້າ

ຂໍ້ຮຽກຮ້ອງທີ່ຜູ້ນຳເຂົ້າຄວນໄດ້ຮັບການຂຶ້ນທະບຽນ ກ່ອນທີ່ຈະສາມາດນຳເຂົ້າຜະລິດຕະພັນສະເພາະໃດໜຶ່ງ: ເພື່ອຂຶ້ນທະບຽນ, ຜູ້ນຳເຂົ້າອາດຈຳເປັນຕ້ອງປະຕິບັດຕາມຂໍ້ຮຽກຮ້ອງສະເພາະ, ສະໜອງເອກະສານ ແລະ ຈ່າຍຄ່າທຳນຽມການຂຶ້ນທະບຽນ.

***ຕົວຢ່າງ:*** *ຜູ້ນຳເຂົ້າລາຍການອາຫານສະເພາະໃດໜຶ່ງ ຈຳເປັນຕ້ອງໄດ້ຖືກຂຶ້ນທະບຽນ ທີ່ກະຊວງສາທາລະນະສຸກ.*

**A19 ການເກືອດຫ້າມ / ການຈຳກັດການນຳເຂົ້າ ດ້ວຍເຫດຜົນດ້ານ SPS, (ທີ່ບໍ່ໄດ້ລະບຸໄວ້ຢູ່ບ່ອນໃດ)**

## A2 ປະລິມານສານຕົກຄ້າງທີ່ຍອມຮັບໄດ້ ແລະ ການຈຳກັດການນຳໃຊ້ສານຕ່າງໆ

**A21 ປະລິມານສານຕົກຄ້າງທີ່ຍອມຮັບໄດ້ ຫຼື ການປົນເປື້ອນຂອງສານສະເພາະໃດໜຶ່ງ (ບໍ່ມີຈຸລິນຊີ)**

ມາດຕະການທີ່ກຳນົດປະລິມານສານຕົກຄ້າງສູງສຸດ (MRL) ຫຼື ປະລິມານທີ່ຍອມຮັບໄດ້ຂອງສານຕ່າງໆເຊັ່ນ: ຝຸ່ນເຄມີ, ຢາປາບສັດຕູພືດ, ແລະ ສານເຄມີ ແລະ ທາດໂລຫະສະເພາະໃດໜຶ່ງໃນອາຫານ ແລະ ທົ່ວອາຫານສັດ ທີ່ຖືກນຳໃຊ້ໃນລະຫວ່າງຂະບວນການການຜະລິດຂອງສານຕ່າງໆ ແຕ່ບໍ່ແມ່ນສ່ວນປະກອບທີ່ຕັ້ງໃຈ: ເຊິ່ງລວມມີລະດັບສູງສຸດທີ່ອະນຸຍາດ (ML) ສຳລັບການປົນເປື້ອນທີ່ບໍ່ແມ່ນຈຸລິນຊີ. ບັນດາມາດຕະການທີ່ກ່ຽວຂ້ອງກັບການປົນເປື້ອນຂອງຈຸລິນຊີ ຖືກຈັດປະເພດພາຍໃຕ້ຂໍ້ A4 ລຸ່ມນີ້.

***ຕົວຢ່າງ:*** *(a) ຄ່າ MRL ຖືກກຳນົດຂຶ້ນສຳລັບຢາຂ້າແມງໄມ້, ຢາປາບສັດຕູພືດ, ໂລຫະໜັກ ແລະ ສານຕົກຄ້າງຂອງຢາປົວສັດ; (b) ສານ POPs ແລະ ສານເຄມີທີ່ເກີດຂຶ້ນໃນລະຫວ່າງການປຸງແຕ່ງ; (c) ສານຕົກຄ້າງຂອງສານ Dithianon ໃນໝາກໂປ້ມ ແລະ ດອກຮ໋ອບ (Hop).*

**A22 ການຈຳກັດການນຳໃຊ້ສານສະເພາະໃດໜຶ່ງໃນອາຫານ ແລະ ທົ່ວອາຫານສັດ ແລະ ອຸປະກອນສຳຜັດຕ່າງໆ**

ການຈຳກັດ ຫຼື ການເກືອດຫ້າມ ຕໍ່ກັບການນຳໃຊ້ສານສະເພາະໃດໜຶ່ງໃນອາຫານ ແລະ ທົ່ວອາຫານສັດ. ມັນລວມເອົາການຈຳກັດສານຕ່າງໆ ທີ່ຢູ່ໃນພາຊະນະບັນຈຸອາຫານ ທີ່ອາດເຂົ້າໄປໃນອາຫານ.

***ຕົວຢ່າງ:*** *(a) ມີການຈຳກັດສະເພາະ ຕໍ່ກັບການໃຊ້ສີ, ການຮັກສາ ຫຼື ການເຮັດໃຫ້ມີລົດຫວານຂຶ້ນ ສຳລັບອາຫານ ແລະ ທົ່ວອາຫານສັດ ເພີ່ມເຕີມ; (b) ສຳລັບພາຊະນະບັນຈຸອາຫານທີ່ຜະລິດຈາກຢາງ polyvinyl chloride, ສານ vinyl chloride monomer ຕ້ອງບໍ່ໃຫ້ເກີນ 1 ມິລີກຣາມ ຕໍ່ 1 ກິໂລ.*

## A3 ຂໍ້ຮຽກຮ້ອງໃຫ້ມີການຕິດສະຫຼາກ, ການໃສ່ເຄື່ອງໝາຍ ແລະ ການຫຸ້ມຫໍ່

### A31 ຂໍ້ຮຽກຮ້ອງໃຫ້ມີການຕິດສະຫຼາກ

ມາດຕະການທີ່ກຳນົດຂໍ້ມູນ ກ່ຽວກັບຄວາມປອດໄພຂອງອາຫານໂດຍກົງ ທີ່ຄວນຖືກສະໜອງໃຫ້ຜູ້ບໍລິໂພກເຊັ່ນ: ການຕິດສະຫຼາກເປັນການສື່ສານດ້ວຍຕົວອັກສອນ, ອີເລັກໂຕຼນິກ ຫຼື ຮູບແຕ້ມໃສ່ສິ່ງຫຸ້ມຫໍ່ ຫຼື ໃນສິ່ງທີ່ແຍກອອກຕ່າງຫາກ ແຕ່ກ່ຽວຂ້ອງກັບສະຫຼາກ.

***ຕົວຢ່າງ:*** *(a) ສະຫຼາກຕ້ອງລະບຸເງື່ອນໄຂການເກັບຮັກສາເຊັ່ນ: ຮັກສາໄວ້ໃນ "ອຸນຫະພູມສູງສຸດ 5 ອົງສາ C"; (b) ສ່ວນປະກອບທີ່ສາມາດເປັນອັນຕະລາຍ ເຊັ່ນ: ສານທີ່ສາມາດກໍ່ໃຫ້ເກີດພູມແພ້ໄດ້, ຕົວຢ່າງ: "ບັນຈຸນ້ຳເຜີ້ງໃນອາຫານແມ່ນບໍ່ເໝາະສົມ ສຳລັບເດັກນ້ອຍອາຍຸຕ່ຳກວ່າ 1 ປີ".*

### A32 ຂໍ້ຮຽກຮ້ອງໃຫ້ມີການໃສ່ເຄື່ອງໝາຍ

ມາດຕະການທີ່ກຳນົດຂໍ້ມູນ ກ່ຽວກັບຄວາມປອດໄພຂອງອາຫານໂດຍກົງ ທີ່ຄວນໄດ້ຮັບການປະຕິບັດໂດຍການຫຸ້ມຫໍ່ສິນຄ້າ ເພື່ອການຂົນສົ່ງ ແລະ/ຫຼື ການຈຳໜ່າຍ.

***ຕົວຢ່າງ:*** *ດ້ານນອກຂອງຕູ້ບັນຈຸສິນຄ້າຂົນສົ່ງ ຕ້ອງຕິດເຄື່ອງໝາຍຄຳແນະນຳເຊັ່ນ: ການຈັດການກັບສິນຄ້າທີ່ເນົ່າເປື່ອຍງ່າຍ, ຄວາມຮຽກຮ້ອງຕ້ອງການໃຫ້ມີການແຊ່ເຢັນ, ຫຼື ການປົກປ້ອງຈາກແສງແດດໂດຍກົງ ແລະ ອື່ນໆ.*

### A33 ຂໍ້ຮຽກຮ້ອງໃຫ້ມີການຫຸ້ມຫໍ່

ມາດຕະການກ່ຽວກັບຮູບແບບທີ່ສິນຄ້າຕ້ອງຖືກຫຸ້ມຫໍ່ ຫຼື ບໍ່ສາມາດຖືກຫຸ້ມຫໍ່ໄດ້, ຫຼື ການກຳນົດວັດຖຸທີ່ໃຊ້ຫຸ້ມຫໍ່, ເຊິ່ງກ່ຽວຂ້ອງໂດຍກົງກັບຄວາມປອດໄພຂອງອາຫານ.

***ຕົວຢ່າງ:*** *ການນຳໃຊ້ຟີມ PVC ສຳລັບຫຸ້ມຫໍ່ອາຫານ ແມ່ນຖືກຈຳກັດ.*

## A4 ຂໍ້ຮຽກຮ້ອງດ້ານຫຼັກການອະນາໄມ

ຂໍ້ຮຽກຮ້ອງ ກ່ຽວກັບຄຸນນະພາບ, ສ່ວນປະກອບ ແລະ ຄວາມປອດໄພຂອງອາຫານເຊິ່ງປົກກະຕິແມ່ນອີງໃສ່ການປະຕິບັດຕາມຫຼັກການການອະນາໄມທີ່ດີ (GMPs), ວິທີການວິເຄາະ ແລະ ການເລືອກຕົວຢ່າງ ທີ່ຖືກຮັບຮູ້: ຂໍ້ຮຽກຮ້ອງນີ້ ອາດຖືກນຳໃຊ້ກັບຜະລິດຕະພັນຂັ້ນສຸດທ້າຍ (A41) ຫຼື ຂະບວນການການຜະລິດສິນຄ້າ (A42).

### A41 ມາດຖານດ້ານຈຸລິນຊີຂອງຜະລິດຕະພັນຂັ້ນສຸດທ້າຍ

ການກໍານົດຄວາມກັງວົນ ກ່ຽວກັບຈຸລິນຊີ ແລະ/ຫຼື ສານພິດ/ການແລກປ່ຽນທາດຂອງຈຸລິນຊີ ແລະ ເຫດຜົນສໍາລັບຄວາມກັງວົນດັ່ງກ່າວ, ວິທີການວິເຄາະເພື່ອສືບຫາ ແລະ/ຫຼື ກໍານົດປະລິມານຂອງຈຸລິນຊີໃນຜະລິດຕະພັນຂັ້ນສຸດທ້າຍ: ການຈໍາກັດຈຸລິນຊີ ຄວນຄໍານຶງເຖິງຄວາມສ່ຽງທີ່ຕິດພັນກັບສິ່ງທີ່ມີຊີວິດຂະໜາດນ້ອຍ, ແລະ ບັນດາເງື່ອນໄຂທີ່ຄາດໄວ້ ເພື່ອໃຫ້ມີການຈັດການ ແລະ ບໍລິໂພກອາຫານ. ພ້ອມ ນີ້, ການຈໍາກັດຈຸລິນຊີ ຄວນຄໍານຶງເຖິງຄວາມເປັນໄປໄດ້ຂອງການກະແຈກກະຈາຍຂອງຈຸລິນຊີ ທີ່ບໍ່ສະໝໍ່າສະເໝີໃນອາຫານ ແລະ ການປ່ຽນແປງຂັ້ນຕອນການວິເຄາະທີ່ມີຢູ່.

***ຕົວຢ່າງ:*** *ໄຂ່ແຫຼວຄວນໄດ້ຮັບການຂ້າເຊື້ອ ຫຼື ບໍ່ດັ່ງນັ້ນ ຄວນໄດ້ຮັບການຮັກສາເພື່ອທໍາລາຍເຊື້ອຈຸລິນຊີທັງໝົດທີ່ສາມາດກໍ່ໃຫ້ເກີດພະຍາດຖອກທ້ອງ.*

### A42 ການປະຕິບັດຕາມຫຼັກການອະນາໄມ ໃນລະຫວ່າງການຜະລິດ

ໃນດ້ານຫຼັກການ ຂໍ້ຮຽກຮ້ອງໄດ້ແນໃສ່ເພື່ອໃຫ້ຄໍາແນະນໍາ ກ່ຽວກັບການກໍານົດ ແລະ ການນໍາໃຊ້ມາດຖານດ້ານຈຸລິນຊີ ສໍາລັບອາຫານໃນຈຸດໃດໜຶ່ງຂອງຕ່ອງໂສ້ອາຫານ ແຕ່ການຜະລິດຂັ້ນພື້ນຖານ ຈົນຮອດການບໍລິໂພກຂັ້ນສຸດທ້າຍ: ໃນດ້ານຫຼັກການ, ຄວາມປອດໄພຂອງອາຫານ ຖືກຮັບປະກັນໂດຍການຄວບຄຸມແຫຼ່ງທີ່ມາ, ການອອກແບບຜະລິດຕະພັນ, ການຄວບຄຸມຂະບວນການການຜະລິດ, ແລະ ການປະຕິບັດຕາມຫຼັກການອະນາໄມທີ່ດີ ໃນລະຫວ່າງການຜະລິດ, ການປຸງແຕ່ງ (ລວມທັງການຕິດສະຫຼາກ), ການຈັດການ, ການຈໍາໜ່າຍ, ການເກັບຮັກສາ, ການຂາຍ, ການກະກຽມ ແລະ ການນໍາໃຊ້.

***ຕົວຢ່າງ:*** *ອຸປະກອນຮີດນົມງົວຢູ່ໃນຟາມ ຄວນຖືກທໍາຄວາມສະອາດທຸກມື້ ດ້ວຍນໍ້າຢາຂ້າເຊື້ອສະເພາະ.*

### A49 ຂໍ້ຮຽກຮ້ອງດ້ານຫຼັກການອະນາໄມອື່ນໆ, ທີ່ບໍ່ໄດ້ລະບຸໄວ້ຢູ່ບ່ອນໃດ

## A5 ການຮັກສາເພື່ອເຮັດໃຫ້ສັດຕູພືດ ແລະ ສັດ ແລະ ສິ່ງທີ່ມີຊີວິດທີ່ກໍ່ໃຫ້ເກີດເຊື້ອພະຍາດໃນຜະລິດຕະພັນຂັ້ນສຸດທ້າຍ ໝົດໄປ (ຕົວຢ່າງ: ການຮັກສາຫຼັງຈາກການເກັບກ່ຽວ)

ການຮັກສາຕ່າງໆທີ່ສາມາດນໍາໃຊ້ໃນລະຫວ່າງການຜະລິດ ຫຼື ຂະບວນການຫຼັງການຜະລິດ ເພື່ອຂ້າສັດຕູພືດ ແລະ ສັດ ຫຼື ສິ່ງທີ່ມີຊີວິດ ທີ່ກໍ່ໃຫ້ເກີດເຊື້ອພະຍາດໃນຜະລິດຕະພັນຂັ້ນສຸດທ້າຍ.

**A51 ການຮັກສາດ້ວຍຄວາມເຢັນ/ຮ້ອນ**

ຂໍ້ຮຽກຮ້ອງຂອງການໃຊ້ຄວາມເຢັນ/ຮ້ອນຂອງຜະລິດຕະພັນ ຕໍ່າ/ສູງກວ່າ ອຸນຫະພູມສະເພາະໃດໜຶ່ງ ສໍາລັບໄລຍະເວລາໃດໜຶ່ງເພື່ອຂ້າສັດຕູພືດທີ່ຢູ່ໃນເປົ້າໝາຍ, ບໍ່ວ່າຈະກ່ອນ ຫຼື ໃນເວລາທີ່ສິນຄ້າຮອດປະເທດປາຍທາງ. ອາດຮຽກຮ້ອງໃຫ້ມີສິ່ງອໍານວຍຄວາມສະດວກສະເພາະ ທາງບົກ ຫຼື ເຮືອກໍາປັ່ນ. ໃນກໍລະນີນີ້, ຕູ້ບັນຈຸສິນຄ້າ ຄວນຖືກຕິດຕັ້ງອຸປະກອນຢ່າງຄົບຖ້ວນ ເພື່ອຮັກສາຄວາມເຢັນ/ຮ້ອນ ແລະ ຄວນຖືກຕິດຕັ້ງດ້ວຍອຸປະກອນເຄື່ອງວັດແທກອຸນຫະພູມ.

***ຕົວຢ່າງ:*** *ໝາກໄມ້ ຕ້ອງໄດ້ຜ່ານການແຊ່ເຢັນ (ການຂ້າເຊື້ອ) ເພື່ອຂ້າແມງວັນ.*

**A52 ການສາຍລັງສີ**

ຂໍ້ຮຽກຮ້ອງເພື່ອຂ້າ ຫຼື ຕັດກໍາລັງຂອງສິ່ງທີ່ມີຊີວິດຂະໜາດນ້ອຍ, ແບັກທີເຣຍ, ໄວຣັສ໌ ຫຼື ແມງໄມ້ ທີ່ອາດມີຢູ່ໃນຜະລິດຕະພັນອາຫານ ແລະ ທົ່ວອາຫານສັດ ໂດຍການນໍາໃຊ້ພະລັງງານສາຍລັງສີ (ການສາຍລັງສີໄອອອນໄນສ໌).

***ຕົວຢ່າງ:*** *ເຕັກໂນໂລຊີນີ້ ອາດຖືກນໍາໃຊ້ກັບຜະລິດຕະພັນຊີ້ນ, ໝາກໄມ້ສົດ, ເຄື່ອງເທດ ແລະ ຜັກຕາກແຫ້ງປຸງລົດ.*

**A53 ການຮົມຄວັນ**

ຂະບວນການຂ້າແມງໄມ້, ສະປໍເຊື້ອລາ ຫຼື ສິ່ງທີ່ມີຊີວິດອື່ນໆ ໂດຍການຮົມຄວັນເຄມີໃນລະດັບແຮງທີ່ເປັນອັນຕະລາຍຕໍ່ຊີວິດ ໃນພື້ນທີ່ປິດຕາມໄລຍະເວລາທີ່ກໍານົດໄວ້. ຢາຮົມແມ່ນທາດເຄມີໃນອຸນຫະພູມ ແລະ ຄວາມດັນທີ່ຕ້ອງການ ສາມາດຢູ່ໃນສະພາບທີ່ເປັນອາຍແກ໊ສ ໃນຄວາມເຂັ້ມຂຸ້ນພຽງພໍ ທີ່ຈະຂ້າສິ່ງທີ່ມີຊີວິດທີ່ເປັນສັດຕູພືດທີ່ກໍານົດໄວ້.

***ຕົວຢ່າງ:*** *ການນໍາໃຊ້ນໍ້າກົດສົ້ມເພື່ອການຮົມຄວັນຫຼັງການເກັບກ່ຽວ ແມ່ນຂໍ້ບັງຄັບ ເພື່ອຂ້າສະປໍຣ໌ເຊື້ອລາຂອງໝາກພິຊ໌, ໝາກຄາຍ, ໝາກແອັບປຣິຄ໋ອດ ແລະ ໝາກເຊີລີ້; ສານ methyl bromide ທີ່ໃຊ້ໃນການອົບຄວັນໄມ້ຕັດດອກ ແລະ ຫຼາຍຜະລິດຕະພັນອື່ນໆ.*

**A59 ການຂ້າສັດຕູພືດ ແລະ ສັດ ແລະ ສິ່ງທີ່ມີຊີວິດ ທີ່ກໍ່ໃຫ້ເກີດເຊື້ອພະຍາດໃນຜະລິດຕະພັນຂັ້ນສຸດທ້າຍ, ທີ່ບໍ່ໄດ້ລະບຸໄວ້ຢູ່ບ່ອນໃດ**

## A6 ຂໍ້ຮຽກຮ້ອງອື່ນໆ ກ່ຽວກັບການຜະລິດ ຫຼື ຂະບວນການຫຼັງການຜະລິດ

ຂໍ້ຮຽກຮ້ອງ ກ່ຽວກັບຂະບວນການ (ຫຼັງ) ການຜະລິດອື່ນໆ ທີ່ບໍ່ໄດ້ຈັດປະເພດໄວ້ຂ້າງເທິງ. ເຊິ່ງບໍ່ໄດ້ລວມເອົາບັນດາມາດຕະການສະເພາະ ພາຍໃຕ້ ***A2: ປະລິມານສານຕົກຄ້າງທີ່ຍອມຮັບໄດ້ ແລະ ການຈຳກັດການນຳໃຊ້ສານຕ່າງໆ*** (ຫຼື ໝວດຍ່ອຍຂອງມັນ).

### A61 ຂະບວນການປູກພືດ

ຂໍ້ຮຽກຮ້ອງ ກ່ຽວກັບວິທີການປູກພືດ ພາຍໃຕ້ເງື່ອນໄຂທີ່ຕິດພັນກັບອຸນຫະພູມ, ແສງສະຫວ່າງ, ໄລຍະຫ່າງລະຫວ່າງພືດ, ນ້ຳ, ອາກາດ, ສານອາຫານແຮ່ທາດ, ແລະ ອື່ນໆ.

***ຕົວຢ່າງ:*** *ປະລິມານແນວພັນພືດ ແລະ ໄລຍະຫ່າງຂອງແຖວຕົ້ນຖົ່ວເຫຼືອງ ແມ່ນຖືກລະບຸໄວ້ເພື່ອຫຼຸດຜ່ອນຄວາມສ່ຽງຂອງພະຍາດເພ້ຍຈັກຈັ່ນ.*

### A62 ຂະບວນການລ້ຽງ ຫຼື ຈັບສັດ

ຂໍ້ຮຽກຮ້ອງ ກ່ຽວກັບວິທີລ້ຽງສັດ ຫຼື ຈັບສັດ ຍ້ອນຄວາມກັງວົນດ້ານ SPS.

***ຕົວຢ່າງ:*** *ງົວຄວາຍບໍ່ຄວນຖືກລ້ຽງດ້ວຍທົ່ວອາຫານ ທີ່ບັນຈຸເຄື່ອງໃນຂອງງົວທີ່ສົງໃສວ່າມີໂລກງົວບ້າ BSE.*

### A63 ຂະບວນການປຸງແຕ່ງອາຫານ ແລະ ທົ່ວອາຫານສັດ

ຂໍ້ຮຽກຮ້ອງ ກ່ຽວກັບວິທີການຜະລິດອາຫານ ແລະ ທົ່ວອາຫານສັດ ເພື່ອຕອບສະໜອງເງື່ອນໄຂດ້ານສຸຂານາໄມ ສຳລັບຜະລິດຕະພັນຂັ້ນສຸດທ້າຍ.

***ຕົວຢ່າງ:*** *ອຸປະກອນ ຫຼື ເຄື່ອງຈັກໃໝ່ ເພື່ອຈັດການ ຫຼື ປຸງແຕ່ງທົ່ວອາຫານສັດ ຫຼື ປິ່ນອ້ອມ ການກຳນົດການຜະລິດທົ່ວອາຫານສັດ ບໍ່ຄວນບັນຈຸສານໂພລີຄລໍຣີເນດໄບຟີນີລ໌ (PCBs).*

### A64 ເງື່ອນໄຂການເກັບຮັກສາ ແລະ ການຂົນສົ່ງ

ຂໍ້ຮຽກຮ້ອງ ກ່ຽວກັບເງື່ອນໄຂສະເພາະໃຫ້ອາຫານ ແລະ ທົ່ວອາຫານສັດ, ພືດ ແລະ ສັດລ້ຽງ ຄວນຖືກເກັບຮັກສາ ແລະ/ຫຼື ຂົນສົ່ງ.

***ຕົວຢ່າງ:*** *ອາຫານສະເພາະໃດໜຶ່ງ ຄວນຖືກເກັບຮັກສາໃນສະຖານທີ່ແຫ້ງ ຫຼື ຕ່ຳກວ່າອຸນຫະພູມສະເພາະໃດໜຶ່ງ.*

### A69 ຂໍ້ຮຽກຮ້ອງອື່ນໆ ກ່ຽວກັບການຜະລິດ ຫຼື ຂະບວນການຫຼັງການຜະລິດ, ທີ່ບໍ່ໄດ້ລະບຸໄວ້ຢູ່ບ່ອນໃດ

## A8 ການປະເມີນຄວາມສອດຄ່ອງທີ່ຕິດພັນກັບມາດຕະການ SPS

ຂໍ້ຮຽກຮ້ອງໃຫ້ມີການກວດສອບ ການຈັດຕັ້ງປະຕິບັດເງື່ອນໄຂດ້ານ SPS. ເຊິ່ງສາມາດບັນລຸໄດ້ໂດຍຮູບແບບໜຶ່ງ ຫຼື ຫຼາຍຮູບແບບປະສົມປະສານກັນຂອງຂັ້ນຕອນການກວດກາ ແລະ ການອະນຸມັດ, ລວມທັງບັນດາຂັ້ນຕອນການເກັບຕົວຢ່າງ, ການທົດສອບ ແລະ ການກວດກາ; ການປະເມີນຜົນ, ການກວດສອບ ແລະ ການຮັບປະກັນຄວາມສອດຄ່ອງ; ການຮັບຮອງ ແລະ ການອະນຸມັດ ແລະ ອື່ນໆ.

### A81 ຂໍ້ຮຽກຮ້ອງໃຫ້ມີການຈົດທະບຽນຜະລິດຕະພັນ

ຂໍ້ຮຽກຮ້ອງໃຫ້ມີການຈົດທະບຽນຜະລິດຕະພັນໃນປະເທດຜູ້ນໍາເຂົ້າ.

***ຕົວຢ່າງ:*** *ຂໍ້ຮຽກຮ້ອງ ແລະ ຄໍາແນະນໍາ ສໍາລັບການຈົດທະບຽນຢາປາບສັດຕູພືດ ແລະ ສານປະສົມຂອງມັນ, ຕົວຢ່າງ: ສໍາລັບການປູກພືດເລັກນ້ອຍ/ການນໍາໃຊ້ເລັກນ້ອຍ. ມາດຕະການດັ່ງກ່າວ ອາດລວມເອົາບັນດາຂໍ້ກໍານົດທີ່ອະທິບາຍປະເພດຜະລິດຕະພັນຄວບຄຸມສັດຕູພືດ ທີ່ຖືກຍົກເວັ້ນຈາກການຈົດທະບຽນ ແລະ ຂັ້ນຕອນການຈົດທະບຽນລະອຽດ, ລວມທັງບັນດາຂໍ້ກໍານົດທີ່ຕິດພັນກັບການຈໍາໜ່າຍ, ການນໍາເຂົ້າ, ການເກັບຕົວຢ່າງ ແລະ ການກັກກັນ.*

### A82 ຂໍ້ຮຽກຮ້ອງໃຫ້ມີການທົດສອບ

ຂໍ້ຮຽກຮ້ອງສໍາລັບຜະລິດຕະພັນທີ່ຈະຖືກທົດສອບ ຕໍ່ກັບລະບຽບການທີ່ວາງອອກເຊັ່ນ MRL: ມາດຕະການນີ້ ລວມເອົາກໍລະນີທີ່ມີຂໍ້ຮຽກຮ້ອງໃຫ້ມີການເກັບຕົວຢ່າງ.

***ຕົວຢ່າງ:*** *ຕ້ອງມີການທົບສອບລະດັບຕົວຢ່າງຂອງໝາກກ້ຽງນໍາເຂົ້າ ເພື່ອກວດກາລະດັບສານຕົກຄ້າງສູງສຸດຂອງຢາປາບສັດຕູພືດ.*

### A83 ຂໍ້ຮຽກຮ້ອງໃຫ້ມີການຢັ້ງຢືນ

ການຢັ້ງຢືນຄວາມສອດຄ່ອງກັບລະບຽບການທີ່ວາງອອກ ທີ່ຮຽກຮ້ອງໂດຍປະເທດຜູ້ນໍາເຂົ້າ ແຕ່ອາດຖືກປະຕິບັດໃນປະເທດຜູ້ສົ່ງອອກ ຫຼື ປະເທດຜູ້ນໍາເຂົ້າ.

***ຕົວຢ່າງ:*** *ຕ້ອງມີໃບຢັ້ງຢືນຄວາມສອດຄ່ອງສໍາລັບວັດຖຸສິ່ງຂອງ ທີ່ຕິດພັນກັບອາຫານ (ຕູ້ຂົນສົ່ງສິນຄ້າ, ເຈ້ຍ, ຖົງຢາງ ແລະ ອື່ນໆ).*

### A84 ຂໍ້ຮຽກຮ້ອງໃຫ້ມີການກວດກາ

ຂໍ້ຮຽກຮ້ອງສໍາລັບການກວດກາຜະລິດຕະພັນໃນປະເທດຜູ້ນໍາເຂົ້າ. ເຊິ່ງອາດຖືກປະຕິບັດໂດຍໜ່ວຍງານລັດ ຫຼື ເອກະຊົນ. ມັນຄ້າຍຄືກັບການທົດສອບ, ແຕ່ບໍ່ໄດ້ລວມເອົາການທົດສອບໃນຫ້ອງທົດລອງ.

***ຕົວຢ່າງ:*** *ສິ້ນສ່ວນສັດ ແລະ ພືດພັນ ຕ້ອງຖືກກວດກາກ່ອນອະນຸຍາດນໍາເຂົ້າ.*

**A85 ຂໍ້ຮຽກຮ້ອງໃຫ້ມີການກວດຄືນຍ້ອນຫຼັງ**

ຂໍ້ຮຽກຮ້ອງໃຫ້ມີການເປີດເຜີຍຂໍ້ມູນ ທີ່ອະນຸຍາດໃຫ້ຕິດຕາມຜະລິດຕະພັນຜ່ານຂະບວນການຂອງການຜະລິດ, ການປຸງແຕ່ງ ແລະ ການຈຳໜ່າຍ.

**A851 ແຫຼ່ງກຳເນີດຂອງວັດຖຸດິບ ແລະ ສິ້ນສ່ວນ**

ການເປີດເຜີຍຂໍ້ມູນ ກ່ຽວກັບແຫຼ່ງກຳເນີດຂອງວັດຖຸດິບ ແລະ ສິ້ນສ່ວນ ທີ່ໃຊ້ເຂົ້າໃນຜະລິດຕະພັນຂັ້ນສຸດທ້າຍ.

***ຕົວຢ່າງ:*** *ສຳລັບຜັກ, ອາດຮຽກຮ້ອງໃຫ້ເປີດເຜີຍຂໍ້ມູນ ກ່ຽວກັບທີ່ຕັ້ງຂອງຟາມ, ຊື່ຂອງຊາວກະສິກອນ ຫຼື ຝຸ່ນຊີວະພາບທີ່ຖືກນຳໃຊ້.*

**A852 ປະຫວັດການປຸງແຕ່ງ**

ການເປີດເຜີຍຂໍ້ມູນ ກ່ຽວກັບທຸກຂັ້ນຕອນການຜະລິດ: ລວມມີທີ່ຕັ້ງຂອງຜູ້ຜະລິດ, ວິທີການປຸງແຕ່ງ ແລະ/ຫຼື ອຸປະກອນ ແລະ ວັດຖຸດິບທີ່ຖືກນຳໃຊ້.

***ຕົວຢ່າງ:*** *ສຳລັບຜະລິດຕະພັນຊີ້ນ, ອາດຮຽກຮ້ອງໃຫ້ມີການເປີດເຜີຍຂໍ້ມູນກ່ຽວກັບໂຮງຂ້າສັດ, ເຊັ່ນດຽວກັບ ໂຮງງານປຸງແຕ່ງອາຫານ.*

**A853 ການຈຳໜ່າຍ ແລະ ສະຖານທີ່ຕັ້ງຂອງຜະລິດຕະພັນຫຼັງຈັດສົ່ງແລ້ວ**

ການເປີດເຜີຍຂໍ້ມູນ ກ່ຽວກັບເວລາ ແລະ ວິທີ ທີ່ສິນຄ້າຖືກຈັດຈຳໜ່າຍຈາກເວລາທີ່ມີການຈັດສົ່ງໄປຫາຜູ້ຈຳໜ່າຍ ຈົນຮອດຜູ້ຊົມໃຊ້ສຸດທ້າຍ.

***ຕົວຢ່າງ:*** *ສຳລັບເຂົ້າ, ອາດຮຽກຮ້ອງໃຫ້ມີການເປີດເຜີຍຂໍ້ມູນກ່ຽວກັບສະຖານທີ່ຕັ້ງຂອງສິ່ງອຳນວຍຄວາມສະດວກໃນການເກັບຮັກສາຊົ່ວຄາວ.*

**A859 ຂໍ້ຮຽກຮ້ອງໃຫ້ມີການກວດສອບຄືນ, ທີ່ບໍ່ໄດ້ລະບຸໄວ້ຢູ່ບ່ອນໃດ**

**A86 ຂໍ້ຮຽກຮ້ອງໃຫ້ມີການກັກກັນ**

ຂໍ້ຮຽກຮ້ອງເພື່ອກັກກັນ ຫຼື ແຍກ ສັດ, ພືດ ຫຼື ຜະລິດຕະພັນພືດ ທີ່ມາເຖິງທ່າເຮືອ ຫຼື ສະຖານທີ່ໃດໜຶ່ງ ໃນໄລຍະເວລາທີ່ກຳນົດ ເພື່ອສະກັດກັ້ນການແຜ່ລະບາດຂອງເຊື້ອພະຍາດ ຫຼື ພະຍາດຕິດຕໍ່ ຫຼື ການປົນເປື້ອນ.

***ຕົວຢ່າງ:*** *ໝາທີ່ມີຊີວິດຕ້ອງໄດ້ຖືກກັກກັນ ເປັນເວລາ 2 ອາທິດ ກ່ອນຖືກອະນຸຍາດໃຫ້ເຂົ້າໄປໃນອານາເຂດນັ້ນ. ພືດພັນຈຳເປັນຕ້ອງຖືກກັກກັນເພື່ອຂ້າ ຫຼື ຈຳກັດການແຜ່ກະຈາຍຂອງສິ່ງທີ່ມີຊີວິດທີ່ເປັນອັນຕະລາຍ.*

**A89 ການປະເມີນຄວາມສອດຄ່ອງທີ່ຕິດພັນກັບມາດຕະການ SPS, ທີ່ບໍ່ໄດ້ລະບຸໄວ້ຢູ່ບ່ອນໃດ**

A9 ມາດຕະການ SPS, ທີ່ບໍ່ໄດ້ລະບຸໄວ້ຢູ່ບ່ອນໃດ

## B ສິ່ງກີດຂວາງທາງດ້ານເຕັກນິກຕໍ່ການຄ້າ

ບັນດາມາດຕະການທີ່ໝາຍເຖິງລະບຽບການດ້ານເຕັກນິກ ແລະ ຂັ້ນຕອນຕ່າງໆສຳລັບການປະເມີນຄວາມສອດຄ່ອງກັບລະບຽບການດ້ານເຕັກນິກ ແລະ ມາດຕະຖານ ເຊິ່ງບໍ່ລວມເອົາມາດຕະການທີ່ລວມຢູ່ໃນສັນຍາ SPS.

ລະບຽບການດ້ານເຕັກນິກ ແມ່ນເອກະສານທີ່ກຳນົດຄຸນລັກສະນະຂອງຜະລິດຕະພັນ ຫຼື ສິ່ງທີ່ຕິດພັນກັບຂະບວນການ ແລະ ວິທີການຜະລິດຕ່າງໆ, ລວມທັງເງື່ອນໄຂການບໍລິຫານທີ່ສາມາດນຳໃຊ້ໄດ້, ເຊິ່ງບັງຄັບໃຫ້ຕ້ອງປະຕິບັດຕາມ. ມັນອາດລວມເອົາຂໍ້ຮຽກຮ້ອງກ່ຽວຂ້ອງສະເພາະກັບຄຳສັບສະເພາະ, ສັນຍາລັກ, ການຫຸ້ມຫໍ່, ການໃສ່ເຄື່ອງໝາຍ ຫຼື ການຕິດສະຫຼາກດັ່ງທີ່ນຳໃຊ້ກັບຜະລິດຕະພັນ, ຂະບວນການການຜະລິດ ຫຼື ວິທີການຜະລິດ. ຂັ້ນຕອນການປະເມີນຄວາມສອດຄ່ອງແມ່ນຂັ້ນຕອນໃດໜຶ່ງ ທີ່ຖືກນຳໃຊ້ທາງກົງ ຫຼື ທາງອ້ອມ ເພື່ອກຳນົດວ່າຂໍ້ຮຽກຮ້ອງທີ່ກ່ຽວຂ້ອງໃນລະບຽບການດ້ານເຕັກນິກ ຫຼື ມາດຕະຖານໄດ້ຖືກປະຕິບັດຕາມ; ມັນອາດລວມເອົາລະຫວ່າງຂັ້ນຕອນສຳລັບການເລືອກຕົວຢ່າງ, ການທົດສອບ ແລະ ການກວດກາ; ການປະເມີນຜົນ, ການກວດສອບ ແລະ ການຮັບປະກັນຄວາມສອດຄ່ອງ, ການຮັບຮອງ ແລະ ການອະນຸມັດ ເຊັ່ນດຽວກັບການລວມມາດຕະການດັ່ງກ່າວເຂົ້າກັນ.

ບັນດາມາດຕະການທີ່ຈັດລຽງພາຍໃຕ້ຂໍ້ B1 ຈົນເຖິງ ຂໍ້ B7 ແມ່ນລະບຽບການດ້ານເຕັກນິກ ໃນຂະນະທີ່ມາດຕະການພາຍໃຕ້ຂໍ້ B8 ແມ່ນຂັ້ນຕອນການປະເມີນຄວາມສອດຄ່ອງ. ໃນລະຫວ່າງລະບຽບການດ້ານເຕັກນິກ, ມາດຕະການໃນຂໍ້ B4 ແມ່ນກ່ຽວຂ້ອງກັບຂະບວນການການຜະລິດ, ໃນຂະນະທີ່ມາດຕະການອື່ນແມ່ນນຳໃຊ້ໂດຍກົງຕໍ່ຜະລິດຕະພັນ.

### B1 ການເກືອດຫ້າມ/ການຈຳກັດການນຳເຂົ້າ ເພື່ອຈຸດປະສົງທີ່ກຳນົດໄວ້ສັນຍາ TBT

ການເກືອດຫ້າມ/ການຈຳກັດ ອາດຖືກກຳນົດຂຶ້ນດ້ວຍເຫດຜົນ ທີ່ຕິດພັນລະຫວ່າງຂໍ້ຮຽກຮ້ອງດ້ານຄວາມໝັ້ນຄົງຂອງຊາດ; ການສະກັດກັ້ນການປະຕິບັດທີ່ສໍ້ໂກງ; ການປົກປ້ອງສຸຂະພາບ ຫຼື ຄວາມປອດໄພຂອງຄົນ, ຊີວິດ ຫຼື ສຸຂະພາບຂອງສັດ ຫຼື ພືດ ຫຼື ສິ່ງແວດລ້ອມ. ປະລິມານສານຕົກຄ້າງທີ່ຍອມຮັບໄດ້ ຫຼື ການນຳໃຊ້ສານເຄມີສະເພາະໃດໜຶ່ງທີ່ ຢູ່ໃນຜະລິດຕະພັນຂັ້ນສຸດທ້າຍ ແມ່ນຖືກຈັດປະເພດພາຍໃຕ້ຂໍ້ B2 ລຸ່ມນີ້.

#### B11 ການເກືອດຫ້າມດ້ວຍເຫດຜົນດ້ານ TBT

ການເກືອດຫ້າມການນຳເຂົ້າ ດ້ວຍເຫດຜົນທີ່ວາງໄວ້ໃນຂໍ້ B1.

***ຕົວຢ່າງ:*** *ການນຳເຂົ້າສານອັນຕະລາຍແມ່ນຖືກເກືອດຫ້າມ ລວມມີທາດລະເບີດ, ສານພິດສະເພາະໃດໜຶ່ງທີ່ນອນຢູ່ພາຍໃຕ້ສົນທິສັນຍາບາເຊີລເຊັ່ນ: ກະປ໋ອງສີດທີ່ອັດດ້ວຍອາຍແກ໊ສທີ່ບັນຈຸສານ CFCs, ສານ HCFCs ແລະ BFCs ຫຼາຍຊະນິດ, ສານ halons, methyl chloroform ແລະ carbon tetrachloride.*

### B14 ຂໍ້ຮຽກຮ້ອງໃຫ້ມີການອະນຸຍາດດ້ວຍເຫດຜົນດ້ານ TBT

ຂໍ້ຮຽກຮ້ອງທີ່ຜູ້ນຳເຂົ້າຄວນໄດ້ຮັບການອະນຸຍາດ, ໃບອະນຸຍາດ ຫຼື ການອະນຸມັດຈາກອົງການຈັດຕັ້ງຂອງລັດທີ່ກ່ຽວຂ້ອງຂອງປະເທດປາຍທາງ, ດ້ວຍເຫດຜົນຕ່າງໆເຊັ່ນ: ຄວາມໝັ້ນຄົງຂອງຊາດ, ການປົກປັກຮັກສາສິ່ງແວດລ້ອມ ແລະ ອື່ນໆ.

***ຕົວຢ່າງ:*** *ການອະນຸຍາດການນຳເຂົ້າຢາ, ຂີ້ເຫຍື້ອ, ເສດສິ້ນສ່ວນ ແລະ ອາວຸດປືນ ແລະ ອື່ນໆ.*

### B15 ຂໍ້ຮຽກຮ້ອງໃຫ້ມີການຂຶ້ນທະບຽນດ້ວຍເຫດຜົນດ້ານ TBT

ຂໍ້ຮຽກຮ້ອງທີ່ຜູ້ນຳເຂົ້າຕ້ອງຂຶ້ນທະບຽນ ເພື່ອນຳເຂົ້າຜະລິດຕະພັນສະເພາະໃດໜຶ່ງ. ເພື່ອຂຶ້ນທະບຽນ, ຜູ້ນຳເຂົ້າອາດຈຳເປັນຕ້ອງປະຕິບັດຕາມຂໍ້ຮຽກຮ້ອງສະເພາະໃດໜຶ່ງ, ຄ່າທຳນຽມເອກະສານ ແລະ ການຂຶ້ນທະບຽນ. ເຊິ່ງຍັງລວມເອົາກໍລະນີຕ່າງໆ ເມື່ອຮຽກຮ້ອງໃຫ້ມີການຂຶ້ນທະບຽນການຜະລິດສິນຄ້າສະເພາະໃດໜຶ່ງ.

***ຕົວຢ່າງ:*** *ຜູ້ນຳເຂົ້າສິນຄ້າທີ່ກະທົບໄວເຊັ່ນ: ຢາປົວພະຍາດ, ຢາເສບຕິດ, ທາດລະເບີດ, ອາວຸດປືນ, ເຫຼົ້າ, ຢາສູບ, ເຄື່ອງຫຼິ້ນເກມ ແລະ ອື່ນໆ. ອາດຕ້ອງໄດ້ຂຶ້ນທະບຽນໃນປະເທດຜູ້ນຳເຂົ້າ.*

### B19 ການເກືອດຫ້າມ/ການຈຳກັດການນຳເຂົ້າ ເພື່ອຈຸດປະສົງທີ່ກຳນົດໄວ້ໃນສັນຍາ TBT, ທີ່ບໍ່ໄດ້ລະບຸໄວ້ຢູ່ບ່ອນໃດ

## B2 ປະລິມານສານຕົກຄ້າງທີ່ຍອມຮັບໄດ້ ແລະ ການຈຳກັດການນຳໃຊ້ສານຕ່າງໆ

### B21 ປະລິມານສານຕົກຄ້າງທີ່ຍອມຮັບໄດ້ ຫຼື ການປົນເປື້ອນຂອງສານເຄມີສະເພາະໃດໜຶ່ງ

ມາດຕະການທີ່ກຳນົດປະລິມານສານຕົກຄ້າງສູງສຸດ ຫຼື ປະລິມານສານຕ່າງໆທີ່ຍອມຮັບໄດ້, ທີ່ຖືກນຳໃຊ້ໃນລະຫວ່າງຂະບວນການການຜະລິດຂອງສານຕ່າງໆ ແຕ່ບໍ່ແມ່ນສ່ວນປະກອບທີ່ຕັ້ງໃຈ.

***ຕົວຢ່າງ:*** *ລະດັບທາດເກືອໃນຊີມັງ ຫຼື ລະດັບທາດມາດໃນນ້ຳມັນແອັດຊັງ ຕ້ອງ*

*ຢູ່ຕໍ່າກວ່າລະດັບທີ່ກໍານົດໄວ້.*

### B22 ການຈໍາກັດການນໍາໃຊ້ສານສະເພາະໃດໜຶ່ງ

ການຈໍາກັດການນໍາໃຊ້ສານເຄມີໃດໜຶ່ງ ເຊິ່ງເປັນອົງປະກອບ ຫຼື ວັດຖຸດິບເພື່ອປ້ອງກັນຄວາມສ່ຽງທີ່ເກີດຂຶ້ນຈາກການນໍາໃຊ້ສານດັ່ງກ່າວ.

***ຕົວຢ່າງ:*** *(a) ການຈໍາກັດການນໍາໃຊ້ຂອງສານລະລາຍໃນນໍ້າຂອງສີທາບ້ານ, (b) ລະດັບສູງສຸດຂອງສານກົ່ວທີ່ອະນຸຍາດໃຫ້ມີໃນນໍ້າສີທາບ້ານຂອງຜູ້ຊົມໃຊ້.*

## B3 ຂໍ້ຮຽກຮ້ອງໃຫ້ມີການຕິດສະຫຼາກ, ການໃສ່ເຄື່ອງໝາຍ ແລະ ການຫຸ້ມຫໍ່

### B31 ຂໍ້ຮຽກຮ້ອງໃຫ້ມີການຕິດສະຫຼາກ

ບັນດາມາດຕະການທີ່ກໍານົດຊະນິດ, ສີສັນ ແລະ ຂະໜາດຂອງການຈັດພິມໃສ່ຫີບຫໍ່ ແລະ ສະຫຼາກ ແລະ ການໃຫ້ນິຍາມຂໍ້ມູນ ທີ່ຄວນຖືກສະໜອງໃຫ້ຜູ້ຊົມໃຊ້. ການຕິດສະຫຼາກເປັນການສື່ສານດ້ວຍຕົວອັກສອນ, ອີເລັກໂຕຼນິກ ຫຼື ຮູບແຕ້ມໃສ່ສິ່ງຫຸ້ມຫໍ່ ຫຼື ໃນສິ່ງທີ່ແຍກອອກຕ່າງຫາກ ແຕ່ກ່ຽວຂ້ອງກັບສະຫຼາກ, ຫຼື ຢູ່ເທິງຜະລິດຕະພັນນັ້ນເອງ. ມັນອາດລວມເອົາຂໍ້ຮຽກຮ້ອງດ້ານພາສາທີ່ເປັນທາງການທີ່ຖືກນໍາໃຊ້ ເຊັ່ນດຽວກັບ ຂໍ້ມູນທາງດ້ານເຕັກນິກ ກ່ຽວກັບຜະລິດຕະພັນເຊັ່ນ: ແຮງດັນຂອງໄຟຟ້າ, ສ່ວນປະກອບ, ຄູ່ມືແນະນໍາວິທີການນໍາໃຊ້, ຄວາມປອດໄພ ແລະ ຄໍາແນະນໍາການຮັກສາຄວາມປອດໄພ.

***ຕົວຢ່າງ:*** *ຕູ້ເຢັນ ຈໍາເປັນຕ້ອງຕິດສະຫຼາກທີ່ສະແດງໃຫ້ເຫັນເຖິງຂະໜາດບັນຈຸ, ນໍ້າໜັກ ແລະ ລະດັບການຊົມໃຊ້ໄຟຟ້າ.*

### B32 ຂໍ້ຮຽກຮ້ອງໃຫ້ມີການໃສ່ເຄື່ອງໝາຍ

ບັນດາມາດຕະການທີ່ກໍານົດຂໍ້ມູນສໍາລັບການຂົນສົ່ງ ແລະ ການແຈ້ງພາສີເຊິ່ງການຂົນສົ່ງ/ການຈໍາໜ່າຍສິນຄ້າຫຸ້ມຫໍ່ ຄວນມີ.

***ຕົວຢ່າງ:*** *ເງື່ອນໄຂການຈັດການ ຫຼື ການເກັບຮັກສາ ອີງຕາມປະເພດຂອງຜະລິດຕະພັນ, ໂດຍທົ່ວໄປຂຽນເຄື່ອງໝາຍເຊັ່ນ: "ລະວັງແຕກ" ຫຼື "ເອົາທາງຫົວຂຶ້ນເທິງ". ສິ່ງເຫຼົ່ານີ້ຕ້ອງຖືກໃສ່ເຄື່ອງໝາຍໃນພາຊະນະບັນຈຸການຂົນສົ່ງ.*

### B33 ຂໍ້ຮຽກຮ້ອງດ້ານການຫຸ້ມຫໍ່

ບັນດາມາດຕະການທີ່ວາງອອກ ກ່ຽວກັບຮູບແບບຂອງສິນຄ້າທີ່ຕ້ອງການ ຫຼື ບໍ່ສາມາດຫຸ້ມຫໍ່ໄດ້ ແລະ ລະບຸວັດສະດຸທີ່ໃຊ້ໃນການຫຸ້ມຫໍ່.

*ຕົວຢ່າງ: ຖ້ານຮອງພາຊະນະບັນຈຸສິນຄ້າ ຫຼື ການຫຸ້ມຫໍ່ພິເສດ ຈຳເປັນຕ້ອງຖືກນຳໃຊ້ສຳລັບການປົກປ້ອງຜະລິດຕະພັນທີ່ກະທົບໄວ ຫຼື ແຕກຫັກງ່າຍ.*

## B4 ຂໍ້ຮຽກຮ້ອງດ້ານການຜະລິດ ຫຼື ຂະບວນການຫຼັງການຜະລິດ

**B41 ລະບຽບການ TBT ກ່ຽວກັບຂະບວນການການຜະລິດ**

ຂໍ້ຮຽກຮ້ອງ ກ່ຽວກັບຂະບວນການຜະລິດ ບໍ່ຖືກຈັດໄວ້ໃນມາດຕະການ SPS ຂ້າງເທິງ. ມັນຍັງບໍ່ລວມເອົາບັນດາມາດຕະການສະເພາະພາຍໃຕ້ ***B2: ປະລິມານສານຕົກຄ້າງທີ່ຍອມຮັບໄດ້ ແລະ ການຈຳກັດການນຳໃຊ້ສານຕ່າງໆ*** (ຫຼື ຫົວຂໍ້ຍ່ອຍ).

*ຕົວຢ່າງ: ການນຳໃຊ້ອຸປະກອນທີ່ເປັນມິດກັບສິ່ງແວດລ້ອມ ແມ່ນເປັນຂໍ້ບັງຄັບ.*

**B42 ລະບຽບການ TBT ກ່ຽວກັບການຂົນສົ່ງ ແລະ ການເກັບຮັກສາ**

ຂໍ້ຮຽກຮ້ອງ ກ່ຽວກັບເງື່ອນໄຂສະເພາະໃດໜຶ່ງ ເຊິ່ງຜະລິດຕະພັນຄວນຖືກເກັບຮັກສາ ແລະ/ຫຼື ຂົນສົ່ງ.

*ຕົວຢ່າງ: ເຄື່ອງຈັກ ຄວນຖືກເກັບຮັກສາ ຕ່ຳກວ່າອຸນຫະພູມສະເພາະໃດໜຶ່ງ.*

**B49 ຂໍ້ຮຽກຮ້ອງດ້ານການຜະລິດ ຫຼື ຂະບວນການຫຼັງການຜະລິດ, ທີ່ບໍ່ໄດ້ລະບຸໄວ້ຢູ່ບ່ອນໃດ**

## B6 ຂໍ້ຮຽກຮ້ອງໃຫ້ມີການລະບຸຜະລິດຕະພັນ

ບັນດາເງື່ອນໄຂທີ່ໄດ້ຮັບຄວາມເພິ່ງພໍໃຈ ເພື່ອລະບຸຜະລິດຕະພັນ ກັບຈຳພວກສະເພາະໃດໜຶ່ງ (ລວມມີສະຫຼາກຊີວະວິທະຍາ ຫຼື ອິນຊີ).

*ຕົວຢ່າງ: ເພື່ອໃຫ້ຜະລິດຕະພັນໄດ້ຮັບການລະບຸວ່າເປັນ "ຊັອກໂກແລັດ", ມັນຈຳເປັນຕ້ອງມີສ່ວນປະສົມຂອງໂກໂກ້ຢ່າງຕ່ຳ 30%.*

## B7 ຂໍ້ຮຽກຮ້ອງດ້ານຄຸນນະພາບຂອງຜະລິດຕະພັນ ຫຼື ປະສິດທິພາບການໃຊ້ງານ

ບັນດາເງື່ອນໄຂທີ່ໄດ້ຮັບຄວາມເພິ່ງພໍໃຈ ໃນດ້ານປະສິດທິພາບຂອງການໃຊ້ງານ (ຕົວຢ່າງ: ໄລຍະເວລາ, ຄວາມທົນທານຂອງການໃຊ້ງານ) ຫຼື ຄຸນນະພາບ (ຕົວຢ່າງ: ເນື້ອໃນຂອງສ່ວນປະສົມທີ່ຖືກລະບຸໄວ້).

*ຕົວຢ່າງ: ປະຕູຕ້ອງທົນທານຕໍ່ອຸນຫະພູມຕ່ຳສຸດສະເພາະໃດໜຶ່ງ.*

## B8 ການປະເມີນຄວາມສອດຄ່ອງທີ່ຕິດພັນກັບມາດຕະການ TBT

ຂໍ້ຮຽກຮ້ອງໃຫ້ມີການກວດສອບ ການຈັດຕັ້ງປະຕິບັດເງື່ອນໄຂດ້ານ TBT: ສິ່ງນີ້ສາມາດປະຕິບັດໄດ້ໂດຍໜຶ່ງຮູບແບບ ຫຼື ຫຼາຍຮູບແບບປະສົມປະສານກັນ ຂອງຂັ້ນຕອນການກວດກາ

ແລະ ການອະນຸມັດ, ລວມທັງຂັ້ນຕອນສຳລັບການເລືອກຕົວຢ່າງ, ການທົດສອບ ແລະ ການກວດກາ; ການປະເມີນຜົນ, ການກວດສອບ ແລະ ການຮັບປະກັນຄວາມສອດຄ່ອງ; ການຮັບຮອງ ແລະ ການອະນຸມັດ.

**B81 ຂໍ້ຮຽກຮ້ອງໃຫ້ມີການຈົດທະບຽນຜະລິດຕະພັນ**

ຂໍ້ຮຽກຮ້ອງໃຫ້ມີການຈົດທະບຽນຜະລິດຕະພັນໃນປະເທດຜູ້ນຳເຂົ້າ.

***ຕົວຢ່າງ:*** *ມີພຽງແຕ່ຢາເສບຕິດ ແລະ ຢາປົວພະຍາດທີ່ໄດ້ຈົດທະບຽນແລ້ວເທົ່ານັ້ນ ທີ່ສາມາດນຳເຂົ້າໄດ້.*

**B82 ຂໍ້ຮຽກຮ້ອງໃຫ້ມີການທົດສອບ**

ຂໍ້ຮຽກຮ້ອງສຳລັບຜະລິດຕະພັນທີ່ຈະຖືກທົດສອບ ຕໍ່ກັບລະບຽບການທີ່ວາງອອກເຊັ່ນ: ລະດັບປະສິດທິພາບການໃຊ້ງານ - ລວມທັງຂໍ້ຮຽກຮ້ອງໃຫ້ມີການເລືອກຕົວຢ່າງ.

***ຕົວຢ່າງ:*** *ຕ້ອງມີການທົດສອບຕົວຢ່າງຂອງພາຫະນະນຳເຂົ້າ ຕໍ່ກັບການປະຕິບັດຕາມຂໍ້ຮຽກຮ້ອງດ້ານຄວາມປອດໄພ, ອຸປະກອນຕ່າງໆ ແລະ ອື່ນໆ.*

**B83 ຂໍ້ຮຽກຮ້ອງໃຫ້ມີການຢັ້ງຢືນ**

ຕ້ອງມີການຢັ້ງຢືນຄວາມສອດຄ່ອງຕາມລະບຽບການທີ່ວາງອອກ: ທີ່ຮຽກຮ້ອງໂດຍປະເທດຜູ້ນຳເຂົ້າ ແຕ່ອາດຖືກປະຕິບັດໃນປະເທດຜູ້ສົ່ງອອກ ຫຼື ຜູ້ນຳເຂົ້າ.

***ຕົວຢ່າງ:*** *ຕ້ອງມີໃບຢັ້ງຢືນຄວາມສອດຄ່ອງສຳລັບຜະລິດຕະພັນອີເລັກໂຕຼນິກ.*

**B84 ຂໍ້ຮຽກຮ້ອງໃຫ້ມີການກວດກາ**

ຂໍ້ຮຽກຮ້ອງສຳລັບການກວດກາຜະລິດຕະພັນໃນປະເທດຜູ້ນຳເຂົ້າ - ອາດຈະຖືກປະຕິບັດໂດຍພາກລັດ ຫຼື ພາກເອກະຊົນ. ມັນຄ້າຍຄືກັບການທົດສອບ, ແຕ່ບໍ່ໄດ້ລວມເອົາການທົດສອບຜ່ານຫ້ອງແລັບ.

***ຕົວຢ່າງ:*** *ການນຳເຂົ້າເຄື່ອງຕັດຫຍິບ ແລະ ເຄື່ອງນຸ່ງຮົ່ມ ຕ້ອງຖືກກວດກາຂະໜາດ ແລະ ວັດຖຸດິບທີ່ນຳໃຊ້ກ່ອນໄດ້ຮັບອະນຸຍາດນຳເຂົ້າ.*

**B85 ຂໍ້ຮຽກຮ້ອງໃຫ້ມີການກວດຄືນຍ້ອນຫຼັງ**

ຂໍ້ຮຽກຮ້ອງໃຫ້ມີການເປີດເຜີຍຂໍ້ມູນ ທີ່ອະນຸຍາດໃຫ້ຕິດຕາມຜະລິດຕະພັນຜ່ານຂະບວນການຂອງການຜະລິດ, ການປຸງແຕ່ງ ແລະ ການຈຳໜ່າຍ.

**B851 ແຫຼ່ງກຳເນີດຂອງວັດຖຸດິບ ແລະ ສິ້ນສ່ວນ**

ການເປີດເຜີຍຂໍ້ມູນ ກ່ຽວກັບແຫຼ່ງກຳເນີດຂອງວັດຖຸດິບ ແລະ ສິ້ນ

ສ່ວນ ທີ່ໃຊ້ເຂົ້າໃນຜະລິດຕະພັນຂັ້ນສຸດທ້າຍ.

***ຕົວຢ່າງ:*** *ອຸດສາຫະກຳຍານພາຫະນະ ຕ້ອງບັນທຶກແຫຼ່ງກຳເນີດຂອງເອກະສານຕົ້ນສະບັບຂອງຢາງລົດ ສຳລັບຍານພາຫະນະແຕ່ລະຄັນ.*

**B852 ປະຫວັດການປຸງແຕ່ງ**

ການເປີດເຜີຍຂໍ້ມູນທັງໝົດ ກ່ຽວກັບທຸກຂັ້ນຕອນການຜະລິດ: ອາດລວມມີ ທີ່ຕັ້ງຂອງຜູ້ຜະລິດ, ວິທີການປຸງແຕ່ງ ແລະ/ຫຼື ອຸປະກອນ ແລະ ວັດຖຸດິບທີ່ຖືກນຳໃຊ້.

***ຕົວຢ່າງ:*** *ສຳລັບຜະລິດຕະພັນເຄື່ອງນຸ່ງຫົ່ມທີ່ເຮັດດ້ວຍຂົນສັດ ໃຫ້ເປີດເຜີຍຂໍ້ມູນ ກ່ຽວກັບແຫຼ່ງກຳເນີດຂອງແກະ, ສະຖານທີ່ຂອງໂຮງງານຕັດຫຍິບ ເຊັ່ນດຽວກັບ ຕ້ອງມີການລະບຸຜູ້ຜະລິດເຄື່ອງນຸ່ງຫົ່ມຜູ້ສຸດທ້າຍ.*

**B853 ການຈຳໜ່າຍ ແລະ ສະຖານທີ່ຕັ້ງຂອງຜະລິດຕະພັນຫຼັງຈັດສົ່ງແລ້ວ**

ການເປີດເຜີຍຂໍ້ມູນ ກ່ຽວກັບເວລາ ແລະ ວິທີ ທີ່ສິນຄ້າຖືກຈັດຈຳໜ່າຍໃນລະຫວ່າງເວລາໃດໜຶ່ງຫຼັງການຜະລິດ ແລະ ກ່ອນການຊົມໃຊ້ຂັ້ນສຸດທ້າຍ.

***ຕົວຢ່າງ:*** *ກ່ອນການແຈກຢາຍຜະລິດຕະພັນເຄື່ອງສຳອາງນຳເຂົ້າໃນຕະຫຼາດເອີຣົບ, ຜູ້ຮັບຜິດຊອບຕ້ອງຊີ້ແຈງ ຕໍ່ອົງການຈັດຕັ້ງທີ່ມີສິດອຳນາດຂອງປະເທດສະມາຊິກ ບ່ອນທີ່ຜະລິດຕະພັນໄດ້ຖືກນຳເຂົ້າເບື້ອງຕົ້ນ, ທີ່ຢູ່ຂອງໂຮງງານຜະລິດ ຫຼື ທີ່ຢູ່ຂອງຜູ້ນຳເຂົ້າ.*

**B859 ຂໍ້ຮຽກຮ້ອງໃຫ້ມີການກວດຄືນຍ້ອນຫຼັງ, ທີ່ບໍ່ໄດ້ລະບຸໄວ້ຢູ່ບ່ອນໃດ**

**B89 ການປະເມີນຄວາມສອດຄ່ອງທີ່ຕິດພັນກັບມາດຕະການ TBT, ທີ່ບໍ່ໄດ້ລະບຸໄວ້ຢູ່ບ່ອນໃດ**

## C ການກວດກາສິນຄ້າກ່ອນການຂົນສົ່ງ ແລະ ລະບຽບການອື່ນ

### C1 ການກວດກາສິນຄ້າກ່ອນການຂົນສົ່ງ

ຄຸນນະພາບ, ປະລິມານ ແລະ ການຄວບຄຸມລາຄາສິນຄ້າທີ່ຈຳເປັນ ກ່ອນການຂົນສົ່ງຈາກປະເທດສົ່ງອອກ, ຈັດຕັ້ງປະຕິບັດໂດຍອົງການກວດກາອິດສະຫຼະ ທີ່ຖືກມອບໝາຍໂດຍອົງການຈັດຕັ້ງທີ່ມີສິດອຳນາດຂອງປະເທດຜູ້ນຳເຂົ້າ.

***ຕົວຢ່າງ:*** *ຕ້ອງໄດ້ຮັບການກວດກາສິນຄ້າກ່ອນການຂົນສົ່ງ ຂອງການນຳເຂົ້າເຄື່ອງຕັດ*

*ຫຍິບ ໂດຍປະເທດທີ 3 ເພື່ອການກວດສອບສີສັນ ແລະ ປະເພດຂອງວັດຖຸດິບ.*

### C2 ຂໍ້ຮຽກຮ້ອງໃຫ້ມີການຂົນສົ່ງໂດຍກົງ

ຂໍ້ຮຽກຮ້ອງທີ່ສິນຄ້າ ຕ້ອງຖືກຂົນສົ່ງໂດຍກົງຈາກປະເທດຕົ້ນກຳເນີດ, ໂດຍປາສະຈາກການຢຸດພັກໃນປະເທດທີ 3.

***ຕົວຢ່າງ:*** *ສິນຄ້ານຳເຂົ້າພາຍໃຕ້ລະບົບບູລິມະສິດເຊັ່ນ: GSP ຕ້ອງຖືກຂົນສົ່ງໂດຍກົງຈາກປະເທດຕົ້ນກຳເນີດຂອງສິນຄ້າ ເພື່ອຕອບສະໜອງຕໍ່ບັນດາເງື່ອນໄຂດ້ານລະບຽບແຫຼ່ງກຳເນີດຂອງລະບົບດັ່ງກ່າວ (ຕົວຢ່າງ: ເພື່ອຮັບປະກັນວ່າຜະລິດຕະພັນຍັງບໍ່ຖືກດັດແປງສະພາບ, ປຸ່ງແຕ່ງ ຫຼື ປຸງແຕ່ງເພີ່ມເຕີມໃນປະເທດຜ່ານແດນທີ 3 ໄດ້).*

### C3 ຂໍ້ຮຽກຮ້ອງໃຫ້ຜ່ານດ່ານພາສີສະເພາະ

ພັນທະຂອງການນຳເຂົ້າ ທີ່ຕ້ອງຜ່ານຈຸດນຳເຂົ້າ ແລະ/ຫຼື ຫ້ອງການພາສີ ທີ່ໄດ້ກຳນົດໄວ້ ສຳລັບການກວດກາ, ການທົດສອບ ແລະ ອື່ນໆ.

***ຕົວຢ່າງ:*** *ເຄື່ອງຫຼິ້ນ DVD ຕ້ອງແຈ້ງເສຍພາສີຢູ່ຫ້ອງການພາສີທີ່ໄດ້ກຳນົດໄວ້ ສຳລັບການກວດກາ.*

### C4 ຂໍ້ຮຽກຮ້ອງໃຫ້ມີການຕິດຕາມ ແລະ ການເຝົ້າລະວັງການນຳເຂົ້າ ແລະ ມາດຕະການການອອກໃບອະນຸຍາດແບບອັດຕະໂນມັດອື່ນໆ

ບັນດາມາດຕະການດ້ານການບໍລິຫານ ເຊິ່ງພະຍາຍາມທີ່ຈະຕິດຕາມມູນຄ່າ ຫຼື ປະລິມານການນຳເຂົ້າຂອງຜະລິດຕະພັນສະເພາະ.

***ຕົວຢ່າງ:*** *ຕ້ອງມີໃບອະນຸຍາດນຳເຂົ້າແບບອັດຕະໂນມັດ ເພື່ອເປັນຂັ້ນຕອນດ້ານການບໍລິຫານ ສຳລັບເຄື່ອງຕັດຫຍິບ ແລະ ເຄື່ອງນຸ່ງຫົ່ມ ກ່ອນການນຳເຂົ້າ.*

### C9 ລະບຽບການອື່ນໆ, ທີ່ບໍ່ໄດ້ລະບຸໄວ້ຢູ່ບ່ອນໃດ

## D ມາດຕະການສຸກເສີນເພື່ອປົກປ້ອງການຄ້າ

ບັນດາມາດຕະການທີ່ໄດ້ຮັບການຈັດຕັ້ງປະຕິບັດ ໂດຍສະເພາະເພື່ອຕອບໂຕ້ ກັບຜົນກະທົບທາງລົບຂອງການນຳເຂົ້າໃນຕະຫຼາດຂອງປະເທດຜູ້ນຳເຂົ້າ, ລວມມີມາດຕະການທີ່ແນໃສ່ການປະຕິບັດການຄ້າຕ່າງປະເທດທີ່ບໍ່ເປັນທຳ, ມາດຕະການທີ່ຂຶ້ນຢູ່ກັບການປະຕິບັດຕາມຂໍ້ຮຽກຮ້ອງດ້ານຂັ້ນຕອນ ແລະ ຂໍ້ຮຽກຮ້ອງທີ່ສຳຄັນສະເພາະໃດໜຶ່ງ.

### D1 ມາດຕະການການຕ້ານການທຸ້ມຕະຫຼາດ

ມາດຕະການຊາຍແດນ ທີ່ຖືກນຳໃຊ້ກັບການນຳເຂົ້າສິນຄ້າຈາກຜູ້ສົ່ງອອກ. ການນຳເຂົ້າດັ່ງກ່າວ ໄດ້ຖືກທຸ້ມລາຄາ ແລະ ກໍ່ໃຫ້ເກີດຜົນເສຍຫາຍຕໍ່ອຸດສາຫະກຳພາຍໃນທີ່

ຜະລິດສິນຄ້າຊະນິດດຽວກັນ, ຫຼື ຕໍ່ຜູ້ສົ່ງອອກຂອງປະເທດທີ 3 ຂອງສິນຄ້າດັ່ງກ່າວ. ການທຸ້ມຕະຫຼາດ ເກີດຂຶ້ນເມື່ອສິນຄ້າໄດ້ຖືກນຳເຂົ້າມາໃນຕະຫຼາດຂອງປະເທດຜູ້ນຳເຂົ້າໃນລາຄາທີ່ຕໍ່າກວ່າລາຄາຂາຍປົກກະຕິ, ໂດຍທົ່ວໄປແມ່ນກໍລະນີທີ່ລາຄາສົ່ງອອກຂອງສິນຄ້ານັ້ນ ຖືກກວ່າລາຄາປຽບທຽບໃນການຄ້າຂາຍແບບທຳມະດາ ສຳລັບສິນຄ້າຊະນິດດຽວກັນ ທີ່ຂາຍສຳລັບການບໍລິໂພກໃນປະເທດຜູ້ສົ່ງອອກ. ມາດຕະການຕ້ານ

ການທຸ້ມຕະຫຼາດ ອາດເກີດຂຶ້ນໃນຮູບແບບຂອງການເກັບພາສີເພີ່ມເຕີມ ຫຼື ການຍົກລາຄາສິນຄ້າຂຶ້ນ ທີ່ປະຕິບັດໂດຍບໍລິສັດສົ່ງອອກ.

**D11 ການສືບສວນການຕ້ານການທຸ້ມຕະຫຼາດ**

ການສືບສວນໄດ້ຖືກລິເລີ່ມ ແລະ ຈັດຕັ້ງປະຕິບັດຕາມຄຳຮ້ອງຟ້ອງໂດຍອຸດສາຫະກຳພາຍໃນທີ່ຜະລິດສິນຄ້າຊະນິດດຽວກັນ ຫຼື (ໃນກໍລະນີພິເສດ) ການລິເລີ່ມດ້ວຍຕົນເອງ ໂດຍອົງການຈັດຕັ້ງທີ່ມີສິດອຳນາດຂອງປະເທດຜູ້ນຳເຂົ້າ ເພື່ອຕັດສິນວ່າການທຸ້ມຕະຫຼາດຂອງສິນຄ້າແມ່ນກຳລັງເກີດຂຶ້ນ ແລະ ກໍ່ຄວາມເສຍຫາຍໃຫ້ແກ່ຜູ້ຜະລິດພາຍໃນ (ຫຼື ຜູ້ສົ່ງອອກຂອງປະເທດທີ 3) ຂອງສິນຄ້າຊະນິດດຽວກັນ. ເຊິ່ງອາດນຳໃຊ້ພາສີນຳເຂົ້າສະເພາະ ໃນລະຫວ່າງການສືບສວນ.

***ຕົວຢ່າງ:*** *ການສືບສວນການຕ້ານການທຸ້ມຕະຫຼາດ ໄດ້ຖືກລິເລີ່ມໂດຍສະຫະພາບເອີຣົບ ທີ່ກ່ຽວຂ້ອງກັບການນຳເຂົ້າເຫຼັກເສັ້ນຈາກປະເທດ A.*

**D12 ການຕ້ານການທຸ້ມຕະຫຼາດດ້ວຍການໃຊ້ພາສີ**

ພາສີທີ່ເກັບຈາກການນຳເຂົ້າຂອງສິນຄ້າສະເພາະ ທີ່ມີແຫຼ່ງກຳເນີດຈາກປະເທດຄູ່ຄ້າສະເພາະໃດໜຶ່ງ ເພື່ອຊົດເຊີຍການທຸ້ມຕະຫຼາດທີ່ກໍ່ໃຫ້ເກີດຜົນເສຍຫາຍ ທີ່ຖືກຄົ້ນພົບຜ່ານການສືບສວນ. ໂດຍທົ່ວໄປພາສີນຳເຂົ້າຖືກນຳໃຊ້ກັບວິສາຫະກິດສະເພາະໃດໜຶ່ງ.

***ຕົວຢ່າງ:*** *ພາສີຂອງການຕ້ານການທຸ້ມຕະຫຼາດລະຫວ່າງ 8.5 ຫາ 36.2% ໄດ້ຖືກວາງອອກ ຕໍ່ກັບການນຳເຂົ້ານ້ຳມັນຊີວະພາບຈາກປະເທດ A.*

**D13 ການປະຕິບັດມາດຕະການດ້ານລາຄາ**

ມາດຕະການນີ້ ໄດ້ຖືກປະຕິບັດໂດຍຜູ້ສົ່ງອອກ ເພື່ອເພີ່ມລາຄາສິນຄ້າສົ່ງອອກຂອງຕົນ (ໂດຍບໍ່ໃຫ້ສູງກວ່າຂອບເຂດຂອງການທຸ້ມຕະຫຼາດ) ເພື່ອຫຼີກລ້ຽງການເກັບພາສີຂອງການຕ້ານການທຸ້ມຕະຫຼາດ. ການເຈລະຈາເພື່ອຈັດຕັ້ງປະຕິບັດລາຄາດັ່ງກ່າວສຳລັບຈຸດປະສົງນີ້ ຈະເກີດຂຶ້ນກໍ່ຕໍ່ເມື່ອມີການຕັດສິນໃຈເບື້ອງຕົ້ນວ່າການທຸ້ມຕະຫຼາດນຳເຂົ້າ ແມ່ນໄດ້ກໍ່ໃຫ້ເກີດຄວາມເສຍຫາຍແທ້.

***ຕົວຢ່າງ:*** *ກໍລະນີການຕ້ານການທຸ້ມຕະຫຼາດ ກ່ຽວຂ້ອງກັບການນຳເຂົ້າແຜ່ນເຫຼັກລີດທີ່ມາຈາກເຫຼັກໄຟຟ້າຊີລີຄອນ ທີ່ສົ່ງຜົນຕໍ່ໃຫ້ໂຮງງານຜະລິດພາຍໃນ ສະນັ້ນຈຶ່ງຕ້ອງໄດ້ນຳໃຊ້ມາດຕະການດ້ານລາຄາ ເພື່ອເພີ່ມລາຄາສິນຄ້າສົ່ງອອກ.*

## D2 ມາດຕະການຕອບໂຕ້ການອຸດໜູນ

ມາດຕະການຊາຍແດນ ທີ່ຖືກນຳໃຊ້ໃນການນຳເຂົ້າສິນຄ້າ ເພື່ອຊົດເຊີຍການອຸດໜູນທາງກົງ ຫຼື ທາງອ້ອມໂດຍອົງການຈັດຕັ້ງທີ່ມີສິດອຳນາດໃນປະເທດຜູ້ສົ່ງອອກ ໃນກໍລະນີການນຳເຂົ້າສິນຄ້າດັ່ງກ່າວໄດ້ຮັບການອຸດໜູນ ຈາກປະເທດສົ່ງອອກທີ່ກໍ່ຄວາມເສຍຫາຍຕໍ່ອຸດສາຫະກຳພາຍໃນທີ່ຜະລິດສິນຄ້າຊະນິດດຽວກັນໃນປະເທດຜູ້ນຳເຂົ້າ. ບັນດາມາດຕະການຕອບໂຕ້ການອຸດໜູນ ອາດຢູ່ໃນຮູບແບບຂອງການຕອບໂຕ້ດ້ວຍພາສີ ຫຼື ຖືກປະຕິບັດຕໍ່ບັນດາທຸລະກິດສົ່ງອອກ ຫຼື ອົງການຈັດຕັ້ງທີ່ມີສິດອຳນາດຂອງປະເທດທີ່ອຸດໜູນ.

### D21 ການສືບສວນການຕອບໂຕ້ການອຸດໜູນ

ການສືບສວນໄດ້ຖືກເລີ່ມຕົ້ນ ແລະ ປະຕິບັດຕາມຄຳຮ້ອງຟ້ອງໂດຍອຸດສາຫະກຳພາຍໃນທີ່ຜະລິດສິນຄ້າຊະນິດດຽວກັນ ຫຼື (ໃນກໍລະນີພິເສດ) ການລິເລີ່ມດ້ວຍຕົນເອງ ໂດຍອົງການຈັດຕັ້ງທີ່ມີສິດອຳນາດຂອງປະເທດຜູ້ນຳເຂົ້າ ເພື່ອຕັດສິນວ່າສິນຄ້າທີ່ນຳເຂົ້າແມ່ນມີການອຸດໜູນ ແລະ ກຳລັງກໍ່ຄວາມເສຍຫາຍແກ່ຜູ້ຜະລິດພາຍໃນຂອງສິນຄ້າຊະນິດດຽວກັນ.

***ຕົວຢ່າງ:*** *ການສືບສວນການຕອບໂຕ້ ໄດ້ຖືກລິເລີ່ມໂດຍປະເທດການາດາ ທີ່ກ່ຽວຂ້ອງກັບການນຳເຂົ້ານ້ຳມັນເຊື້ອໄຟສົ່ງຜ່ານທໍ່ຈາກປະເທດ A.*

### D22 ການຕອບໂຕ້ການອຸດໜູນດ້ວຍການໃຊ້ພາສີ

ພາສີທີ່ເກັບຈາກການນຳເຂົ້າສິນຄ້າສະເພາະໃດໜຶ່ງ ເພື່ອຊົດເຊີຍຜົນເສຍຫາຍຂອງການອຸດໜູນ ໂດຍປະເທດຜູ້ສົ່ງອອກຕໍ່ການຜະລິດ ຫຼື ການຄ້າຂອງສິນຄ້ານັ້ນ, ເຊິ່ງການສືບສວນໄດ້ພົບວ່າ ການນຳເຂົ້າທີ່ໄດ້ຮັບການອຸດໜູນ ກຳລັງກໍ່ຄວາມເສຍຫາຍຕໍ່ອຸດສາຫະກຳພາຍໃນທີ່ຜະລິດສິນຄ້າຊະນິດດຽວກັນ.

***ຕົວຢ່າງ:*** *ການຕອບໂຕ້ດ້ວຍການໃຊ້ພາສີ 44.71% ໄດ້ຖືກວາງອອກໂດຍປະເທດເມັກຊີໂກ ຕໍ່ການນຳເຂົ້າສານ Semiconductors ຂອງໜ່ວຍຄວາມຈຳຂໍ້ມູນຂອງຄອມພິວເຕີ (DRAM) ຈາກປະເທດ A.*

### D23 ການປະຕິບັດມາດຕະການດ້ານລາຄາ

ທັງເປັນການປະຕິບັດມາດຕະການໂດຍຜູ້ສົ່ງອອກ ເພື່ອເພີ່ມລາຄາຂອງການສົ່ງອອກຂອງຕົນ (ໂດຍບໍ່ໃຫ້ເກີນອັດຕາຂອງການອຸດໜູນ), ຫຼື ການປະຕິບັດໂດຍອີງການຈັດຕັ້ງທີ່ມີສິດອຳນາດຂອງປະເທດຜູ້ອຸດໜູນ ເພື່ອລົບລ້າງ ຫຼື ຈຳກັດການອຸດໜູນ ຫຼື ການນຳໃຊ້ມາດຕະການອື່ນໆ ທີ່ກ່ຽວຂ້ອງກັບຜົນກະທົບຂອງມັນ ເພື່ອຫຼີກລ້ຽງການເກັບພາສີຂອງມາດຕະການຕອບໂຕ້ການອຸດໜູນ.

ການເຈລະຈາເພື່ອຈັດຕັ້ງປະຕິບັດລາຄາດັ່ງກ່າວ ຈະເກີດຂຶ້ນກໍ່ຕໍ່ເມື່ອມີການຕັດສິນໃຈເບື້ອງຕົ້ນວ່າ ການທຸ້ມຕະຫຼາດນຳເຂົ້າ ກໍ່ໃຫ້ເກີດຄວາມເສຍຫາຍແທ້.

***ຕົວຢ່າງ:*** *ການສືບສວນການນຳໃຊ້ພາສີຕອບໂຕ້ການອຸດໜູນ ກ່ຽວຂ້ອງກັບນ້ຳມັນປາມ ແລະ ເນີຍທຽມ ສຳລັບຂະໜົມຫວານຈາກປະເທດ A ມີຜົນເຮັດໃຫ້ລັດຖະບານປະເທດ A ປະຕິບັດການລົບລ້າງການອຸດໜູນຕໍ່ສິນຄ້ານັ້ນຢ່າງເຕັມສ່ວນ.*

## D3 ມາດຕະການການປົກປ້ອງ

### D31 ມາດຕະການການປົກປ້ອງທົ່ວໄປ (ຫຼາຍຝ່າຍ)

ມາດຕະການຊາຍແດນຊົ່ວຄາວ ທີ່ຖືກວາງອອກຕໍ່ການນຳເຂົ້າສິນຄ້າ ເພື່ອປ້ອງກັນ ຫຼື ແກ້ໄຂຄວາມເສຍຫາຍອັນຮ້າຍແຮງ ທີ່ເກີດຂຶ້ນໂດຍການນຳເຂົ້າທີ່ເພີ່ມຂຶ້ນຂອງສິນຄ້າ ແລະ ເພື່ອອຳນວຍຄວາມສະດວກຕໍ່ການປັບປຸງ. ກໍລະນີມີການນຳເຂົ້າສິນຄ້າເພີ່ມຂຶ້ນ ແລະ ກໍ່ໃຫ້ເກີດຄວາມເສຍຫາຍ ຫຼື ກຳລັງກໍ່ໃຫ້ເກີດຄວາມເສຍຫາຍຮ້າຍແຮງ ຫຼື ໄພຂົ່ມຂູ່ ຕໍ່ອຸດສາຫະກຳພາຍໃນທີ່ຜະລິດສິນຄ້າຊະນິດດຽວກັນ ຫຼື ສິນຄ້າຄູ່ແຂ່ງໂດຍກົງ ແລະ ການສືບສວນໄດ້ຖືກຈັດຕັ້ງຂຶ້ນ, ເຊິ່ງປະເທດຜູ້ນຳເຂົ້າອາດນຳໃຊ້ມາດຕະການປົກປ້ອງ (ການໂຈະການນຳເຂົ້າຊົ່ວຄາວ) ຕໍ່ກັບການນຳເຂົ້າສິນຄ້າດັ່ງກ່າວ ຈາກທຸກແຫຼ່ງ. ມາດຕະການປົກປ້ອງ ສາມາດນຳໃຊ້ໄດ້ຫຼາຍຮູບແບບ, ລວມມີການເພີ່ມພາສີ, ການຈຳກັດດ້ານປະລິມານ ແລະ ອື່ນໆ (ຕົວຢ່າງ: ໂກຕ້າອັດຕາພາສີ, ມາດຕະການອີງໃສ່ລາຄາ, ອາກອນພິເສດຕ່າງໆ ແລະ ອື່ນໆ).[2]

#### D311 ການສືບສວນການປົກປ້ອງຕະຫຼາດ

ການສືບສວນ ໄດ້ຖືກປະຕິບັດໂດຍອີງການຈັດຕັ້ງທີ່ມີສິດອຳນາດຂອງ

---

[2] ເຖິງແມ່ນວ່າການຈຳກັດດ້ານປະລິມານ ແມ່ນຖືກເກືອດຫ້າມໂດຍສັນຍາ WTO, ພາຍໃຕ້ສັນຍາວ່າດ້ວຍການປົກປ້ອງ, ມາດຕະການການປົກປ້ອງໃນຮູບແບບນີ້ແມ່ນໄດ້ຮັບອະນຸຍາດ, ຂຶ້ນຢູ່ກັບບັນດາເງື່ອນໄຂສະເພາະໃດໜຶ່ງ.

ປະເທດຜູ້ນຳເຂົ້າ ເພື່ອຕັດສິນວ່າສິນຄ້າທີ່ສົ່ງຜົນກະທົບ ໄດ້ຖືກນຳເຂົ້າໃນປະລິມານທີ່ເພີ່ມຂຶ້ນ ແລະ ພາຍໃຕ້ບັນດາເງື່ອນໄຂດັ່ງກ່າວ ຫຼື ບໍ່ເຊິ່ງກໍ່ໃຫ້ເກີດຄວາມເສຍຫາຍອັນຮ້າຍແຮງ ຫຼື ໄພຂົ່ມຂູ່ ຕໍ່ອຸດສາຫະກຳພາຍໃນທີ່ຜະລິດສິນຄ້າຊະນິດດຽວກັນ ຫຼື ສິນຄ້າທີ່ມີຄູ່ແຂ່ງໂດຍກົງ.

***ຕົວຢ່າງ:*** *ປະເທດ A ໄດ້ລິເລີ່ມການສືບສວນການປົກປ້ອງ ກ່ຽວກັບການນຳເຂົ້າລົດຈັກສະເພາະໃດໜຶ່ງ.*

## D312 ມາດຕະການປົກປ້ອງດ້ວຍການໃຊ້ພາສີ

ການເກັບພາສີຊົ່ວຄາວຕໍ່ສິນຄ້ານຳເຂົ້າສະເພາະ ເພື່ອປ້ອງກັນ ຫຼື ແກ້ໄຂຄວາມເສຍຫາຍຮ້າຍແຮງຈາກການນຳເຂົ້າທີ່ເພີ່ມຂຶ້ນ (ດັ່ງທີ່ການສືບສວນໄດ້ຈັດຕັ້ງຂຶ້ນ), ແລະ ເພື່ອອຳນວຍຄວາມສະດວກໃນການປັບປຸງ ເຊິ່ງໄລຍະເວລາຂອງການນຳໃຊ້ມາດຕະການພາສີທີ່ຄາດໄວ້ແມ່ນຫຼາຍກວ່າໜຶ່ງປີ ແລະ ມັນຕ້ອງມີລັກສະນະຫຼຸດລົງຕາມລຳດັບໃນໄລຍະເວລາຂອງການນຳໃຊ້.

***ຕົວຢ່າງ:*** *ມາດຕະການປົກປ້ອງດ້ວຍການໃຊ້ພາສີເປັນເວລາ 3 ປີ ໄດ້ຖືກວາງອອກຕໍ່ກັບການນຳເຂົ້າສານ "Gamma Ferric Oxide". ໃນລະຫວ່າງປີທຳອິດອັດຕາພາສີຈະແມ່ນ 15%, 10% ໃນລະ ຫວ່າງປີທີ 2 ແລະ 5% ໃນລະຫວ່າງປີທີ 3.*

## D313 ມາດຕະການປົກປ້ອງດ້ວຍການຈຳກັດປະລິມານ

ມາດຕະການປົກປ້ອງດ້ວຍການຈຳກັດປະລິມານຊົ່ວຄາວ ຕໍ່ສິນຄ້າສະເພາະເພື່ອປ້ອງກັນ ຫຼື ແກ້ໄຂຄວາມເສຍຫາຍຮ້າຍແຮງຈາກການນຳເຂົ້າທີ່ເພີ່ມຂຶ້ນ (ດັ່ງທີ່ການສືບສວນໄດ້ຈັດຕັ້ງຂຶ້ນ) ແລະເພື່ອອຳນວຍຄວາມສະດວກໃນການປັບປຸງ. ລະບຽບທີ່ນຳໃຊ້ ແມ່ນກ່ຽວກັບລະດັບ ແລະ ການແບ່ງປັນໂກຕ້າ. ໄລຍະເວລາຂອງການນຳໃຊ້ມາດຕະການທີ່ຄາດໄວ້ແມ່ນຫຼາຍກວ່າໜຶ່ງປີ ແລະ ມັນຕ້ອງມີລັກສະນະຫຼຸດລົງຕາມລຳດັບໃນໄລຍະເວລາຂອງການນຳໃຊ້.

***ຕົວຢ່າງ:*** *ມາດຕະການປົກປ້ອງດ້ານປະລິມານ (ໂກຕ້າ) ໃນໄລຍະເວລາ ສາມປີ ໄດ້ຖືກຈັດຕັ້ງປະຕິບັດຕໍ່ການນຳເຂົ້າເຫຼັກສະເພາະໃດໜຶ່ງ. ລະດັບການນຳເຂົ້າທັງໝົດຈະແມ່ນ 10,000 ໂຕນ ໃນປີທຳອິດ, 15,000 ໂຕນໃນປີທີສອງ ແລະ 22,000 ໂຕນໃນປີທີສາມ.*

### D314 ມາດຕະການປົກປ້ອງ ແລະ ຮູບແບບການປົກປ້ອງອື່ນ

ມາດຕະການປົກປ້ອງໃນຮູບແບບອື່ນ ນອກເໜືອຈາກພາສີ ຫຼື ການຈຳກັດດ້ານປະລິມານ (ເຊິ່ງສາມາດລວມເອົາທັງມາດຕະການທີ່ມີບັນດາອົງປະກອບດ້ານພາສີ ແລະ ປະລິມານ), ຖືກນຳໃຊ້ເພື່ອປ້ອງກັນ ຫຼື ແກ້ໄຂຄວາມເສຍຫາຍຮ້າຍແຮງຈາກການນຳເຂົ້າທີ່ເພີ່ມຂຶ້ນ (ດັ່ງທີ່ການສືບສວນໄດ້ຈັດຕັ້ງຂຶ້ນ) ແລະ ເພື່ອອຳນວຍຄວາມສະ

ດວກໃນການປັບປຸງ. ໄລຍະເວລາຂອງການນຳໃຊ້ມາດຕະການທີ່ຄາດໄວ້ແມ່ນຫຼາຍກວ່າໜຶ່ງປີ ແລະ ມັນຕ້ອງມີລັກສະນະຫຼຸດລົງຕາມລຳດັບໃນໄລຍະເວລາຂອງການນຳໃຊ້.

***ຕົວຢ່າງ:*** *ມາດຕະການປົກປ້ອງ ທີ່ມີໄລຍະເວລາ ສອງປີ ໄດ້ຖືກວາງອອກຕໍ່ການນຳເຂົ້າເຄື່ອງຈັກລ້າງຈານ. ໃນລະຫວ່າງປີທຳອິດ, ມາດຕະການປົກປ້ອງດ້ວຍການເກັບພາສີນຳເຂົ້າ 50 ໂດລາສະຫະລັດຕໍ່ໜ່ວຍຈະຖືກນຳໃຊ້ຕໍ່ກັບເຄື່ອງລ້າງຈານທັງໝົດທີ່ນຳເຂົ້າດ້ວຍລາຄາແຈ້ງພາສີ CIF ທີ່ຕໍ່າກວ່າ 500 ໂດລາສະຫະລັດຕໍ່ໜ່ວຍ. ໃນລະຫວ່າງປີທີສອງ, ມາດຕະການປົກປ້ອງ ຈະບໍ່ຖືກນຳໃຊ້ຕໍ່ກັບການນຳເຂົ້າເຄື່ອງຈັກລ້າງຈານຈຳນວນ 20,000 ໜ່ວຍທຳອິດ, ໂດຍບໍ່ຄຳນຶງເຖິງລາຄານຳເຂົ້າຂອງເຄື່ອງຈັກລ້າງຈານດັ່ງກ່າວ.*

## D32 ມາດຕະການປົກປ້ອງດ້ານກະສິກຳແບບພິເສດ

ການປົກປ້ອງດ້ານກະສິກຳແບບພິເສດ ອະນຸຍາດໃຫ້ມີການເກັບພາສີເພີ່ມເຕີມ ທີ່ຕິດພັນກັບການເພີ່ມຂຶ້ນ ຫຼື ຫຼຸດລົງຂອງລາຄານຳເຂົ້າ. ລະດັບສະເພາະຂອງປະລິມານ ຫຼື ລາຄາຂອງການນຳເຂົ້າ ແມ່ນຖືກກຳນົດໄວ້ໃນລະດັບປະເທດ. ໃນກໍລະນີເປັນປະລິມານທີ່ກຳນົດໄວ້, ພາສີເພີ່ມເຕີມ ສາມາດນຳໃຊ້ໄດ້ຈົນເຖິງສິ້ນສຸດຂອງປີທີ່ກໍ່ໃຫ້ເກີດຄວາມເສຍຫາຍ. ໃນກໍລະນີເປັນລາຄາທີ່ກຳນົດໄວ້, ພາສີເພີ່ມເຕີມແມ່ນຖືກເກັບ ເປັນແຕ່ລະການຂົນສົ່ງ.

### D321 ມາດຕະການປົກປ້ອງດ້ານກະສິກຳແບບພິເສດ ຕາມປະລິມານ

ການປົກປ້ອງປະເພດນີ້, ພາສີເພີ່ມເຕີມອາດຖືກນຳໃຊ້ ຖ້າປະລິມານການນຳເຂົ້າສິນຄ້າກະສິກຳທີ່ກຳນົດໄວ້ ເກີນປະລິມານທີ່ກຳນົດໄວ້.

***ຕົວຢ່າງ:*** *ພາສີເພີ່ມເຕີມເທົ່າກັບ 1/3 ຂອງພາສີທີ່ເກັບຕົວຈິງປະຈຸບັນແມ່ນຖືກນຳໃຊ້ກັບການນຳເຂົ້ານົມ ເມື່ອປະລິມານການນຳເຂົ້າເກີນ 861*

*ໂຕນ ຂອງປະລິມານທີ່ກໍານົດໄວ້.*

**D322 ມາດຕະການປົກປ້ອງດ້ານກະສິກໍາແບບພິເສດ ຕາມລາຄາ**

ການປົກປ້ອງປະເພດນີ້, ພາສີເພີ່ມເຕີມອາດຖືກນໍາໃຊ້ ຖ້າລາຄາການນໍາເຂົ້າສິນຄ້າກະສິກໍາທີ່ກໍານົດໄວ້ ຫຼຸດລົງຕໍ່າກວ່າລາຄາທີ່ກໍານົດໄວ້.

***ຕົວຢ່າງ:*** *ພາສີເພີ່ມເຕີມຈໍານວນ 2.79 Php/kg ໄດ້ຖືກນໍາໃຊ້ຕໍ່ການຂົນສົ່ງຊີ້ນແຊ່ແຂງ ແລະ ເຄື່ອງໃນສັດປີກປະເພດ Gallus ເມື່ອລາຄານໍາເຂົ້າດ້ວຍລາຄາແຈ້ງພາສີ CIF ແມ່ນຕໍ່າກວ່າ 20% ຂອງລາຄາທີ່ກໍານົດໄວ້ຈໍານວນ 93 Php/kg.*

**D39 ມາດຕະການປົກປ້ອງ, ທີ່ບໍ່ໄດ້ລະບຸໄວ້ຢູ່ບ່ອນໃດ**

ໝວດນີ້ລວມເອົາ, ຕົວຢ່າງ: ກົນໄກການປົກປ້ອງແບບພິເສດທີ່ສາມາດນໍາໃຊ້ຕໍ່ກັບການນໍາເຂົ້າສິນຄ້າ ພາຍໃຕ້ສັນຍາການຄ້າພາກພື້ນ, ອະນຸສັນຍາຂອງການເຂົ້າເປັນພາຄີ ຫຼື ສັນຍາອື່ນ

## E ການອອກໃບອະນຸຍາດແບບບໍ່ອັດຕະໂນມັດ, ໂກຕ້າ, ມາດຕະການເກືອດຫ້າມ ແລະ ຄວບຄຸມປະລິມານ ນອກເໜືອເຫດຜົນດ້ານ SPS ຫຼື TBT

ໂດຍທົ່ວໄປເປັນມາດຕະການຄວບຄຸມ ແນໃສ່ການຈໍາກັດປະລິມານຂອງສິນຄ້າທີ່ສາມາດນໍາເຂົ້າ, ໂດຍບໍ່ຄໍານຶງວ່າສິນຄ້າດັ່ງກ່າວມາຈາກແຫຼ່ງທີ່ແຕກຕ່າງກັນ ຫຼື ຈາກຜູ້ສະໜອງສະເພາະໃດໜຶ່ງ. ບັນດາມາດຕະການເຫຼົ່ານີ້ ສາມາດນໍາໃຊ້ຮູບແບບຂອງການອອກໃບອະນຸຍາດແບບບໍ່ອັດຕະໂນມັດ, ການກໍານົດໂກຕ້າທີ່ກໍານົດໄວ້ລ່ວງໜ້າ ຫຼື ໂດຍຜ່ານການເກືອດຫ້າມ.[3] ມາດຕະການທັງໝົດທີ່ວາງອອກດ້ວຍເຫດຜົນດ້ານ SPS ແລະ TBT ແມ່ນໄດ້ຖືກຈັດປະເພດໃນພາກ A ແລະ B ຂ້າງເທິງ.

### E1 ຂັ້ນຕອນການອອກໃບອະນຸຍາດນໍາເຂົ້າແບບບໍ່ອັດຕະໂນມັດ ນອກເໜືອຈາກເຫດຜົນການອະນຸຍາດດ້ານ SPS ຫຼື TBT

[3] ມາດຕະການຄວບຄຸມດ້ານປະລິມານສ່ວນຫຼາຍ ແມ່ນຖືກເກືອດຫ້າມເປັນທາງການ ໂດຍສັນຍາ GATT 1994, ແຕ່ສາມາດນໍາໃຊ້ພາຍໃຕ້ສະພາບການທີ່ຖືກກໍານົດສະເພາະ (ຕົວຢ່າງ: ມາດຕາ XI ຂອງສັນຍາ GATT 1994; ສັນຍາວ່າດ້ວຍການປົກປ້ອງ).

ຂັ້ນຕອນການອອກໃບອະນຸຍາດນຳເຂົ້າໄດ້ຖືກວາງອອກ ເພື່ອຈຸດປະສົງທີ່ນອກເໜືອຈາກເຫດຜົນດ້ານ SPS ຫຼື TBT, ເຊິ່ງການອະນຸມັດອາດບໍ່ມີໃນທຸກກໍລະນີ. ການອະນຸມັດ ອາດອອກໃຫ້ໂດຍພື້ນຖານການຕັດສິນໃຈ ຫຼື ມາດຖານສະເພາະໃດໜຶ່ງທີ່ຕ້ອງໄດ້ປະຕິບັດຕາມ ກ່ອນທີ່ຈະໄດ້ຮັບອະນຸຍາດ.

## E11 ການອອກໃບອະນຸຍາດດ້ວຍເຫດຜົນດ້ານເສດຖະກິດ

### E111 ຂັ້ນຕອນການອອກໃບອະນຸຍາດ ໂດຍບໍ່ມີມາດຖານລ່ວງໜ້າ

ຂັ້ນຕອນການອອກໃບອະນຸຍາດ ເຊິ່ງການອອກອະນຸມັດແມ່ນອີງໃສ່ການຕັດສິນໃຈຂອງອົງການຈັດຕັ້ງທີ່ມີສິດອຳນາດອອກອະນຸຍາດ: ອາດເວົ້າໄດ້ວ່າແມ່ນໃບອະນຸຍາດທີ່ຂຶ້ນກັບການຕັດສິນໃຈ.

***ຕົວຢ່າງ***: *ຕ້ອງໄດ້ຮັບໃບອະນຸຍາດໃຫ້ນຳເຂົ້າເຄື່ອງຕັດຫຍິບ.*

### E112 ການອອກໃບອະນຸຍາດສຳລັບການນຳໃຊ້ສະເພາະ

ຂັ້ນຕອນການອອກໃບອະນຸຍາດ ເຊິ່ງການອະນຸມັດແມ່ນໃຫ້ສະເພາະແຕ່ການນຳເຂົ້າຂອງສິນຄ້າ ທີ່ຈະຖືກນຳໃຊ້ສຳລັບຈຸດປະສົງສະເພາະ: ໂດຍປົກກະຕິແລ້ວ ຈະອະນຸມັດສຳລັບການນຳໃຊ້ໃນການດຳເນີນງານ ເພື່ອສ້າງຜົນປະໂຫຍດທີ່ຄາດໄວ້ໃນຂົງເຂດສຳຄັນຂອງເສດຖະກິດ.

***ຕົວຢ່າງ:*** *ໃບອະນຸຍາດນຳເຂົ້າທາດລະເບີດທີ່ມີອະນຸພາບສູງ ຈະຖືກອະນຸມັດໃຫ້ ກໍ່ຕໍ່ເມື່ອມັນຖືກນຳໃຊ້ເຂົ້າໃນອຸດສາຫະກຳບໍ່ແຮ່.*

### E113 ການອອກໃບອະນຸຍາດທີ່ຕິດພັນກັບການຜະລິດພາຍໃນ

ການອອກໃບອະນຸຍາດ ສຳລັບຜະລິດຕະພັນທີ່ນຳເຂົ້າ ທີ່ຕິດພັນກັບການຜະລິດພາຍໃນ, ລວມມີລະດັບການຜະລິດພາຍໃນຂອງຜະລິດຕະພັນອັນດຽວກັນ, ເວັ້ນເສຍແຕ່ວ່າການອອກໃບອະນຸຍາດຖືກຈັດປະເພດເປັນບັນດາມາດຕະການດ້ານການລົງທຶນທີ່ຕິດພັນກັບການຄ້າ ເຊິ່ງໄດ້ລະບຸໄວ້ໃນພາກທີ I.

***ຕົວຢ່າງ:*** *ໃບອະນຸຍາດນຳເຂົ້ານ້ຳມັນເຊື້ອໄຟ ຈະໄດ້ຮັບການອະນຸມັດໃຫ້ ກໍ່ຕໍ່ເມື່ອການສະໜອງພາຍໃນຫາກບໍ່ພຽງພໍ.*

**E119 ການອອກໃບອະນຸຍາດດ້ວຍເຫດຜົນດ້ານເສດຖະກິດ, ທີ່ບໍ່ໄດ້ລະບຸໄວ້ຢູ່ບ່ອນໃດ**

**E12 ການອອກໃບອະນຸຍາດທີ່ບໍ່ແມ່ນເຫດຜົນດ້ານເສດຖະກິດ**

**E121 ການອອກໃບອະນຸຍາດດ້ວຍເຫດຜົນດ້ານສາສະໜາ, ສິນລະທຳ ຫຼື ວັດທະນະທຳ**

ການຄວບຄຸມການນຳເຂົ້າ ດ້ວຍການອອກໃບອະນຸຍາດດ້ວຍເຫດຜົນດ້ານສາສະໜາ, ສິນລະທຳ ຫຼື ວັດທະນະທຳ.

***ຕົວຢ່າງ:*** *ການນຳເຂົ້າເຄື່ອງດື່ມປະເພດເຫຼົ້າ ໄດ້ອະນຸຍາດໃຫ້ພຽງແຕ່ໂຮງແຮມ ແລະ ຮ້ານອາຫານ.*

**E122 ການອອກໃບອະນຸຍາດດ້ວຍເຫດຜົນດ້ານການເມືອງ**

ການຄວບຄຸມການນຳເຂົ້າ ໂດຍໃບອະນຸຍາດດ້ວຍເຫດຜົນດ້ານການເມືອງ.

***ຕົວຢ່າງ:*** *ການນຳເຂົ້າຜະລິດຕະພັນທັງໝົດຈາກປະເທດໃດໜຶ່ງທີ່ຖືກກຳນົດໄວ້ ແມ່ນຕ້ອງມີໃບອະນຸຍາດນຳເຂົ້າ.*

**E129 ການໃບອອກອະນຸຍາດທີ່ບໍ່ແມ່ນເຫດຜົນດ້ານເສດຖະກິດ, ທີ່ບໍ່ໄດ້ລະບຸໄວ້ຢູ່ບ່ອນໃດ**

## E2 ໂກຕ້າ

ການຈຳກັດການນຳເຂົ້າຜະລິດຕະພັນສະເພາະໃດໜຶ່ງ ໂດຍການກຳນົດປະລິມານ ຫຼື ມູນຄ່າສູງສຸດ ທີ່ໄດ້ຮັບອະນຸຍາດໃຫ້ນຳເຂົ້າ: ບໍ່ອະນຸຍາດໃຫ້ມີການນຳເຂົ້າຜະລິດຕະພັນ ທີ່ມີຈຳນວນສູງກວ່າປະລິມານສູງສຸດທີ່ກຳນົດໄວ້.

**E21 ໂກຕ້າແບບຖາວອນ**

ໂກຕ້າທີ່ມີລັກສະນະຖາວອນ (ຕົວຢ່າງ: ໂກຕ້າທີ່ຖືກນຳໃຊ້ຕະຫຼອດປີ, ໂດຍບໍ່ຮູ້ມື້ສິ້ນສຸດຂອງມາດຕະການ) ເຊິ່ງການນຳເຂົ້າສາມາດປະຕິບັດໄດ້ທຸກເວລາຂອງປີ.

**E211 ການກຳນົດໂກຕ້າໃຫ້ທຸກປະເທດໃນໂລກ**

ໂກຕ້າແບບຖາວອນ ທີ່ບໍ່ມີເງື່ອນໄຂຜູກມັດໃຫ້ກັບປະເທດແຫຼ່ງກຳເນີດຂອງສິນຄ້າ.

***ຕົວຢ່າງ:*** *ໂກຕ້ານຳເຂົ້າປາຈຳນວນ 100 ໂຕນ ສາມາດປະຕິບັດໄດ້*

*ທຸກເວລາຂອງປີ ແລະ ບໍ່ຈຳກັດປະເທດແຫຼ່ງກຳເນີດຂອງສິນຄ້າ.*

### E212 ການກຳນົດໂກຕ້າໃຫ້ສະເພາະບາງປະເທດ

ໂກຕ້າຖາວອນ ເຊິ່ງປະລິມານ ຫຼື ມູນຄ່າຂອງຜະລິດຕະພັນທີ່ກຳນົດໄວ້ ຕ້ອງມີແຫຼ່ງກຳເນີດໃນໜຶ່ງ ຫຼື ຫຼາຍກວ່າໜຶ່ງປະເທດ.

***ຕົວຢ່າງ:*** *ໂກຕ້ານຳເຂົ້າປາຈຳນວນ 100 ໂຕນ ສາມາດນຳເຂົ້າໄດ້ທຸກເວລາຂອງປີ, ແຕ່ປາຈຳນວນ 75 ໂຕນ ຕ້ອງມີແຫຼ່ງກຳເນີດໃນປະເທດ A ແລະ ອີກ 25 ໂຕນ ໃນປະເທດ B.*

## E22 ໂກຕ້າຕາມລະດູການ

ໂກຕ້າທີ່ມີລັກສະນະຖາວອນ (ຕົວຢ່າງ: ໂກຕ້າທີ່ຖືກນຳໃຊ້ທຸກໆປີ, ໂດຍບໍ່ຮູ້ມື້ສິ້ນສຸດຂອງມາດຕະການ) ເຊິ່ງການນຳເຂົ້າຕ້ອງໄດ້ປະຕິບັດຕາມໄລຍະເວລາທີ່ກຳນົດໄວ້ຂອງປີ.

### E221 ການກຳນົດໂກຕ້າໃຫ້ທຸກປະເທດທົ່ວໂລກ

ໂກຕ້າຕາມລະດູການ ທີ່ບໍ່ມີເງື່ອນໄຂຜູກມັດໃຫ້ກັບປະເທດແຫຼ່ງກຳເນີດຂອງສິນຄ້າ.

***ຕົວຢ່າງ:*** *ໂກຕ້າປະຈຳປີຂອງສາຫຼ່າຍທະເລຈຳນວນ 300 ໂຕນ ຕ້ອງຖືກປະຕິບັດໃນລະຫວ່າງ ເດືອນມີນາ ຫາ ເດືອນມິຖຸນາ ແລະ ບໍ່ມີການຈຳກັດແຫຼ່ງກຳເນີດຂອງສິນຄ້າ.*

### E222 ການກຳນົດໂກຕ້າໃຫ້ສະເພາະບາງປະເທດ

ໂກຕ້າຕາມລະດູການ ເຊິ່ງປະລິມານ ຫຼື ມູນຄ່າຂອງຜະລິດຕະພັນທີ່ກຳນົດໄວ້ ຕ້ອງມີແຫຼ່ງກຳເນີດໃນໜຶ່ງ ຫຼື ຫຼາຍກວ່າໜຶ່ງປະເທດ.

***ຕົວຢ່າງ:*** *ໂກຕ້າປະຈຳປີຂອງສາຫຼ່າຍທະເລຈຳນວນ 300 ໂຕນ ຕ້ອງຖືກປະຕິບັດໃນລະຫວ່າງລະດູໜາວ, ແລະ 60 ໂຕນ ຕ້ອງມີແຫຼ່ງກຳເນີດໃນປະເທດ A, ແລະ ອີກ 40 ໂຕນ ໃນປະເທດ B.*

## E23 ໂກຕ້າແບບຊົ່ວຄາວ

ໂກຕ້າທີ່ຖືກນຳໃຊ້ແບບຊົ່ວຄາວ (ຕົວຢ່າງ: ໂກຕ້າແມ່ນຖືກນຳໃຊ້ພຽງແຕ່ໜຶ່ງ ຫຼື ສອງປີ), ບໍ່ວ່າຈະເປັນໂກຕ້າທີ່ມີລັກສະນະຕາມລະດູການ ຫຼື ບໍ່ກໍ່ຕາມ.

### E231 ການກຳນົດໂກຕ້າໃຫ້ທຸກປະເທດທົ່ວໂລກ

ໂກຕ້າຊົ່ວຄາວ ທີ່ບໍ່ມີເງື່ອນໄຂຜູກມັດກັບປະເທດແຫຼ່ງກຳເນີດຂອງສິນ

ຄ້າ.

***ຕົວຢ່າງ:*** *ໂກຕ້າປະຈຳປີຂອງປາ ແລະ ຊີ້ນປາ ຈຳນວນ 1,000 ໂຕນ ຈະຖືກນຳໃຊ້ພຽງແຕ່ ສາມປີ ເຊິ່ງບໍ່ມີການຈຳກັດປະເທດແຫຼ່ງກຳເນີດຂອງສິນຄ້າ.*

**E232 ການກຳນົດໂກຕ້າໃຫ້ສະເພາະບາງປະເທດ**

ໂກຕ້າຊົ່ວຄາວ ເຊິ່ງປະລິມານ ຫຼື ມູນຄ່າຂອງຜະລິດຕະພັນທີ່ກຳນົດໄວ້ ຕ້ອງມີແຫຼ່ງກຳເນີດໃນໜຶ່ງ ຫຼື ຫຼາຍກວ່າໜຶ່ງປະເທດ.

***ຕົວຢ່າງ:*** *ໂກຕ້າປະຈຳປີຂອງປາ ແລະ ຊີ້ນປາ ຈຳນວນ 1,000 ໂຕນ ຈະຖືກນຳໃຊ້ພຽງແຕ່ ສາມປີ ເຊິ່ງການນຳເຂົ້າຕ້ອງປະຕິບັດໃນລະຫວ່າງລະດູແລ້ງ, ແລະ 700 ໂຕນ ຕ້ອງມີແຫຼ່ງກຳເນີດໃນປະເທດ A, 200 ໂຕນ ໃນປະເທດ B ແລະ ສ່ວນທີ່ເຫຼືອສາມາດມາຈາກປະເທດໃດກໍ່ໄດ້.*

## E3 ການເກືອດຫ້າມ ນອກເໜືອຈາກເຫດຜົນດ້ານ SPS ແລະ TBT

ການເກືອດຫ້າມການນຳເຂົ້າສິນຄ້າສະເພາະໃດໜຶ່ງ ນອກເໜືອຈາກເຫດຜົນດ້ານ SPS (A1) ຫຼື TBT (B1).

### E31 ການເກືອດຫ້າມດ້ວຍເຫດຜົນດ້ານເສດຖະກິດ

**E311 ການເກືອດຫ້າມແບບເຕັມສ່ວນ (ການຫ້າມການນຳເຂົ້າ)**

ການເກືອດຫ້າມ ໂດຍປາສະຈາກເງື່ອນໄຂ ຫຼື ຄຸນສົມບັດເພີ່ມເຕີມ.

***ຕົວຢ່າງ:*** *ການນຳເຂົ້າຍານພາຫະນະທີ່ມີລູກສູບຕ່ຳກວ່າ 1,500 cc ຈະບໍ່ໄດ້ຮັບອະນຸຍາດ, ເພື່ອເປັນການຊຸກຍູ້ການຜະລິດພາຍໃນ.*

**E312 ການເກືອດຫ້າມຕາມລະດູການ**

ການເກືອດຫ້າມການນຳເຂົ້າໃນໄລຍະເວລາທີ່ກຳນົດໄວ້ຂອງປີ: ໂດຍ ປົກກະຕິ ມາດຕະການນີ້ແມ່ນຖືກນຳໃຊ້ກັບບັນດາສິນຄ້າກະສິກຳສະ ເພາະໃດໜຶ່ງ ໃນຂະນະທີ່ຜົນຜະລິດພາຍໃນ ແມ່ນມີຈຳນວນຫຼາຍແລ້ວ.

***ຕົວຢ່າງ:*** *ການນຳເຂົ້າໝາກສະຕຣໍເບີຣີ ແມ່ນບໍ່ໄດ້ຮັບອະນຸຍາດແຕ່ເດືອນມີນາ ເຖິງ ເດືອນມິຖຸນາ ໃນແຕ່ລະປີ.*

**E313 ການເກືອດຫ້າມຊົ່ວຄາວ, ລວມມີການຢຸດຕິການອອກໃບອະນຸຍາດ**

ການເກືອດຫ້າມທີ່ໄດ້ກຳນົດສະເພາະໄລຍະເວລາໃດໜຶ່ງ ເຊິ່ງບໍ່ກ່ຽວຂ້ອງກັບເຫດຜົນສະເພາະໃດໜຶ່ງ: ໂດຍປົກກະຕິ ນຳໃຊ້ສຳລັບບັນຫາຮີບດ່ວນ ທີ່ບໍ່ໄດ້ນອນຢູ່ໃນບັນດາມາດຕະການປົກປ້ອງຂ້າງເທິງ.

***ຕົວຢ່າງ:*** *ການນຳເຂົ້າປາສະເພາະໃດໜຶ່ງ ແມ່ນຖືກເກືອດຫ້າມ ເຊິ່ງມີຜົນບັງຄັບໃຊ້ທັນທີ ຈົນກວ່າຈະສິ້ນສຸດລະດູການໃດໜຶ່ງ.*

**E314 ການເກືອດຫ້າມການນຳເຂົ້າທີ່ມີປະລິມານບັນຈຸຂະໜາດໃຫຍ່**

ການເກືອດຫ້າມຕູ້ບັນຈຸທີ່ມີປະລິມານບັນຈຸຂະໜາດໃຫຍ່: ການນຳເຂົ້າຈະໄດ້ຮັບອະນຸຍາດ ກໍ່ຕໍ່ເມື່ອຜະລິດຕະພັນໄດ້ຖືກຫຸ້ມຫໍ່ເປັນຕູ້ບັນຈຸຍ່ອຍຂະໜາດນ້ອຍ, ເຊິ່ງເພີ່ມລາຄາຕໍ່ຫົວໜ່ວຍຂອງການນຳເຂົ້າ.

***ຕົວຢ່າງ:*** *ການນຳເຂົ້າເຫຼົ້າແວັງ ຈະອະນຸຍາດໃຫ້ສະເພາະຂວດບັນຈຸທີ່ມີຂະໜາດເທົ່າກັບ ຫຼື ນ້ອຍກວ່າ 750 ມິລີລິດ.*

**E315 ການເກືອດຫ້າມສິນຄ້າທີ່ລະເມີດສິດທິບັດ ຫຼື ສິດຕໍ່ຊັບສິນທາງປັນຍາອື່ນໆ**

ການເກືອດຫ້າມຜະລິດຕະພັນທີ່ມີການກ່າຍແບບ ຫຼື ການລອກຮຽນແບບສິດທິບັດ ຫຼື ເຄື່ອງໝາຍການຄ້າ.

***ຕົວຢ່າງ:*** *ການນຳເຂົ້າກະເປົາຖືທີ່ມີການລອກຮຽນແບບຍີ່ຫໍ້ ແມ່ນຖືກເກືອດຫ້າມ.*

**E316 ການເກືອດຫ້າມສິນຄ້າທີ່ໃຊ້ແລ້ວ, ຖືກສ້ອມແປງ ຫຼື ຜະລິດຄືນ**

ການເກືອດຫ້າມສິນຄ້ານຳເຂົ້າທີ່ບໍ່ແມ່ນສະພາບໃໝ່.

***ຕົວຢ່າງ:*** *ການເກືອດຫ້າມນຳເຂົ້າລົດທີ່ໃຊ້ແລ້ວ.*

**E319 ການເກືອດຫ້າມດ້ວຍເຫດຜົນດ້ານເສດຖະກິດ, ທີ່ບໍ່ໄດ້ລະບຸໄວ້ຢູ່ບ່ອນໃດ**

**E32 ການເກືອດຫ້າມທີ່ບໍ່ແມ່ນເຫດຜົນດ້ານເສດຖະກິດ**

**E321 ການເກືອດຫ້າມດ້ວຍເຫດຜົນດ້ານສາສະໜາ, ສິນລະທຳ ຫຼື ວັດທະນະທຳ**

ການເກືອດຫ້າມການນຳເຂົ້າດ້ວຍເຫດຜົນດ້ານສາສະໜາ, ສິນລະທຳ ຫຼື ວັດທະນະທຳ ທີ່ບໍ່ໄດ້ກຳນົດໄວ້ລະບຽບການດ້ານເຕັກນິກ.

***ຕົວຢ່າງ:*** *ການນຳເຂົ້າປື້ມ ແລະ ວາລະສານທີ່ສະແດງຮູບພາບລາມົກອານາຈານ ແມ່ນຖືກເກືອດຫ້າມ.*

**E322 ການເກືອດຫ້າມດ້ວຍເຫດຜົນດ້ານການເມືອງ (ການຫ້າມນຳເຂົ້າ)**

ການເກືອດຫ້າມການນຳເຂົ້າຈາກປະເທດ ຫຼື ກຸ່ມປະເທດ, ທີ່ຖືກນຳໃຊ້ດ້ວຍເຫດຜົນດ້ານການເມືອງ.

***ຕົວຢ່າງ:*** *ການນຳເຂົ້າທຸກສິນຄ້າຈາກປະເທດ A ແມ່ນຖືກເກືອດຫ້າມເພື່ອເປັນການຕອບໂຕ້ຕໍ່ການທົດສອບລະເບີດນິວເຄຼຍຂອງປະເທດນັ້ນ.*

**E329 ການເກືອດຫ້າມທີ່ບໍ່ແມ່ນເຫດຜົນດ້ານເສດຖະກິດ, ທີ່ບໍ່ໄດ້ລະບຸໄວ້ຢູ່ບ່ອນໃດ**

## E5 ການກຳນົດຂໍ້ຈຳກັດໃນການສົ່ງອອກ

ການກຳນົດ ເຊິ່ງຜູ້ສົ່ງອອກເຫັນດີທີ່ຈະຈຳກັດການສົ່ງອອກ ເພື່ອຫຼີກລ້ຽງການວາງມາດຕະການຈຳກັດ ໂດຍປະເທດຜູ້ນຳເຂົ້າເຊັ່ນ: ໂກຕ້າ, ການເພີ່ມອັດຕາພາສີ ຫຼື ການຄວບຄຸມການນຳເຂົ້າອື່ນໆ.[4] ການກຳນົດດັ່ງກ່າວ ອາດກຳນົດໂດຍລັດຖະບານ ແລະ ພາກອຸດສາຫະກຳເອງ.

**E51 ການກຳນົດຂໍ້ຈຳກັດການສົ່ງອອກແບບສະໝັກໃຈ (VERs)**

ການກຳນົດທີ່ຖືກຈັດຕັ້ງຂຶ້ນ ໂດຍລັດຖະບານ ຫຼື ພາກອຸດສາຫະກຳຂອງປະເທດຜູ້ສົ່ງອອກ ດ້ວຍການຈຳກັດການສົ່ງອອກແບບສະໝັກໃຈ ເພື່ອຫຼີກລ້ຽງການວາງມາດຕະການຈຳກັດແບບບັງຄັບໂດຍປະເທດຜູ້ນຳເຂົ້າ. ໂດຍທົ່ວໄປ, VERs ແມ່ນໝາກຜົນຂອງການຮ້ອງຂໍຈາກປະເທດຜູ້ນຳເຂົ້າ ເພື່ອວາງມາດຕະການປົກປ້ອງໃຫ້ແກ່ທຸລະກິດພາຍໃນຂອງຕົນ ທີ່ຜະລິດສິນຄ້າທົດແທນ.

**E511 ຂໍ້ຕົກລົງໃນການນຳໃຊ້ໂກຕ້າ**

ຂໍ້ຕົກລົງ VER ທີ່ກຳນົດໂກຕ້າການສົ່ງອອກ.

***ຕົວຢ່າງ:*** *ໂກຕ້າສອງຝ່າຍ ກ່ຽວກັບການສົ່ງອອກພາຫະນະ ຈາກປະເທດ A ໄປເຖິງປະເທດ B ທີ່ຖືກກຳນົດຂຶ້ນ ເພື່ອຫຼີກລ້ຽງການຂວັ້ນ*

[4] ການກຳນົດດັ່ງກ່າວ ແມ່ນຖືກເກືອດຫ້າມເປັນທາງການ ໂດຍສັນຍາ WTO.

*ບາດໂດຍປະເທດທີສອງ.*

**E512 ຂໍ້ຕົກລົງໃນການປຶກສາຫາລື**

ຂໍ້ຕົກລົງ VER ທີ່ກຳນົດໃຫ້ມີການປຶກສາຫາລື ເພື່ອວາງມາດຕະການຈຳກັດ (ໂກຕ້າ) ພາຍໃຕ້ສະພາບການສະເພາະໃດໜຶ່ງ.

***ຕົວຢ່າງ:*** *ຂໍ້ຕົກລົງໄດ້ຮັບການຕົກລົງເຫັນດີ ເພື່ອຈຳກັດການສົ່ງອອກຝ້າຍຈາກປະເທດ C ໄປປະເທດ D ໃນກໍລະນີປະລິມານການສົ່ງອອກເກີນ 2 ລ້ານໂດລາສະຫະລັດ ໃນເດືອນຜ່ານມາ.*

**E513 ຂໍ້ຕົກລົງໃນການຮ່ວມມືດ້ານການບໍລິຫານ**

ຂໍ້ຕົກລົງ VER ທີ່ສະໜອງການຮ່ວມມືດ້ານການບໍລິຫານ ເພື່ອຫຼີກລ້ຽງການຢຸດສະງັກດ້ານການຄ້າສອງຝ່າຍ.

***ຕົວຢ່າງ:*** *ຂໍ້ຕົກລົງໄດ້ຮັບການຕົກລົງເຫັນດີ ລະຫວ່າງປະເທດ E ແລະປະເທດ F ເພື່ອຮ່ວມມືສະກັດກັ້ນການສົ່ງອອກທີ່ເພີ່ມຂຶ້ນກະທັນຫັນ.*

**E59 ການກຳນົດຂໍ້ຈຳກັດການສົ່ງອອກ, ທີ່ບໍ່ໄດ້ລະບຸໄວ້ຢູ່ບ່ອນໃດ**

## E6 ໂກຕ້າອັດຕາພາສີ (TRQ)

ລະບົບການນຳໃຊ້ອັດຕາພາສີຫຼາຍຮູບແບບຕໍ່ສິນຄ້າອັນດຽວກັນ: ອັດຕາພາສີຕໍ່າກວ່າ ຈະນຳໃຊ້ຈົນເຖິງມູນຄ່າ ຫຼື ປະລິມານຂອງການນຳເຂົ້າສະເພາະໃດໜຶ່ງ, ແລະ ອັດຕາພາສີທີ່ສູງກວ່າ ຈະຖືກເກັບຕໍ່ການນຳເຂົ້າ ທີ່ເກີນຈຳນວນທີ່ກຳນົດໄວ້.

***ຕົວຢ່າງ:*** *ການນຳເຂົ້າເຂົ້າກີບ ຈຳນວນ 100,000 ໂຕນທຳອິດ ຈະບໍ່ໄດ້ເສຍພາສີນຳເຂົ້າ, ຫຼັງຈາກນັ້ນການນຳເຂົ້າຈະຕ້ອງໄດ້ເສຍພາສີໃນອັດຕາ 1.5 ໂດລາສະຫະລັດຕໍ່ກິໂລ.*

**E61 ໂກຕ້າອັດຕາພາສີທີ່ມີຂໍ້ຜູກມັດໃນກອບອົງການການຄ້າໂລກ (WTO), ລວມມີຕາຕະລາງຜູກມັດຂອງ WTO (ການຍິນຍອມ ແລະ ພັນທະຕ່າງໆພາຍໃຕ້ກອບການເຈລະຈາສັນຍາ WTO)**

**E611 ການກຳນົດໂກຕ້າໃຫ້ທຸກປະເທດທົ່ວໂລກ**

ໂກຕ້າອັດຕາພາສີທີ່ມີຂໍ້ຜູກມັດໃນກອບອົງການການຄ້າໂລກ ເຊິ່ງບໍ່ມີເງື່ອນໄຂຜູກມັດ ກ່ຽວກັບປະເທດແຫຼ່ງກຳເນີດຂອງສິນຄ້າ.

***ຕົວຢ່າງ:*** *ໂກຕ້າອັດຕາພາສີທີ່ມີຂໍ້ຜູກມັດໃນກອບອົງການການຄ້າໂລກ ອະນຸຍາດໃຫ້ນຳເຂົ້ານົມ ແລະ ຄຣີມ ແບບບໍ່ມີພາສີໃນຈຳນວນ 2,000 ໂຕນໂດຍບໍ່ມີເງື່ອນໄຂຜູກມັດ ກ່ຽວກັບປະເທດແຫຼ່ງກຳເນີດຂອງສິນຄ້າ.*

**E612 ການກຳນົດໂກຕ້າໃຫ້ສະເພາະບາງປະເທດ**

ໂກຕ້າອັດຕາພາສີທີ່ມີຂໍ້ຜູກມັດໃນກອບອົງການການຄ້າໂລກ ເຊິ່ງປະລິມານ ຫຼື ມູນຄ່າ ຂອງຜະລິດຕະພັນທີ່ກຳນົດໄວ້ ຕ້ອງມີແຫຼ່ງກຳເນີດໃນໜຶ່ງ ຫຼື ຫຼາຍກວ່າໜຶ່ງປະເທດ.

***ຕົວຢ່າງ:*** *ໂກຕ້າອັດຕາພາສີທີ່ມີຂໍ້ຜູກມັດໃນກອບອົງການການຄ້າໂລກ ຂອງສັດປີກຈຳນວນ 200,000 ໂຕນ ແມ່ນຈະໄດ້ເສຍພາສີຕາມໂກຕ້າ 12%, ແລະ ປະລິມານເຄິ່ງໜຶ່ງ ຕ້ອງມີແຫຼ່ງກຳເນີດໃນປະເທດ A.*

**E62 ໂກຕ້າອັດຕາພາສີອື່ນ ທີ່ລວມຢູ່ໃນສັນຍາການຄ້າອື່ນໆ**

**E621 ການກຳນົດໂກຕ້າໃຫ້ທຸກປະເທດທົ່ວໂລກ**

ໂກຕ້າອັດຕາພາສີທີ່ບໍ່ແມ່ນໃນກອບອົງການການຄ້າໂລກ ເຊິ່ງບໍ່ມີເງື່ອນໄຂຜູກມັດ ກ່ຽວກັບປະເທດແຫຼ່ງກຳເນີດຂອງສິນຄ້າ.

***ຕົວຢ່າງ:*** *ໂກຕ້າອັດຕາພາສີທີ່ບໍ່ແມ່ນໃນກອບອົງການການຄ້າໂລກ ສາມາດນຳໃຊ້ສຳລັບຊີ້ນງົວ ຈຳນວນ 40,000 ໂຕນ ເຊິ່ງບໍ່ມີເງື່ອນໄຂຜູກມັດ ກ່ຽວກັບປະເທດແຫຼ່ງກຳເນີດ.*

**E622 ການກຳນົດໂກຕ້າໃຫ້ສະເພາະບາງປະເທດ**

ໂກຕ້າອັດຕາພາສີທີ່ບໍ່ມີຂໍ້ຜູກມັດໃນກອບອົງການການຄ້າໂລກ ເຊິ່ງປະລິມານ ຫຼື ມູນຄ່າຂອງຜະລິດຕະພັນທີ່ໄດ້ກຳນົດໄວ້ ຕ້ອງມີແຫຼ່ງກຳເນີດໃນໜຶ່ງ ຫຼື ຫຼາຍໜຶ່ງປະເທດ.

***ຕົວຢ່າງ:*** *ໝາກກ້ວຍສົດຈາກປະເທດ A ສາມາດນຳເຂົ້າໂດຍບໍ່ເສຍພາສີ ຈົນເຖິງຈຳນວນ 4,000 ໂຕນ.*

## E9 ມາດຕະການດ້ານການຄວບຄຸມປະລິມານ, ທີ່ບໍ່ໄດ້ລະບຸໄວ້ຢູ່ບ່ອນໃດ

# F ມາດຕະການຄວບຄຸມລາຄາ, ລວມມີບັນດາອາກອນເພີ່ມເຕີມ ແລະ ຄ່າທຳນຽມຕ່າງໆ

ບັນດາມາດຕະການທີ່ຖືກຈັດຕັ້ງປະຕິບັດ ເພື່ອຄວບຄຸມ ຫຼື ສົ່ງຜົນຕໍ່ລາຄາຂອງສິນຄ້ານຳເຂົ້າ ເພື່ອສະໜັບສະໜູນລາຄາຂອງສິນຄ້າພາຍໃນສະເພາະໃດໜຶ່ງ ເມື່ອລາຄາຂອງສິນຄ້ານຳເຂົ້າເຫຼົ່ານີ້ແມ່ນຕ່ຳກວ່າ; ກຳນົດລາຄາພາຍໃນຂອງສິນຄ້າໃດໜຶ່ງ ຍ້ອນການເໜັງຕີງຂອງລາຄາໃນຕະຫຼາດພາຍໃນ; ຫຼື ຄວາມບໍ່ໝັ້ນຄົງຂອງລາຄາໃນຕະຫຼາດຕ່າງປະເທດ; ຫຼື ເພື່ອເພີ່ມ ຫຼື ຮັກສາລາຍຮັບອາກອນ. ໝວດນີ້ ຍັງລວມເອົາບັນດາມາດຕະການນອກເໜືອຈາກພາສີ ທີ່ເພີ່ມຄ່າໃຊ້ຈ່າຍຂອງການນຳເຂົ້າໃນຮູບແບບຄ້າຍຄືກັນ. ຕົວຢ່າງ: ເປີເຊັນ ຫຼື ຈຳນວນທີ່ກຳ

ນົດໄວ້. ມາດຕະການນີ້ ຍັງຖືກຮັບຮູ້ວ່າແມ່ນມາດຕະການແບບເຄິ່ງພາສີ.

## F1 ມາດຕະການດ້ານການບໍລິຫານ ທີ່ສົ່ງຜົນກະທົບຕໍ່ມູນຄ່າພາສີ

ການກຳນົດລາຄານຳເຂົ້າ ໂດຍອົງການຈັດຕັ້ງທີ່ມີສິດອຳນາດຂອງປະເທດຜູ້ນຳເຂົ້າ ໂດຍການພິຈາລະນາລາຄາພາຍໃນຂອງຜູ້ຜະລິດ ແລະ ຜູ້ຊົມໃຊ້. ມາດຕະການ ສາມາດໃຊ້ໄດ້ໃນຮູບແບບຂອງການກຳນົດລາຄາພື້ນຖານ ແລະ ລາຄາເພດານຈຳກັດ; ຫຼື ການຫັນກັບຄືນມາກຳນົດລາຄາໃນຕະຫຼາດສາກົນທີ່ກຳນົດໄວ້. ອາດມີການກຳນົດລາຄາທີ່ແຕກຕ່າງກັນເຊັ່ນ: ລາຄານຳເຂົ້າຕ່ຳສຸດ ຫຼື ລາຄາທີ່ຕັ້ງຕາມລາຄາອ້າງອີງ.

### F11 ລາຄານຳເຂົ້າຕ່ຳສຸດ

ການກຳນົດລາຄານຳເຂົ້າລ່ວງໜ້າທີ່ຕ່ຳກວ່າ ເຊິ່ງເຮັດໃຫ້ບໍ່ສາມາດນຳເຂົ້າມາໄດ້.

***ຕົວຢ່າງ:*** *ລາຄານຳເຂົ້າຕ່ຳສຸດ ໄດ້ຖືກກຳນົດຂຶ້ນສຳລັບຝ້າຍ ແລະ ຂົນສັດ.*

### F12 ລາຄາອ້າງອີງ

ການກຳນົດລາຄານຳເຂົ້າລ່ວງໜ້າ ເຊິ່ງອົງການທີ່ມີສິດອຳນາດຂອງປະເທດຜູ້ນຳເຂົ້າ ນຳໃຊ້ເປັນບ່ອນອີງເພື່ອກວດສອບລາຄາການນຳເຂົ້າ.

***ຕົວຢ່າງ:*** *ລາຄາອ້າງອີງສຳລັບຜະລິດຕະພັນກະສິກຳ ແມ່ນອີງຕາມລາຄາໜ້າຟາມ, ເຊິ່ງໝາຍເຖິງລາຄາສຸດທິຂອງຜະລິດຕະພັນ ເມື່ອອອກຈາກຟາມ, ຫຼັງຈາກຫັກຄ່າໃຊ້ຈ່າຍທາງການຕະຫຼາດ.*

### F19 ມາດຕະການບໍລິຫານອື່ນໆ ທີ່ສົ່ງຜົນກະທົບຕໍ່ມູນຄ່າພາສີ, ທີ່ບໍ່ໄດ້ລະບຸໄວ້ຢູ່ບ່ອນໃດ

## F2 ການຈຳກັດລາຄາສົ່ງອອກແບບສະໝັກໃຈ (VEPRs)

ການກຳນົດດັ່ງກ່າວທີ່ຜູ້ສົ່ງອອກເຫັນດີ ເພື່ອຮັກສາລາຄາຂອງສິນຄ້າຂ້າງເທິງໃນລະດັບສະເພາະໃດໜຶ່ງ:[5] ຂະບວນການ VEPR ໄດ້ຖືກລິເລີ່ມໂດຍປະເທດຜູ້ນຳເຂົ້າ ແລະ ດ້ວຍເຫດນີ້ຈຶ່ງໄດ້ຖືກພິຈາລະນາເປັນມາດຕະການນຳເຂົ້າ.

***ຕົວຢ່າງ:*** *ລາຄານຳເຂົ້າຂອງກະແຊັດວີດີໂອ ແມ່ນຖືກກຳນົດໃຫ້ສູງກວ່າ ລາຄາພາຍໃນ*

[5] ບັນດາມາດຕະການດັ່ງກ່າວ ແມ່ນຖືກເກືອດຫ້າມໂດຍສັນຍາຂອງອົງການ WTO. ພາຍໃຕ້ສັນຍາ ວ່າດ້ວຍມາດຕະການຕ້ານການທຸ້ມຕະຫຼາດ, ການອຸດໜູນ ແລະ ການຕອບໂຕ້, ເຖິງຢ່າງໃດກໍ່ຕາມ, ບັນດາມາດຕະການທີ່ຢູ່ໃນຮູບການຂອງການປະຕິບັດລາຄາ ແມ່ນໄດ້ຮັບອະນຸຍາດພາຍໃຕ້ບັນດາເງື່ອນໄຂສະເພາະໃດໜຶ່ງ. ເບິ່ງຕົວຢ່າງໃນຂໍ້ D13 ແລະ D23.

*ເພື່ອຫຼຸດຜ່ອນຄວາມຂັດແຍ່ງທາງດ້ານການຄ້າ ກັບບັນດາປະເທດຜູ້ນໍາເຂົ້າຫຼັກ.*

## F3 ຄ່າທໍານຽມທີ່ປ່ຽນແປງໄດ້

ບັນດາອາກອນ ຫຼື ພາສີ ທີ່ແນໃສ່ເຮັດໃຫ້ລາຄາຂອງຜະລິດຕະພັນນໍາເຂົ້າໃນຕະຫຼາດ ສອດຄ່ອງກັບລາຄາຂອງຜະລິດຕະພັນພາຍໃນຊະນິດດຽວກັນ:[6] ຜະລິດຕະພັນທີ່ຈໍາເປັນພື້ນຖານອາດຖືກກໍານົດໃຫ້ເສຍຄ່າທໍານຽມໂດຍການຄິດໄລ່ຕາມນໍ້າໜັກ, ໃນຂະນະທີ່ຄ່າທໍານຽມຕໍ່ກັບສິນຄ້າປະເພດອາຫານປຸງແຕ່ງ ສາມາດຖືກເກັບໄດ້ໃນອັດຕາສ່ວນຂອງສ່ວນປະກອບຜະລິດຕະພັນທີ່ຈໍາເປັນພື້ນຖານໃນຜະລິດຕະພັນຂັ້ນສຸດທ້າຍ. ຄ່າທໍານຽມເຫຼົ່ານີ້ລວມມີ:

### F31 ຄ່າທໍານຽມທີ່ປ່ຽນແປງໄດ້

ອັດຕາອາກອນ ຫຼື ພາສີ ມີອັດຕາການປ່ຽນແປງກົງກັນຂ້າມກັບລາຄາທີ່ນໍາເຂົ້າເພື່ອຮັກສາລາຄາພາຍໃນປະເທດໃຫ້ໝັ້ນຄົງ: ນໍາໃຊ້ກັບຜະລິດຕະພັນທີ່ຈໍາເປັນພື້ນ ຖານເປັນສ່ວນໃຫຍ່ ແລະ ອາດຖືກເອີ້ນວ່າ ຄ່າທໍານຽມນໍາເຂົ້າທີ່ປ່ຽນແປງໄດ້.

***ຕົວຢ່າງ:*** *ລາຄາເປົ້າໝາຍຂອງເມັດພັນພືດແມ່ນ 700 ໂດລາສະຫະລັດຕໍ່ໂຕນ; ແຕ່ໃນເມື່ອລາຄາຂອງໂລກຢູ່ທີ່ 500 ໂດລາສະຫະລັດ, ຈະເຮັດໃຫ້ມີການເກັບພາສີ 200 ໂດລາສະຫະລັດ. ຖ້າຫາກລາຄາຂອງໂລກປ່ຽນເປັນ 600 ໂດລາສະຫະລັດ, ມັນຈະປັບເປັນ 100 ໂດລາ.*

### F32 ສ່ວນປະກອບທີ່ປ່ຽນແປງໄດ້

ອັດຕາອາກອນ ຫຼື ຄ່າທໍານຽມ ທີ່ລວມມີອັດຕາຂອງສ່ວນປະກອບຕາມມູນຄ່າ ແລະ ສ່ວນປະກອບທີ່ປ່ຽນແປງໄດ້: ຄ່າທໍານຽມດັ່ງກ່າວ ຖືກນໍາໃຊ້ກັບຜະລິດຕະພັນທີ່ປຸງແຕ່ງເປັນສ່ວນໃຫຍ່ ເຊິ່ງສ່ວນປະກອບທີ່ສາມາດປ່ຽນແປງໄດ້ຖືກນໍາໃຊ້ ກັບຜະລິດຕະພັນທີ່ຈໍາເປັນພື້ນຖານ ຫຼື ສ່ວນປະສົມ ທີ່ລວມເຂົ້າໃນຜະລິດຕະພັນຂັ້ນສຸດທ້າຍ. ເຊິ່ງອາດຖືກເອີ້ນວ່າ ສ່ວນປະກອບຊົດເຊີຍ.

***ຕົວຢ່າງ:*** *ອັດຕາພາສີສໍາລັບຂະໜົມຫວານຜະລິດຈາກນໍ້າຕານ ແມ່ນກໍານົດເປັນ "ສ່ວນປະກອບຂອງນໍ້າຕານ 25% ບວກກັບ ລາຄາຂອງນໍ້າຕານທີ່ບັນຈຸ 25 ໂດລາສະຫະລັດຕໍ່ກິໂລ ລົບອອກລາຄານໍ້າຕານຕໍ່ກິໂລ".*

### F39 ການເກັບຄ່າທໍານຽມທີ່ປ່ຽນແປງໄດ້, ທີ່ບໍ່ໄດ້ລະບຸໄວ້ຢູ່ບ່ອນໃດ

## F4 ການເກັບຄ່າພາສີເພີ່ມເຕີມ

ພາສີເພີ່ມເຕີມສະເພາະທີ່ເກັບຕໍ່ຜະລິດຕະພັນນໍາເຂົ້າຢ່າງດຽວ ນອກເໜືອຈາກອັດຕາ

[6] ມາດຕະການເຫຼົ່ານີ້ ຖືກເກືອດຫ້າມໂດຍສັນຍາ ວ່າດ້ວຍສິນຄ້າກະສິກໍາຂອງອົງການການຄ້າໂລກ, ມາດຕາ 4.

ພາສີເພື່ອເພີ່ມລາຍຮັບງົບປະມານ ຫຼື ເພື່ອປົກປ້ອງອຸດສາຫະກຳພາຍໃນ.

***ຕົວຢ່າງ:*** *ການເກັບພາສີເພີ່ມເຕີມ, ອາກອນເພີ່ມເຕີມ ຫຼື ຄ່າທຳນຽມເພີ່ມເຕີມ.*

## F5 ພາສີຕາມລະດູການ

ພາສີທີ່ນຳໃຊ້ໃນໄລຍະເວລາແນ່ນອນໃດໜຶ່ງຂອງປີ, ໂດຍປົກກະຕິແມ່ນກ່ຽວຂ້ອງກັບຜະລິດຕະພັນກະສິກຳ.

***ຕົວຢ່າງ:*** *ການນຳເຂົ້າໝາກສາລີ້ສົດບັນຈຸຫີບຫໍ່ ແຕ່ວັນທີ 1 ສິງຫາ ເຖິງ 31 ທັນວາ ອາດຈະບໍ່ໄດ້ເສຍພາສີ, ສ່ວນການນຳເຂົ້າໃນເດືອນອື່ນ ແມ່ນຕ້ອງໄດ້ເສຍພາສີຕາມລະດູການ.*

## F6 ການເກັບອາກອນ ແລະ ຄ່າທຳນຽມເພີ່ມເຕີມ ທີ່ກ່ຽວຂ້ອງກັບການບໍລິການໂດຍລັດຖະບານ

ການເກັບຄ່າທຳນຽມເພີ່ມເຕີມ, ເຊິ່ງຖືກເກັບຕໍ່ສິນຄ້ານຳເຂົ້າ ນອກເໜືອຈາກພາສີ ແລະ

ຄ່າທຳນຽມເພີ່ມເຕີມຕ່າງໆ ເຊິ່ງບໍ່ມີຄວາມເທົ່າທຽມພາຍໃນ.[7] ລວມມີ:

**F61 ຄ່າທຳນຽມການກວດກາພາສີ, ຂັ້ນຕອນ ແລະ ການບໍລິການດ້ານພາສີ**

**F62 ຄ່າທຳນຽມການຈັດການ ຫຼື ການເກັບຮັກສາສິນຄ້າ**

**F63 ອາກອນເກັບຈາກທຸລະກຳການແລກປ່ຽນເງິນຕາຕ່າງປະເທດ**

**F64 ສະແຕັມອາກອນ**

**F65 ຄ່າທຳນຽມໃບອະນຸຍາດນຳເຂົ້າ**

**F66 ຄ່າທຳນຽມການບໍລິການຂອງກົງສຸນ**

**F67 ອາກອນດ້ານສະຖິຕິ**

**F68 ອາກອນ ກ່ຽວກັບສິ່ງອຳນວຍຄວາມສະດວກດ້ານການຂົນສົ່ງ**

**F69 ຄ່າທຳນຽມເພີ່ມເຕີມ, ທີ່ບໍ່ໄດ້ລະບຸໄວ້ຢູ່ບ່ອນໃດ**

[7] ຄວນເຂົ້າໃຈວ່າ ມາດຕາ VIII ຂອງສັນຍາ GATT ໄດ້ລະບຸວ່າ ຄ່າທຳນຽມ ແລະ ບໍລິການ ນອກເໜືອຈາກພາສີ ແລະ ອາກອນພາຍໃນ "ຕ້ອງຖືກຈຳກັດຈຳນວນຄ່າໃຊ້ຈ່າຍ ທີ່ສົມຄູ່ກັບການບໍລິການທີ່ລັດສະໜອງໃຫ້ ແລະ ຕ້ອງບໍ່ສະແດງເຖິງການປົກປ້ອງຜະລິດຕະພັນພາຍໃນໂດຍທາງອ້ອມ ຫຼື ການເກັບອາກອນການນຳເຂົ້າ ຫຼື ສົ່ງອອກ ສຳລັບຈຸດປະສົງເພື່ອເກັບລາຍຮັບງົບປະມານ".

## F7 ການເກັບອາກອນ ແລະ ຄ່າທຳນຽມພາຍໃນ ຕໍ່ການນຳເຂົ້າ

ອາກອນທີ່ເກັບຕໍ່ກັບການນຳເຂົ້າທີ່ມີຄວາມເທົ່າທຽມກັນພາຍໃນ.[8]

### F71 ອາກອນຊົມໃຊ້

ອາກອນທີ່ເກັບຈາກການຂາຍຜະລິດຕະພັນ ເຊິ່ງໂດຍທົ່ວໄປນຳໃຊ້ຕໍ່ທຸກຜະລິດຕະພັນ ຫຼື ຜະລິດຕະພັນສ່ວນໃຫຍ່.

***ຕົວຢ່າງ:*** *ອາກອນການຂາຍ, ອາກອນທຶນໝູນວຽນ (ຫຼື ອາກອນການຂາຍຫຼາຍຮູບແບບ), ອາກອນມູນຄ່າເພີ່ມ.*

### F72 ອາກອນຟຸມເຟືອຍ

ອາກອນທີ່ເກັບຕໍ່ປະເພດຜະລິດຕະພັນທີ່ຖືກເລືອກ, ໂດຍປົກກະຕິມີລັກສະນະຟຸມເຟືອຍ ຫຼື ບໍ່ມີຄວາມຈຳເປັນ. ອາກອນປະເພດນີ້ແມ່ນເກັບ ນອກເໜືອຈາກອາກອນການຂາຍທົ່ວໄປ.

***ຕົວຢ່າງ:*** *ອາກອນຊົມໃຊ້, ອາກອນຕໍ່ກັບການບໍລິໂພກເຫຼົ້າ ແລະ ຢາສູບ.*

### F73 ອາກອນ ແລະ ຄ່າທຳນຽມສຳລັບໝວດຜະລິດຕະພັນທີ່ກະທົບໄວ

ຄ່າທຳນຽມເຊິ່ງລວມມີຄ່າປ່ອຍທາດອາຍເສຍ, ອາກອນຜະລິດຕະພັນ (ກະທົບໄວ) ແລະ ຄ່າທຳນຽມບໍລິຫານ: ຄ່າທຳນຽມບໍລິຫານ ໝາຍເຖິງການຊົດເຊີຍຄ່າໃຊ້ຈ່າຍຂອງລະບົບຄວບຄຸມການບໍລິຫານ.

***ຕົວຢ່າງ:*** *ຄ່າທຳນຽມການປ່ອຍທາດອາຍເສຍກາກໂບນິກ ຕໍ່ກັບພາຫະນະ.*

### F79 ການເກັບອາກອນ ແລະ ຄ່າທຳນຽມພາຍໃນ ຕໍ່ການນຳເຂົ້າ, ທີ່ບໍ່ໄດ້ລະບຸໄວ້ຢູ່ບ່ອນໃດ

## F8 ມູນຄ່າພາສີທີ່ກຳນົດຕາມລະບຽບການ

ມູນຄ່າຂອງສິນຄ້າໄດ້ກຳນົດຕາມລະບຽບການສຳລັບຈຸດປະສົງຂອງການເກັບພາສີ ແລະ ຄ່າທຳນຽມຕ່າງໆ: ການປະຕິບັດດັ່ງກ່າວໄດ້ຖືກວາງອອກ ເພື່ອຈຸດປະສົງຫຼີກລ້ຽງການສໍ້ໂກງ ຫຼື ເພື່ອປົກປ້ອງອຸດສາຫະກຳພາຍໃນ. ມູນຄ່າແທ້ຈິງທີ່ກຳນົດໄວ້ ປ່ຽນຈາກພາສີຕາມມູນຄ່າ ເປັນພາສີສະເພາະ.

***ຕົວຢ່າງ:*** *ຄຳວ່າ "valeur mercurial" ໃນປະເທດທີ່ໃຊ້ພາສາຝລັ່ງ.*

## F9 ມາດຕະການຄວບຄຸມລາຄາ, ທີ່ບໍ່ໄດ້ລະບຸໄວ້ຢູ່ບ່ອນໃດ

# G ມາດຕະການທາງດ້ານການເງິນ

---

8 ມາດຕາ III ຂອງສັນຍາ GATT ອະນຸຍາດໃຫ້ອາກອນພາຍໃນຖືກນຳໃຊ້ກັບການນຳເຂົ້າ; ເຖິງຢ່າງໃດກໍ່ຕາມ, ອາກອນດັ່ງກ່າວນີ້ ບໍ່ຄວນສູງກວ່າທີ່ນຳໃຊ້ຕໍ່ຜະລິດຕະພັນພາຍໃນທີ່ຄ້າຍຄືກັນ.

ບັນດາມາດຕະການດ້ານການເງິນ ທີ່ມີຈຸດປະສົງເພື່ອວາງລະບຽບການຄຸ້ມຄອງການເຂົ້າເຖິງ ແລະ ມູນຄ່າຂອງເງິນຕາຕ່າງປະເທດສໍາລັບການນໍາເຂົ້າ ແລະ ກໍານົດເງື່ອນໄຂການຊໍາລະເງິນ. ມາດຕະການດັ່ງກ່າວ ອາດເພີ່ມມູນຄ່າການນໍາເຂົ້າໃນຮູບແບບດຽວກັນກັບມາດຕະການພາສີ.

## G1 ຂໍ້ຮຽກຮ້ອງໃຫ້ມີການຊໍາລະເງິນລ່ວງໜ້າ

ຂໍ້ຮຽກຮ້ອງໃຫ້ມີການຊໍາລະເງິນລ່ວງໜ້າ ທີ່ຕິດພັນກັບມູນຄ່າຂອງທຸລະກໍາການນໍາເຂົ້າ ແລະ/ຫຼື ອາກອນນໍາເຂົ້າຕ່າງໆທີ່ກ່ຽວຂ້ອງ: ການຊໍາລະເຫຼົ່ານີ້ ຖືກປະຕິບັດໃນເວລາມີການຍື່ນໃບຄໍາຮ້ອງ, ຫຼື ເມື່ອມີການອອກໃບອະນຸຍາດນໍາເຂົ້າ. ເຊິ່ງລວມມີ:

### G11 ການມັດຈໍາການນໍາເຂົ້າລ່ວງໜ້າ

ຂໍ້ຮຽກຮ້ອງ ທີ່ຜູ້ນໍາເຂົ້າຄວນມັດຈໍາເປີເຊັນຂອງມູນຄ່າທຸລະກໍາການນໍາເຂົ້າ ກ່ອນໄດ້ຮັບສິນຄ້າ: ບໍ່ມີດອກເບ້ຍຕໍ່ການມັດຈໍາ.

***ຕົວຢ່າງ:*** *ຕ້ອງຈ່າຍ 50% ຂອງມູນຄ່າທຸລະກໍາລ່ວງໜ້າ ສາມເດືອນ ກ່ອນທີ່ສິນຄ້າຈະມາຮອດດ່ານນໍາເຂົ້າ.*

### G12 ຂໍ້ຮຽກຮ້ອງຂອງເພດານເງິນສົດ

ຂໍ້ຮຽກຮ້ອງ ໃຫ້ມັດຈໍາມູນຄ່າທຸລະກໍາຈໍານວນທັງໝົດ ເປັນເງິນຕາຕ່າງປະເທດ, ຫຼື ສະເພາະສ່ວນໃດສ່ວນໜຶ່ງໃນທະນາຄານທຸລະກິດ ກ່ອນເປີດໜັງສືສິນເຊື່ອ (L/C).

***ຕົວຢ່າງ:*** *ຕ້ອງມັດຈໍາເງິນຈໍານວນ 100% ຂອງມູນຄ່າທຸລະກໍາ ຢູ່ທະນາຄານທຸລະກິດທີ່ກໍານົດໄວ້.*

### G13 ການຊໍາລະພາສີລ່ວງໜ້າ

ຂໍ້ຮຽກຮ້ອງ ໃຫ້ຈ່າຍພາສີທັງໝົດ ຫຼື ສ່ວນໃດສ່ວນໜຶ່ງລ່ວງໜ້າ: ບໍ່ມີດອກເບ້ຍຕໍ່ການຊໍາລະພາສີລ່ວງໜ້າ.

***ຕົວຢ່າງ:*** *ຕ້ອງຊໍາລະເງິນຈໍານວນ 100% ຂອງພາສີທີ່ຄາດໄວ້ລ່ວງໜ້າ ສາມເດືອນ ກ່ອນທີ່ສິນຄ້າຈະມາຮອດດ່ານນໍາເຂົ້າ.*

### G14 ການມັດຈໍາທີ່ສາມາດສົ່ງຄືນໄດ້ ສໍາລັບໝວດຜະລິດຕະພັນທີ່ກະທົບໄວ

ຂໍ້ຮຽກຮ້ອງ ໃຫ້ຈ່າຍຄ່າມັດຈໍາສະເພາະໃດໜຶ່ງ ເຊິ່ງຈະຖືກສົ່ງຄືນເມື່ອຜະລິດຕະພັນທີ່ໃຊ້ແລ້ວ ຫຼື ຕູ້ບັນຈຸສິນຄ້າດັ່ງກ່າວ ໄດ້ທັນມານໍາໃຊ້ລະບົບຈັດເກັບພາສີ.

***ຕົວຢ່າງ:*** *ຕ້ອງມັດຈໍາເງິນ 100 ໂດລາສະຫະລັດ ສໍາລັບຕູ້ເຢັນແຕ່ລະໜ່ວຍ, ເຊິ່ງຈະຖືກສົ່ງຄືນ ເມື່ອນໍາໄປສູ່ການຜະລິດຄືນຫຼັງຈາກໃຊ້ງານແລ້ວ.*

### G19 ຂໍ້ຮຽກຮ້ອງໃຫ້ມີການຊໍາລະເງິນລ່ວງໜ້າ, ທີ່ບໍ່ໄດ້ລະບຸໄວ້ຢູ່ບ່ອນໃດ

## G2 ອັດຕາແລກປ່ຽນຫຼາຍຮູບແບບ

ອັດຕາແລກປ່ຽນຫຼາຍຮູບແບບສໍາລັບການນໍາເຂົ້າ, ຂຶ້ນກັບໝວດສິນຄ້າ: ໂດຍປົກກະຕິ, ອັດຕາແລກປ່ຽນທາງການ ຖືກຮັກສາໄວ້ສໍາລັບສິນຄ້າທີ່ມີຄວາມຈໍາເປັນ, ໃນຂະນະທີ່ສິນຄ້າອື່ນຕ້ອງຖືກຊໍາລະໃນອັດຕາຊື້ຂາຍ ຫຼື ໂດຍການຊື້ເງິນຕາຕ່າງປະເທດຜ່ານການປະມູນເປັນຄັ້ງຄາວ.[9]

***ຕົວຢ່າງ:*** *ມີພຽງການຊໍາລະເງິນສໍາລັບການນໍາເຂົ້າອາຫານເດັກນ້ອຍເກີດໃໝ່ ແລະ ອາຫານຫຼັກ ອາດຖືກປະຕິບັດໃນອັດຕາແລກປ່ຽນທາງການ.*

## G3 ລະບຽບການ ກ່ຽວກັບການກໍານົດເງິນຕາຕ່າງປະເທດທີ່ເປັນທາງການ

### G31 ການເກືອດຫ້າມການກໍານົດເງິນຕາຕ່າງປະເທດ

ບໍ່ມີການກໍານົດເງິນຕາຕ່າງປະເທດທີ່ເປັນທາງການ ເພື່ອຈ່າຍສໍາລັບການນໍາເຂົ້າ.

***ຕົວຢ່າງ:*** *ເງິນຕາຕ່າງປະເທດບໍ່ໄດ້ຖືກກໍານົດ ສໍາລັບການນໍາເຂົ້າສິນຄ້າຟຸ່ມເຟືອຍເຊັ່ນ: ຍານພາຫະນະ, ຊຸດໂທລະທັດ, ເຄື່ອງປະດັບ ແລະ ອື່ນໆ.*

### G32 ການອະນຸຍາດຂອງທະນາຄານ

ຂໍ້ຮຽກຮ້ອງ ຕ້ອງໄດ້ຮັບການອະນຸຍາດນໍາເຂົ້າແບບພິເສດຈາກທະນາຄານກາງ.

***ຕົວຢ່າງ:*** *ສໍາລັບການນໍາເຂົ້າຍານພາຫະນະ, ຕ້ອງໄດ້ຮັບການອະນຸຍາດຈາກທະນາຄານກາງ ນອກເໜືອຈາກໃບອະນຸຍາດນໍາເຂົ້າ.*

### G33 ການອະນຸຍາດ ຕິດພັນກັບເງິນຕາຕ່າງປະເທດທີ່ບໍ່ເປັນທາງການ

ໃບອະນຸຍາດຈະອອກໃຫ້ ກໍ່ຕໍ່ເມື່ອເງິນຕາຕ່າງປະເທດທີ່ບໍ່ເປັນທາງການ ຖືກນໍາໃຊ້ສໍາລັບການຊໍາລະການນໍາເຂົ້າ.

#### G331 ເງິນຕາຕ່າງປະເທດພາຍນອກ

ໃບອະນຸຍາດຈະອອກໃຫ້ ກໍ່ຕໍ່ເມື່ອການນໍາເຂົ້າຕິດພັນກັບໂຄງການຊ່ວຍເຫຼືອດ້ານເຕັກນິກ ແລະ ແຫຼ່ງອື່ນຂອງເງິນຕາຕ່າງປະເທດ.

***ຕົວຢ່າງ:*** *ການນໍາເຂົ້າວັດສະດຸກໍ່ສ້າງຈະໄດ້ຮັບອະນຸຍາດ ກໍ່ຕໍ່ເມື່ອການຊໍາລະເງິນ ຖືກປະຕິບັດຜ່ານກອງທຶນຊ່ວຍເຫຼືອການລົງທຶນໂດຍກົງຂອງຕ່າງປະເທດ.*

#### G332 ເງິນຕາຕ່າງປະເທດດ້ວຍຜູ້ນໍາເຂົ້າເອງ

---

9 ການນໍາໃຊ້ອັດຕາແລກປ່ຽນຫຼາຍຮູບແບບ ແມ່ນຖືກເກືອດຫ້າມຢ່າງເປັນທາງການໂດຍສັນຍາ GATT 1994.

ໃບອະນຸຍາດຈະອອກໃຫ້ ກໍ່ຕໍ່ເມື່ອຜູ້ນຳເຂົ້າຖືເງິນຕາຕ່າງປະເທດໃນທະນາຄານຕ່າງປະເທດ.

***ຕົວຢ່າງ:*** *ການນຳເຂົ້າວັດຖຸດິບຕັດຫຍິບຈະໄດ້ຮັບອະນຸຍາດ ກໍ່ຕໍ່ເມື່ອຜູ້ນຳເຂົ້າສາມາດຈ່າຍດ້ວຍເງິນຕາຕ່າງປະເທດໃຫ້ຜູ້ສົ່ງອອກໂດຍກົງ ທີ່ກົດຈະກຳການສົ່ງອອກໄດ້ຮັບອະນຸຍາດໃນຕ່າງປະເທດ.*

#### G339 ການອະນຸຍາດ ຕິດພັນກັບເງິນຕາຕ່າງປະເທດທີ່ບໍ່ເປັນທາງການ, ທີ່ບໍ່ໄດ້ລະບຸໄວ້ຢູ່ບ່ອນໃດ

### G39 ລະບຽບການ ກ່ຽວກັບກຳນົດການແລກປ່ຽນເງິນຕາຕ່າງປະເທດທີ່ເປັນທາງການ, ທີ່ບໍ່ໄດ້ລະບຸໄວ້ຢູ່ບ່ອນໃດ

## G4 ລະບຽບການຕິດພັນກັບເງື່ອນໄຂຂອງການຊຳລະການນຳເຂົ້າ

ບັນດາລະບຽບການຕິດພັນກັບເງື່ອນໄຂຕ່າງໆຂອງການຊຳລະການນຳເຂົ້າ ແລະ ການໄດ້ຮັບອະນຸຍາດ ແລະ ການນຳໃຊ້ສິນເຊື່ອ (ຕ່າງປະເທດ ຫຼື ພາຍໃນ) ເພື່ອຊຳລະການນຳເຂົ້າ.

***ຕົວຢ່າງ:*** *ການຊຳລະສິນຄ້າລ່ວງໜ້າ ຕ້ອງບໍ່ໃຫ້ກາຍ 50% ຂອງມູນຄ່າທຸລະກຳ ກ່ອນທີ່ສິນຄ້າຈະມາຮອດດ່ານນຳເຂົ້າ.*

## G9 ມາດຕະການດ້ານການເງິນ, ທີ່ບໍ່ໄດ້ລະບຸໄວ້ຢູ່ບ່ອນໃດ

# H ມາດຕະການທີ່ສົ່ງຜົນກະທົບຕໍ່ການແຂ່ງຂັນ

ບັນດາມາດຕະການ ເພື່ອໃຫ້ສິດຜູກຂາດ ຫຼື ຄວາມພໍໃຈພິເສດ ຫຼື ບູລິມະສິດ ແກ່ໜຶ່ງ ຫຼື ຫຼາຍກຸ່ມຜູ້ປະກອບການດ້ານເສດຖະກິດທີ່ຈຳກັດໃດໜຶ່ງ.

## H1 ລັດວິສາຫະກິດການຄ້າ, ສຳລັບການນຳເຂົ້າ; ຊ່ອງທາງການນຳເຂົ້າທີ່ຄັດເລືອກອື່ນໆ

### H11 ລັດວິສາຫະກິດການຄ້າ, ສຳລັບການນຳເຂົ້າ

ບັນດາວິສາຫະກິດ (ບໍ່ວ່າຈະແມ່ນລັດເປັນເຈົ້າຂອງ ຫຼື ຄວບຄຸມ) ທີ່ມີສິດ ແລະ ບູລິມະສິດພິເສດ ທີ່ບໍ່ສາມາດໃຫ້ແກ່ນິຕິບຸກຄົນອື່ນ, ເຊິ່ງສົ່ງຜົນກະທົບຕໍ່ລະດັບການຈັດຊື້ ແລະ ການຂາຍຂອງບັນດາວິສາຫະກິດ ຫຼື ທິດທາງຂອງການນຳເຂົ້າຜະລິດຕະພັນສະເພາະໃດໜຶ່ງ (ເບິ່ງຂໍ້ P21).

***ຕົວຢ່າງ:*** *ຄະນະຜູ້ບໍລິຫານການຕະຫຼາດທີ່ມີສິດຂາດຕົວຕາມກົດໝາຍ ເພື່ອຄວບຄຸມການນຳເຂົ້າເມັດພືດສະເພາະໃດໜຶ່ງ, ອົງການຈັດຕັ້ງທີ່ມີສິດຂາດຕົວໃນການ*

*ຈຳໜ່າຍນ້ຳມັນເຊື້ອໄຟ, ຕົວແທນນຳເຂົ້າພຽງຜູ້ດຽວ ຫຼື ການນຳເຂົ້າທີ່ຖືກຮັກສາໄວ້ສຳລັບຜູ້ນຳເຂົ້າສະເພາະ ທີ່ກ່ຽວຂ້ອງກັບໝວດລາຍການສິນຄ້າສະເພາະໃດໜຶ່ງ.*

**H19 ຊ່ອງທາງການນຳເຂົ້າທີ່ຄັດເລືອກອື່ນໆ, ທີ່ບໍ່ໄດ້ລະບຸໄວ້ຢູ່ບ່ອນໃດ**

## H2 ການນຳໃຊ້ການບໍລິການພາຍໃນແບບບັງຄັບ

**H21 ປະກັນໄພພາຍໃນແບບບັງຄັບ**

ຂໍ້ຮຽກຮ້ອງ ທີ່ການນຳເຂົ້າຕ້ອງຖືກຮັບປະກັນໂດຍບໍລິສັດປະກັນໄພພາຍໃນ.

**H22 ການຂົນສົ່ງພາຍໃນແບບບັງຄັບ**

ຂໍ້ຮຽກຮ້ອງ ເຊິ່ງການນຳເຂົ້າຕ້ອງຖືກປະຕິບັດໂດຍບໍລິສັດຂົນສົ່ງພາຍໃນ.

**H29 ການນຳໃຊ້ການບໍລິການພາຍໃນແບບບັງຄັບ, ທີ່ບໍ່ໄດ້ລະບຸໄວ້ຢູ່ບ່ອນໃດ**

## H9 ມາດຕະການທີ່ສົ່ງຜົນກະທົບຕໍ່ການແຂ່ງຂັນ, ທີ່ບໍ່ໄດ້ລະບຸໄວ້ຢູ່ບ່ອນໃດ

# I ມາດຕະການທາງດ້ານການລົງທຶນ ທີ່ຕິດພັນກັບການຄ້າ[10, 11]

## I1 ມາດຕະການດ້ານອົງປະກອບພາຍໃນ

ຂໍ້ຮຽກຮ້ອງ ໃຫ້ຊື້ ຫຼື ນຳໃຊ້ລະດັບ ຫຼື ປະເພດຕ່ຳສຸດຂອງຜະລິດຕະພັນໃດໜຶ່ງທີ່ຜະລິດ ຫຼື ມີແຫຼ່ງທີ່ມາຈາກພາຍໃນ, ຫຼື ການຈຳກັດການຈັດຊື້ ຫຼື ການນຳໃຊ້ຜະລິດຕະພັນນຳເຂົ້າ ອີງຕາມປະລິມານ ຫຼື ມູນຄ່າຂອງການສົ່ງອອກຜະລິດຕະພັນພາຍໃນ.

***ຕົວຢ່າງ:*** *ໃນການຜະລິດຍານພາຫະນະ, ສ່ວນປະກອບທີ່ຖືກຜະລິດພາຍໃນຕ້ອງມີຢ່າງໜ້ອຍ 50% ຂອງມູນຄ່າຂອງສ່ວນປະກອບທີ່ຖືກນຳໃຊ້ທັງໝົດ.*

## I2 ມາດຕະການການດຸນການຄ້າ

ການຈຳກັດ ກ່ຽວກັບການນຳເຂົ້າຜະລິດຕະພັນ ທີ່ຖືກນຳໃຊ້ເຂົ້າ ຫຼື ກ່ຽວຂ້ອງກັບການ

[10] ຂຶ້ນກັບການຍົກເວັ້ນສະເພາະໃດໜຶ່ງ, ບັນດາມາດຕະການທີ່ລະບຸໄວ້ໃນຂໍ້ I1-I2 ທີ່ບໍ່ສອດຄ່ອງກັບສັນຍາ TRIMs (ຕາມລຳດັບ, ບັນດາພັນທະຂອງການປະຕິບັດພາຍໃນຊາດ ພາຍໃຕ້ມາດຕາ III ແລະ ການລົບລ້າງທົ່ວໄປຂອງການຈຳກັດປະລິມານພາຍໃຕ້ມາດຕາ XI ຂອງສັນຍາ GATT 1994). ເບິ່ງບັນຊີທີ່ສະແດງໃນເອກະສານຊ້ອນທ້າຍຂອງສັນຍາ TRIMs.

[11] ມາດຕະການດ້ານການລົງທຶນທີ່ຕິດພັນກັບການຄ້າ ໃນຮູບແບບຂອງການຈຳກັດການສົ່ງອອກ ຖືກລວມເຂົ້າໃນຂໍ້ P1.

ຜະລິດພາຍໃນ, ລວມມີສິ່ງທີ່ກ່ຽວຂ້ອງກັບຈຳນວນຂອງສິນຄ້າພາຍໃນທີ່ສົ່ງອອກ; ຫຼື ການຈຳກັດ ກ່ຽວກັບການເຂົ້າເຖິງເງິນຕາຕ່າງປະເທດ ທີ່ຖືກນຳໃຊ້ສຳລັບການນຳເຂົ້າດັ່ງກ່າວ ຂຶ້ນກັບການໄຫຼເຂົ້າມາຂອງເງິນຕາຕ່າງປະເທດ ທີ່ມາຈາກວິສາຫະກິດທີ່ກ່ຽວຂ້ອງ.

***ຕົວຢ່າງ:*** *ບໍລິສັດອາດນຳເຂົ້າວັດຖຸດິບ ແລະ ຜະລິດຕະພັນອື່ນ ໄດ້ເຖິງ 80% ຂອງລາຍຮັບການສົ່ງອອກຂອງປີຜ່ານມາ.*

### I9 ມາດຕະການທາງດ້ານການລົງທຶນ ທີ່ຕິດພັນກັບການຄ້າ, ທີ່ບໍ່ໄດ້ລະບຸໄວ້ຢູ່ບ່ອນໃດ

## J ການຈຳກັດການຈຳໜ່າຍ

ການຈຳໜ່າຍສິນຄ້າພາຍໃນປະເທດຜູ້ນຳເຂົ້າອາດຖືກຈຳກັດ. ມັນອາດຖືກຄວບຄຸມໂດຍການອອກໃບອະນຸຍາດເພີ່ມເຕີມ ຫຼື ບັນດາຂໍ້ຮຽກຮ້ອງໃຫ້ມີການຢັ້ງຢືນ.[12]

### J1 ການຈຳກັດດ້ານພູມີສາດ

ການຈຳກັດເພື່ອຈຳກັດການຂາຍສິນຄ້າ ໃນພື້ນທີ່ສະເພາະໃດໜຶ່ງໃນປະເທດຜູ້ນຳເຂົ້າ.

***ຕົວຢ່າງ:*** *ການນຳເຂົ້າເຄື່ອງດື່ມ ອາດຖືກຂາຍໃນເມືອງຕ່າງໆ ທີ່ມີສິ່ງອຳນວຍຄວາມສະດວກເທົ່ານັ້ນ ເພື່ອເອົາຕູ້ບັນຈຸສິນຄ້າມາໃຊ້ຄືນ.*

### J2 ການຈຳກັດຜູ້ຂາຍຕໍ່

ການຈຳກັດຜູ້ຂາຍຍ່ອຍທີ່ໄດ້ກຳນົດໄວ້ ເພື່ອຈຳກັດການຂາຍຜະລິດຕະພັນນຳເຂົ້າ.

***ຕົວຢ່າງ:*** *ຜູ້ສົ່ງອອກຍານພາຫະນະ ຕ້ອງສ້າງຕັ້ງຈຸດຂາຍຍ່ອຍຂອງຕົນເອງ, ຕົວແທນຈຳໜ່າຍລົດທີ່ມີຢູ່ໃນປະເທດປາຍທາງ ທີ່ເປັນຂອງຜູ້ຜະລິດລົດຢ່າງຜູກຂາດ ໃນປະເທດນັ້ນ.*

## K ການຈຳກັດດ້ານການບໍລິການຫຼັງການຂາຍ

ບັນດາມາດຕະການທີ່ຈຳກັດຜູ້ຜະລິດໃນການສົ່ງອອກສິນຄ້າ ໃຫ້ສະໜອງການບໍລິການຫຼັງການຂາຍໃນປະເທດຜູ້ນຳເຂົ້າ.

***ຕົວຢ່າງ:*** *ການບໍລິການຫຼັງການຂາຍຂອງຊຸດໂທລະທັດສົ່ງອອກ ຕ້ອງຖືກສະໜອງໂດຍບໍລິສັດໃຫ້ບໍລິການພາຍໃນຂອງປະເທດຜູ້ນຳເຂົ້າ.*

## L ການອຸດໜູນ (ບໍ່ລວມເອົາການອຸດໜູນການສົ່ງອອກພາຍໃຕ້ຂໍ້ P7)

ການປະກອບສ່ວນດ້ານການເງິນໂດຍລັດຖະບານ ຫຼື ອົງການຈັດຕັ້ງຂອງລັດ, ຫຼື ຜ່ານການມອບ

[12] ບັນດາຂໍ້ຈຳກັດເຫຼົ່ານີ້ ແມ່ນຕິດພັນຢ່າງໃກ້ຊິດກັບບັນດາລະບຽບການ ຂອງການບໍລິການການຈຳໜ່າຍ.

ໝາຍຂອງລັດຖະບານ ຫຼື ຄຳແນະນຳຂອງພາກເອກະຊົນ (ການໂອນທຶນໂດຍກົງ ຫຼື ຢ່າງອື່ນທີ່ເປັນໄປໄດ້: ຕົວຢ່າງ: ເງິນຊ່ວຍເຫຼືອ, ການກູ້ຢືມ, ການເພີ່ມຄວາມສະເໝີພາບ, ການຮັບປະກັນ, ລາຍຮັບຂອງລັດຖະບານທີ່ຄາດໄວ້; ເງື່ອນໄຂຂອງສິນຄ້າ ຫຼື ບໍລິການ ຫຼື ການຈັດຊື້ສິນຄ້າ; ການຊຳລະເງິນພາຍໃຕ້ກົນໄກການໃຫ້ທຶນ), ຫຼື ການສະໜັບສະໜູນລາຍຮັບ ຫຼື ລາຄາ, ເຊິ່ງໄດ້ປຶກສາຫາລືຜົນປະໂຫຍດ ແລະ ເປັນແບບສະເພາະ (ໃຫ້ແກ່ວິສາຫະກິດ ຫຼື ອຸດສາຫະກຳ ຫຼື ກຸ່ມ, ຫຼື ບໍລິສັດຈຳກັດໃນຂົງເຂດທາງພູມີສາດທີ່ກຳນົດໄວ້).

***ຕົວຢ່າງ:*** *ລັດຖະບານສະໜອງສານເຄມີໃຫ້ແກ່ຜູ້ຜະລິດ ເປັນເງິນສົດຊ່ວຍເຫຼືອໜຶ່ງຄັ້ງ ເພື່ອປ່ຽນແທນອຸປະກອນການຜະລິດທີ່ເກົ່າ.*

***ສິ່ງທີ່ຄວນເອົາໃຈໃສ່: ໝວດນີ້ແມ່ນຈະຖືກແຍກເປັນໝວດຍ່ອຍອີກ ຫຼັງຈາກການສຶກສາເພີ່ມເຕີມຕໍ່ກັບບັນຫານີ້.***

## M ການຈຳກັດການຈັດຊື້ຈັດຈ້າງຂອງລັດຖະບານ

ບັນດາມາດຕະການຄວບຄຸມການຈັດຊື້ສິນຄ້າ ໂດຍອົງການຈັດຕັ້ງຂອງລັດຖະບານ, ໂດຍທົ່ວໄປແມ່ນການໃຫ້ສິດທິພິເສດແກ່ຜູ້ສະໜອງພາຍໃນປະເທດ.

***ຕົວຢ່າງ:*** *ຫ້ອງການລັດຖະບານກຳນົດຂໍ້ຮຽກຮ້ອງໃຫ້ມີການຈັດຈ້າງຜູ້ສະໜອງອຸປະກອນເຄື່ອງໃຊ້ຫ້ອງການພາຍໃນ, ເຖິງວ່າລາຄາພາຍໃນຈະສູງກວ່າລາຄາຂອງຜູ້ສະໜອງຄືກັນທີ່ຢູ່ຕ່າງປະເທດ.*

## N ຊັບສິນທາງປັນຍາ

ບັນດາມາດຕະການທີ່ຕິດພັນກັບສິດຕໍ່ຊັບສິນທາງປັນຍາຕໍ່ກັບການຄ້າ: ນິຕິກຳດ້ານຊັບສິນທາງປັນຍາທີ່ກວມເອົາສິດທິບັດ, ເຄື່ອງໝາຍການຄ້າ, ການອອກແບບອຸດສາຫະກຳ, ການອອກແບບແຜນຜັງຂອງວົງຈອນແບບລວມກັນ, ລິຂະສິດ, ສິ່ງບົ່ງຊີ້ດ້ານພູມີສາດ ແລະ ຄວາມລັບທາງການຄ້າ.

***ຕົວຢ່າງ:*** *ເຄື່ອງນຸ່ງຮົ່ມທີ່ບໍ່ໄດ້ຮັບອະນຸຍາດນຳໃຊ້ເຄື່ອງໝາຍການຄ້າ ແມ່ນຖືກຂາຍໃນລາຄາຕໍ່າກວ່າລາຄາສິນຄ້າຂອງແທ້ຫຼາຍ.*

## O ລະບຽບການແຫຼ່ງກຳເນີດສິນຄ້າ

ບັນດາລະບຽບການແຫຼ່ງກຳເນີດສິນຄ້າ ລວມມີກົດໝາຍ, ລະບຽບການ ແລະ ມະຕິດ້ານການບໍລິຫານທົ່ວໄປທີ່ກຳນົດໃຊ້ໂດຍລັດຖະບານຂອງປະເທດຜູ້ນຳເຂົ້າ ເພື່ອກຳນົດປະເທດແຫຼ່ງກຳເນີດຂອງສິນຄ້າ. ລະບຽບການແຫຼ່ງກຳເນີດສິນຄ້າ ແມ່ນມີຄວາມສຳຄັນໃນການຈັດຕັ້ງປະຕິບັດເຄື່ອງມືດ້ານນະໂຍບາຍການຄ້າເຊັ່ນ: ມາດຕະການຕ້ານການທຸ້ມຕະຫຼາດ ແລະ ການຕອບໂຕ້ການອຸດໜູນດ້ວຍການໃຊ້ພາສີ, ການໃຊ້ເຄື່ອງໝາຍແຫຼ່ງກຳເນີດ ແລະ ມາດຕະ

ການປົກປ້ອງ.

***ຕົວຢ່າງ:*** *ຜະລິດຕະພັນເຄື່ອງຈັກທີ່ຜະລິດໃນປະເທດໃດໜຶ່ງ ແມ່ນຍາກທີ່ຈະປະຕິບັດຕາມລະບຽບການແຫຼ່ງກຳເນີດສິນຄ້າ ເພື່ອໄດ້ຮັບສິດທິພິເສດສຳລັບການຫຼຸດຜ່ອນອັດຕາພາສີຂອງປະເທດຜູ້ນຳເຂົ້າ, ເນື່ອງຈາກສິ້ນສ່ວນ ແລະ ວັດຖຸດິບແມ່ນມີແຫຼ່ງກຳເນີດໃນປະເທດອື່ນ.*

## P ມາດຕະການທີ່ຕິດພັນກັບການສົ່ງອອກ

ບັນດາມາດຕະການທີ່ຕິດພັນກັບການສົ່ງອອກ ຖືກນຳໃຊ້ໂດຍລັດຖະບານຂອງປະເທດຜູ້ສົ່ງອອກ ຕໍ່ກັບສິນຄ້າສົ່ງອອກ.

### P1 ໃບອະນຸຍາດສົ່ງອອກ, -ໂກຕ້າ, -ການເກືອດຫ້າມ ແລະ ການຈຳກັດປະລິມານອື່ນໆ[13]

ການຈຳກັດປະລິມານຂອງສິນຄ້າສົ່ງອອກ ໄປປະເທດສະເພາະໃດໜຶ່ງ ຫຼື ບັນດາປະເທດ ໂດຍລັດຖະບານຂອງປະເທດຜູ້ສົ່ງອອກ ດ້ວຍເຫດຜົນເຊັ່ນ: ການຂາດແຄນສິນຄ້າໃນຕະຫຼາດພາຍໃນ, ການວາງລະບຽບການດ້ານລາຄາພາຍໃນ, ການຫຼີກລ້ຽງມາດຕະການຕ້ານການທຸ້ມຕະຫຼາດ ຫຼື ດ້ວຍເຫດຜົນດ້ານການເມືອງ.[14]

#### P11 ການເກືອດຫ້າມການສົ່ງອອກ

ການເກືອດຫ້າມການສົ່ງອອກສິນຄ້າສະເພາະໃດໜຶ່ງ.

***ຕົວຢ່າງ:*** *ການສົ່ງອອກສາລີແມ່ນຖືກເກືອດຫ້າມ ເພາະການຂາດແຄນໃນການຊົມໃຊ້ພາຍໃນ.*

#### P12 ໂກຕ້າສົ່ງອອກ

ໂກຕ້າທີ່ຈຳກັດມູນຄ່າ ຫຼື ປະລິມານຂອງການສົ່ງອອກ.

***ຕົວຢ່າງ:*** *ໂກຕ້າການສົ່ງອອກຊີ້ນງົວ ໄດ້ຖືກກຳນົດຂຶ້ນເພື່ອຮັບປະກັນການສະໜອງໃຫ້ຕະຫຼາດພາຍໃນຢ່າງພຽງພໍ.*

#### P13 ການອອກໃບອະນຸຍາດ- ຫຼື ຂໍ້ຮຽກຮ້ອງໃຫ້ມີການອະນຸຍາດສົ່ງອອກ

ຂໍ້ຮຽກຮ້ອງ ທີ່ຕ້ອງໄດ້ຮັບໃບອະນຸຍາດ ຫຼື ການອະນຸຍາດຈາກລັດຖະບານຂອງປະ

---

[13] ບັນດາມາດຕະການດ້ານການລົງທຶນທີ່ຕິດພັນກັບການຄ້າ ໃນຮູບແບບຂອງການຈຳກັດການສົ່ງອອກ ແມ່ນຖືກລວມເຂົ້າໃນໝວດນີ້.

[14] ບັນດາມາດຕະການທັງໝົດເຫຼົ່ານີ້ ແມ່ນຖືກເກືອດຫ້າມເປັນທາງການໂດຍສັນຍາ GATT 1994, ແຕ່ອາດຈະຖືກນຳໃຊ້ພາຍໃຕ້ສະພາບການສະເພາະທີ່ລະບຸໄວ້ໃນມາດຕາ XI ຂອງສັນຍາ GATT 1994.

ເທດຜູ້ສົ່ງອອກເພື່ອສົ່ງອອກສິນຄ້າ.

***ຕົວຢ່າງ:*** *ການສົ່ງອອກແຮ່ເພັດ ແມ່ນຕ້ອງຂໍໃບອະນຸຍາດຈາກກະຊວງກ່ຽວຂ້ອງ.*

**P14 ຂໍ້ຮຽກຮ້ອງໃຫ້ມີການຈົດທະບຽນການສົ່ງອອກ**

ຂໍ້ຮຽກຮ້ອງໃຫ້ຈົດທະບຽນສິນຄ້າກ່ອນການສົ່ງອອກ (ຈຸດປະສົງເພື່ອການຕິດຕາມ).

***ຕົວຢ່າງ:*** *ຜະລິດຕະພັນຢາປົວພະຍາດ ຕ້ອງຖືກຈົດທະບຽນກ່ອນການສົ່ງອອກ.*

**P19 ການຈຳກັດປະລິມານການສົ່ງອອກ, ທີ່ບໍ່ໄດ້ລະບຸໄວ້ຢູ່ບ່ອນໃດ**

## P2 ວິສາຫະກິດການຄ້າຂອງລັດ, ສຳລັບການສົ່ງອອກ; ຊ່ອງທາງການສົ່ງອອກທີ່ຄັດເລືອກອື່ນໆ

**P21 ວິສາຫະກິດການຄ້າຂອງລັດ, ສຳລັບການສົ່ງອອກ**

ບັນດາວິສາຫະກິດ (ບໍ່ວ່າຈະແມ່ນລັດເປັນເຈົ້າຂອງ ຫຼື ຄວບຄຸມ) ທີ່ມີສິດ ແລະ ບູລິມະສິດພິເສດ ທີ່ບໍ່ສາມາດໃຫ້ແກ່ນິຕິບຸກຄົນອື່ນ, ເຊິ່ງສົ່ງຜົນກະທົບຕໍ່ລະດັບການຈັດຊື້ ແລະ ການຂາຍຂອງບັນດາວິສາຫະກິດ ຫຼື ທິດທາງຂອງການນຳເຂົ້າຜະລິດຕະພັນສະເພາະໃດໜຶ່ງ (ເບິ່ງຂໍ້ H1).

***ຕົວຢ່າງ:*** *ຄະນະຜູ້ບໍລິຫານທີ່ຜູກຂາດການສົ່ງອອກ ໃຊ້ປະໂຫຍດຂອງເງື່ອນໄຂການຂາຍສິນຄ້າໃນຕ່າງປະເທດ; ຄະນະຜູ້ບໍລິຫານການຕະຫຼາດ ສົ່ງເສີມການສົ່ງອອກ ໂດຍເປັນຕົວແທນຂອງຊາວນາຂະໜາດນ້ອຍທີ່ມີຈຳນວນຫຼາຍ.*

**P29 ຊ່ອງທາງການສົ່ງອອກທີ່ຄັດເລືອກອື່ນໆ, ທີ່ບໍ່ໄດ້ລະບຸໄວ້ຢູ່ບ່ອນໃດ**

## P3 ມາດຕະການຄວບຄຸມລາຄາການສົ່ງອອກ

ມາດຕະການທີ່ຖືກຈັດຕັ້ງປະຕິບັດ ເພື່ອຄວບຄຸມລາຄາຂອງສິນຄ້າສົ່ງອອກ.

***ຕົວຢ່າງ:*** *ລາຄາທີ່ແຕກຕ່າງກັນສຳລັບການສົ່ງອອກ ໄດ້ຖືກນຳໃຊ້ຈາກການຂາຍຜະລິດຕະພັນອັນດຽວກັນຢູ່ຕະຫຼາຍພາຍໃນ (ໂຄງສ້າງລາຄາແບບຄູ່).*

## P4 ມາດຕະການການສົ່ງອອກຕໍ່

ບັນດາມາດຕະການທີ່ຖືກນຳໃຊ້ ໂດຍລັດຖະບານຂອງປະເທດຜູ້ສົ່ງອອກຕໍ່ກັບສິນຄ້າສົ່ງອອກ ເຊິ່ງມີແຫຼ່ງກຳເນີດມາຈາກການນຳເຂົ້າຈາກຕ່າງປະເທດ.

***ຕົວຢ່າງ:*** *ການສົ່ງອອກເຫຼົ້າແວັງ ແລະ ເຫຼົ້າ ກັບຄືນໄປປະເທດຜູ້ຜະລິດ ແມ່ນຖືກເກືອດຫ້າມ. ການປະຕິບັດດັ່ງກ່າວ ເປັນທີ່ຮັບຮູ້ກັນດີໃນຮູບແບບການຄ້າຊາຍແດນ ເພື່ອຫຼີກລ້ຽງການເກັບອາກອນຊົມໃຊ້ພາຍໃນຢູ່ປະເທດຜູ້ຜະລິດ.*

## P5 ອາກອນ ແລະ ຄ່າທຳນຽມການສົ່ງອອກ

ອາກອນທີ່ເກັບກັບສິນຄ້າສົ່ງອອກ ໂດຍລັດຖະບານຂອງປະເທດຜູ້ສົ່ງອອກ: ອາກອນດັ່ງ

ກ່າວ ສາມາດຖືກກຳນົດໂດຍພື້ນຖານສະເພາະ ຫຼື ຕາມມູນຄ່າຂອງສິນຄ້າຕົວຈິງ.

***ຕົວຢ່າງ:*** *ພາສີສົ່ງອອກຕໍ່ກັບນ້ຳມັນດິບ ຖືກເກັບເພື່ອຈຸດປະສົງຂອງການເກັບລາຍຮັບ.*

## P6 ມາດຕະການດ້ານເຕັກນິກຕໍ່ການສົ່ງອອກ

ລະບຽບການສົ່ງອອກ ອີງໃສ່ເງື່ອນໄຂດ້ານເຕັກນິກສະເພາະຂອງສິນຄ້າ ແລະ ລະບົບການປະເມີນຄວາມສອດຄ່ອງເຊັ່ນ:

### P61 ຂໍ້ຮຽກຮ້ອງໃຫ້ມີການກວດກາ

ຄວບຄຸມຄຸນນະພາບ ຫຼື ຄຸນລັກສະນະອື່ນ ຂອງຜະລິດຕະພັນສຳລັບສົ່ງອອກ.

***ຕົວຢ່າງ:*** *ການສົ່ງອອກຜະລິດຕະພັນອາຫານທີ່ປຸງແຕ່ງແລ້ວ ຕ້ອງໄດ້ຮັບການກວດກາເງື່ອນໄຂດ້ານສຸຂານາໄມ.*

### P62 ການຢັ້ງຢືນທີ່ຮຽກຮ້ອງໂດຍປະເທດຜູ້ສົ່ງອອກ

ຂໍ້ຮຽກຮ້ອງໂດຍປະເທດຜູ້ສົ່ງອອກ ທີ່ຕ້ອງໄດ້ຮັບການຢັ້ງຢືນດ້ານສຸຂານາໄມ, ສຸຂານາໄມພືດ ຫຼື ການຢັ້ງຢືນອື່ນໆ ກ່ອນສິນຄ້າຈະຖືກສົ່ງອອກ.

***ຕົວຢ່າງ:*** *ການສົ່ງອອກສັດທີ່ມີຊີວິດ ຕ້ອງມີໃບຢັ້ງຢືນດ້ານສຸຂະພາບສະເພາະ.*

### P69 ມາດຕະການດ້ານເຕັກນິກຕໍ່ການສົ່ງອອກ, ທີ່ບໍ່ໄດ້ລະບຸໄວ້ຢູ່ບ່ອນໃດ

## P7 ການອຸດໜູນການສົ່ງອອກ

ການປະກອບສ່ວນດ້ານການເງິນໂດຍລັດຖະບານ ຫຼື ອົງການຈັດຕັ້ງຂອງລັດ, ຫຼື ຜ່ານການມອບໝາຍຂອງລັດຖະບານ ຫຼື ຄຳແນະນຳພາກເອກະຊົນ (ການໂອນທຶນໂດຍກົງ ຫຼື ຢ່າງອື່ນທີ່ເປັນໄປໄດ້: ຕົວຢ່າງ: ເງິນຊ່ວຍເຫຼືອ, ການກູ້ຢືມ, ການເພີ່ມຄວາມສະເໝີພາບ, ການຮັບ ປະກັນ, ລາຍຮັບຂອງລັດຖະບານທີ່ຄາດໄວ້; ເງື່ອນໄຂຂອງສິນຄ້າ ຫຼື ບໍລິການ ຫຼື ການຈັດຊື້ສິນຄ້າ; ການຊຳລະເງິນພາຍໃຕ້ກົນໄກການໃຫ້ທຶນ), ຫຼື ການສະໜັບສະໜູນລາຍຮັບ ຫຼື ລາຄາ, ເຊິ່ງໄດ້ປຶກສາຫາລືຜົນປະໂຫຍດ ແລະ ເປັນໄປໄດ້ດ້ານກົດໝາຍ ຫຼື ຕົວຈິງ ຂຶ້ນກັບການປະຕິບັດການສົ່ງອອກ (ບໍ່ວ່າຈະເປັນທັງໝົດ ຫຼື ໜຶ່ງໃນຫຼາຍໆເງື່ອນໄຂ), ລວມມີບັນດາມາດຕະການທີ່ສະແດງໃນເອກະສານຊ້ອນທ້າຍ I ຂອງສັນຍາວ່າດ້ວຍມາດຕະການອຸດໜູນ ແລະ ມາດຕະການຕອບໂຕ້ການອຸດໜຸນ ແລະ ມາດຕະການຕ່າງໆທີ່ອະທິບາຍໄວ້ໃນສັນຍາ ວ່າດ້ວຍກະສິກຳ.

***ຕົວຢ່າງ:*** *ຜູ້ຜະລິດທັງໝົດໃນປະເທດ A ແມ່ນໄດ້ຮັບການຍົກເວັ້ນອາກອນລາຍໄດ້ ຕໍ່ກັບຜົນກຳໄລຈາກການສົ່ງອອກຂອງຜູ້ຜະລິດດັ່ງກ່າວ.*

## P8 ສິນເຊື່ອການສົ່ງອອກ

## P9 ມາດຕະການສົ່ງອອກອື່ນໆ, ທີ່ບໍ່ໄດ້ລະບຸໄວ້ຢູ່ບ່ອນໃດ

# ກະຊວງອຸດສາຫະກຳ ແລະ ການຄ້າ

## ກົມການນຳເຂົ້າ ແລະ ສົ່ງອອກ

ໂທ: 021 454224, 021 412008

ແຟັກ: 021 454224

ເວັບໄຊທ໌: www.laotradeportal.gov.la

ສະໜັບສະໜູນໂດຍ:

2017